# ຄຳຖາມທີ່ຖືກຖາມເປັນປະຈຳ

## ການຈັດຕັ້ງປະຕິບັດ ລະບຽບການ ວ່າດ້ວຍ ສິນຄ້າ ທີ່ປາສະຈາກການທຳລາຍປ່າໄມ້ ຂອງສະຫະພາບເອີຣົບ

## ສາລະບານ


**ການຕິດຕາມ ແຫຼ່ງທີ່ມາຂອງສິນຄ້າ** .......... 7

(1) ເປັນຫັຍງ ແລະ ເປັນແນວໃດ ຜູ້ປະກອບການ ຈຶ່ງຕ້ອງເກັບຂໍ້ມູນ ກ່ຽວກັບ ຈຸດພິກັດ? .......... 7

(2) ຕ້ອງໄດ້ຕິດຕາມແຫຼ່ງທີ່ມາ ຂອງທຸກໆສິນຄ້າ (ທີ່ນຳເຂົ້າ, ສົ່ງອອກ, ຄ້າຂາຍ)ບໍ່? .......... 8

(3) ຈະເຮັດແນວໃດ ສຳລັບ ການຄ້າຂາຍ ສິນຄ້າ ທີ່ມີປະລິມານຫຼວງຫຼາຍ ຫຼື ຜະລິດຕະພັນ ທີ່ມີສ່ວນປະສົມ? .... 8

(4) ອະນຸຍາດ ໃຫ້ສົມທຽບ ຄວາມສົມດຸນ ຂອງບໍລິມາດ ຂອງສິນຄ້າ ໃນຕ່ອງໂສ້ການສະໜອງສິນຄ້າ ໄດ້ບໍ່? ..... 8

(5) ຖ້າສິນຄ້າສ່ວນໃດສ່ວນໜຶ່ງ ບໍ່ຖືກຕ້ອງ ຕາມລະບຽບການ ຈະເປັນແນວໃດ? .......... 9

(6) ຕອນດິນ ມີຄວາມໝາຍແນວໃດ? .......... 9

(7) ມີຫຼັກການຫັຍງແດ່ ສຳລັບທີ່ດິນ ທີ່ບໍ່ແມ່ນ ອະສັງຫາລິມະຊັບ? .......... 9

(8) ມີຫັຍງແດ່ ຖ້າບໍ່ມີ ການຂຶ້ນທະບຽນຊັບສິນ ຫຼື ບໍ່ມີໃບຕາດິນ? .......... 9

(9) ຜູ້ປະກອບການ ສາມາດ ນຳໃຊ້ ຂໍ້ມູນ ພື້ນທີ່ທີ່ຕັ້ງຂອງສິນຄ້າ ຂອງຜູ້ຜະລິດສິນຄ້າ ໄດ້ແນວໃດ? .......... 10

(10) ຜູ້ປະກອບການ ຕ້ອງໄດ້ກວດກາຢັ້ງຢືນຄວາມຖືກຕ້ອງ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າບໍ່? .......... 11

(11) ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຕ້ອງໄດ້ປະເມີນຊ້ຳ ສຳລັບ ຜະລິດຕະພັນ ທີ່ມາຈາກທີ່ດິນອັນດຽວກັນບໍ່? .......... 11

(12) ແຜນທີ່ຂອບເຂດທີ່ດິນ ສາມາດກວມເອົາ ຕອນດິນຫຼາຍຕອນບໍ່? .......... 11

(13) ແຜນທີ່ຂອບເຂດທີ່ດິນ ສາມາດສະໜອງໃຫ້ເປັນລວງຮອບໄດ້ບໍ່? .......... 11

(14) ຕ້ອງແຈ້ງ ແຫຼ່ງທີ່ມາຂອງສິນຄ້າ ທີ່ປົນເປກັນ ແນວໃດ? .......... 11

(15) ຜູ້ປະກອບການ ສາມາດ ແຈ້ງທີ່ດິນ ທີ່ບໍ່ໄດ້ຜະລິດສິນຄ້າບໍ່? .......... 12

(16) ໃນພາກປະຕິບັດຕົວຈິງ ຈະກວດກາ ພື້ນທີ່ທີ່ຕັ້ງຂອງສິນຄ້າ ແນວໃດ? .......... 12

(17) EU ຈະກວດກາ ຄວາມຖືກຕ້ອງ ຂອງສິນຄ້າທີ່ບໍ່ມີການທຳລາຍປ່າໄມ້ ໄດ້ແນວໃດ? .......... 13

(18) ອົງການຈັດຕັ້ງທີ່ຮັບຜິດຊອບ ຈະນຳໃຊ້ ບັນດານິຍາມ ໃນລະບຽບການນີ້ບໍ່? .......... 13

(19) ຈະແຈ້ງ ຮູບແບບ ຂອງແຜນທີ່ເຂດແດນຂອງພື້ນທີ່ ໃນ ເຊັບໄຟ (shapefile) ແນວໃດ? .......... 13

(20) ການຕິດຕາມແຫຼ່ງທີ່ມາຂອງສິນຄ້າ ໃນຕ່ອງໂສ້ການສະໜອງສິນຄ້າແມ່ນຫັຍງ? .............................. 14

(21) ຈະດຳເນີນຕິດຕາມ ແຫຼ່ງທີ່ມາ ຂອງຜະລິດຕະພັນ ທີ່ມາຈາກຫຼາຍປະເທດ ໄດ້ແນວໃດ? ..................... 15

(22) ວັນທີ ຫຼື ກອບເວລາ ໃນການຜະລິດສິນຄ້າແມ່ນຫັຍງ?........................................................ 15

(23) ຈະຕິດຕາມແຫຼ່ງທີ່ມາຂອງ ສິນຄ້າງິ້ວໄດ້ແນວໃດ? ................................................................ 15

(24) ຈະເຮັດຫັຍງ ຖ້າຜູ້ສະໜອງສິນຄ້າ ບໍ່ສະໜອງຂໍ້ມູນທີ່ຕ້ອງການໃຫ້?............................................ 16

(25) ຈະຕ້ອງໄດ້ສະໜອງຈຸດພິກັດ ໃນຕອນດິນ ສຳລັບ ໃນປະເທດທີ່ມີຄວາມສ່ຽງນ້ອຍ? ......................... 16

(26) ຂໍ້ກຳນົດ ກ່ຽວກັບ ສິນຄ້າທີ່ຖືກຕ້ອງຕາມກົດໝາຍ ແມ່ນນຳໃຊ້ໄດ້ ສຳລັບ ທີ່ດິນທີ່ປາສະຈາກການທຳລາຍປ່າໄມ້ບໍ່? ................................................................................................................ 16

(27) ມີພັນທະຫັຍງແດ່ ສຳລັບ ປະເທດ ທີ່ບໍ່ແມ່ນສະມາຊິກຂອງ EU ບໍ່?............................................ 16

**ຂອບເຂດຂອງສິນຄ້າ** ............................................................................................................ 17

(28) ມີຜະລິດຕະພັນອັນໃດແດ່ ທີ່ໄດ້ກຳນົດໄວ້ໃນ ລະບຽບການນີ້? .................................................. 17

(29) ຈະເຮັດຫັຍງກັບ ລາຍການສິນຄ້າ ທີ່ບໍ່ໄດ້ບັນຈຸໃນລາຍການສິນຄ້າ ໃນລະບຽບການ?........................ 18

(30) ລະບຽບການນີ້ ໄດ້ນຳໃຊ້ ສຳລັບ ປະລິມານ ຫຼື ມູນຄ່າ ຂອງສິນຄ້າບໍ່?.......................................... 18

(31) ຈະເຮັດຫັຍງກັບ ຜະລິດຕະພັນທີ່ຜະລິດໃນ EU?................................................................. 18

(32) ລະບຽບການນີ້ ຈະນຳໃຊ້ແນວໃດ ສຳລັບ ໄມ້ເພື່ອການຫຸ້ມຫໍ່? ................................................... 19

(33) ເຈັ້ຍ/ເຈັ້ຍກະດາດທີ່ຜະລິດຄືນໃໝ່ ຈະມີພັນບັງຄັບໃຊ້ ພາຍໃຕ້ຂອບເຂດ ຂອງຜະລິດຕະພັນໃນລະບຽບການນີ້ບໍ່?............................................................................................................................. 19

(34) ເລກລະຫັດ CN ແລະ HS ແມ່ນຫັຍງ ແລະ ຈະຕ້ອງນຳໃຊ້ ລະຫັດນີ້ໄດ້ແນວໃດ? .......................... 20

**ບັນດາພັນທະຂອງລະບຽບການ** .............................................................................................. 21

(35) ແມ່ນໃຜ ຖືກພິຈາລະນາເປັນຜູ້ປະກອບການ? ....................................................................... 21

(36) "ຮູບແບບ ກິດຈະກຳ ທາງດ້ານການຄ້າ" ແມ່ນຫັຍງ?............................................................... 21

(37) 'ນິຕິກຳທີ່ກ່ຽວຂ້ອງ ຂອງປະເທດທີ່ຜະລິດສິນຄ້າ ແມ່ນຫັຍງ?...................................................... 22

(38) ບັນດາພັນທະຂອງຜູ້ປະກອບການ ໃນຕ່ອງໂສ້ການສະໜອງສິນຄ້າ ຂັ້ນທັດລົງໄປ ມີຫັຍງແດ່? .............. 22

(39) ລະບຽບການນີ້ມີຜົນບັງຄັບໃຊ້ ສຳລັບ ການສົ່ງອອກ ແນວໃດ? .................................................. 23

(40) ບໍລິສັດໃດ ທີ່ບໍ່ແມ່ນຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ SME ແລະ ເຂົາເຈົ້າມີພັນທະຫັຍງແດ່? .................... 23

(41) ແມ່ນໃຜ ຈະຮັບຜິດຊອບ ໃນກໍລະນີ ມີການລະເມີດ ລະບຽບການນີ້? .......................................... 24

(42) ແມ່ນໃຜເປັນຜູ້ປະກອບການ ໃນກໍລະນີ ເປັນ ຕົ້ນໄມ້ຢືນຕົ້ນ ຫຼື ສິດໃນການຂຸດຄົ້ນ? ......................... 24

**ບັນດານິຍາມ** ........................................................................................................................ 25

(43) ການທຳລາຍປ່າໄມ້ຂອງໂລກ ໝາຍຄວາມວ່າແນວໃດ? ......................................................... 25

(44) ມີມາດຖານຫັຍງແດ່ ທີ່ໄມ້ຕ້ອງຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງສອດຄ່ອງ?........................................ 25

(45) ລະດັບ ການນຂຸດຄົ້ນ ທີຖືກຕ້ອງ ແມ່ນຫັຍງ? .................................................................... 26

(46) "ການເຊື່ອມໂຊມຂອງປ່າໄມ້" ຈະມີຜົນກະທົບ ຕໍ່ ລະບົບການຄຸ້ມຄອງປ່າໄມ້ແບບຍືນຍົງ ໃນປະຈຸບັນບໍ່? 26

(47) ຈະນຳໃຊ້ "ຕົ້ນໄມ້ທີ່ສາມາດ ໄປເຖິງ ລະດັບທີ່ໄດ້ກຳນົດ ໃນພື້ນທີ່" ແນວໃດ? ................................ 26

(48) ການປ່ຽນແປງທີ່ດິນປ່າໄມ້ອັນໃດ ຈຶ່ງຖືກຕ້ອງສອດຄ່ອງ?........................................................ 27

(49) ໄພພິບັດທາງທຳມະຊາດ ອາດຈະຈັດເຂົ້າເປັນ ການທຳລາຍປ່າໄມ້ບໍ່? ............................................ 27

(50) 'ທີ່ດິນໄມ້ອື່ນໆ' ຫຼື ລະບົບນິເວດອື່ນໆ ຈະຈັດເປັນການທຳລາຍປ່າໄມ້ບໍ່? ...................................... 27

**ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ** ................................................................................ 28

(51) ຂ້ອຍມີພັນທະຫັຍງແດ່ ເຊິ່ງປັນ ຜູ້ປະກອບການຂອງ EU? ....................................................... 28

(52) ຕົວແທນທີ່ໄດ້ຮັບອະນຸຍາດ ແມ່ນຫັຍງ?.............................................................................. 29

(53) ບໍລິສັດ ສາມາດ ດຳເນີນການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໃນນາມຕາງໜ້າ ບໍລິສັດສາຂາໄດ້ບໍ່? ... 29

(54) ການນຳເຂົ້າ ຜະລິດຕະພັນຄືນໃໝ່ ແມ່ນຫັຍງ? ..................................................................... 30

(55) ມີຂັ້ນຕອນທາງພາສີອັນໃດ ທີ່ໄດ້ຮັບຜົນກະທົບ?................................................................. 30

(56) ພາລະບົດບາດ ຂອງການຢັ້ງຢືນຄວາມຖືກຕ້ອງ ຫຼື ລະບົບ ການກວດກາຢັ້ງຢືນຄວາມຖືກຕ້ອງ ມີຫັຍງແດ່? ........................................................................................................................ 30

(57) ຈະເກັບເອກະສານດົນປານໃດ? ........................................................................................ 30

(58) ມີມາດຖານຫັຍງແດ່ ສຳລັບ ຜະລິດຕະພັນທີ່ມີຄວາມສ່ຽງນ້ອຍ? ................................................ 31

(59) 'ຜະລິດຕະພັນທີ່ມີຄວາມສ່ຽງນ້ອງ' ແມ່ນສາມາດຍົກເວັ້ນໄດ້ບໍ່?................................................ 31

(60) ສິນຄ້າອັນໃດໜຶ່ງ ຈາກປະເທດໃດໜຶ່ງ ສາມາດພິຈາລະນາ ເປັນສິນຄ້າ ທີ່ມີ 'ຄວາມສ່ຽງນ້ອຍໄດ້ບໍ່?....... 32

**ການຈັດລະດັບຄວາມສ່ຽງຂອງ ປະເທດທີ່ຜະລິດສິນຄ້າ ແລະ ການຮ່ວມມື**.......................................... 32

(61) ການຈັດລະດັບຄວາມສ່ຽງຂອງ ປະເທດທີ່ຜະລິດສິນຄ້າ ແມ່ນຫັຍງ?............................................ 32

(62) ວິທີການໃນການຈັດປະເພດຄວາມສ່ຽງມີຫັຍງແດ່? .............................................................. 32

(63) ພາກສ່ວນທີ່ກ່ຽວຂ້ອງຈະປະກອບສ່ວນແນວໃດແດ່?............................................................. 32

(64) ບັນດາປະເທດສາມາດ ແລກປ່ຽນຂໍ້ມູນ ທີ່ກ່ຽວຂ້ອງ ໃຫ້ ຄະນະກຳມະທິການ ຂອງ EUໄດ້ບໍ່?............. 33

(65) ຈະໄດ້ພິຈາລະນາ ຄວາມສ່ຽງຂອງສິນຄ້າ ທີ່ຖືກຕ້ອງຕາມກົດໝາຍ ນຳບໍ່? ..................................... 33

(66) ມີການສະໜັບສະໜູນຫັຍງແດ່ ໃຫ້ປະເທດທີ່ຜະລິດສິນ ແລະ ທຸລະກິດຄອບຄົວ? ............................. 34

(67) ອົງປະກອບຕ່າງໆ ຂອງແຜນງານເອີຣົບທີມ (TEI) ມີຫັຍງແດ່?................................................. 34

(68) ແຜນງານ ຂອງ ເອີຣົບທີມ (Team Europe initiative) ມີການພົວພັນແນວໃດ ກັບ ຄຳສັ່ງ ວ່າດ້ວຍ ການປະເມີນຄວາມຖືກຕ້ອງຂອງສິນຄ້າທີ່ມີຄວາມຮັບຜິດຊອບຂອງບໍລິສັດ (CSDDD)?.......................... 35

(69) ພວກເຮົາ ສາມາດຫຼຸດຜ່ອນຄວາມສ່ຽງ ຂອງລະດັບ "ຄວາມສ່ຽງຫຼາຍ" ທີ່ບໍ່ຖືກຕ້ອງ ແນວໃດ?............ 35

(70) EU ຈະຮັບປະກັນ ຄວາມໂປ່ງໃສໄດ້ແນວໃດ? ...................................................................... 36

**ການສະໜັບສະໜູນ ການຈັດຕັ້ງປະຕິບັດລະບຽບການ**........................................................................ 36

(71) ລະບົບຖານຂໍ້ມູນ ແລະ 'ລະບົບປະຕູດຽວຂອງ EU 'ແມ່ນຫັຍງ?................................................ 36

(72) ການປົກປ້ອງ ຄວາມປອດໄພຂອງຂໍ້ມູນມີຫັຍງແດ່? .............................................................. 37

(73) ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ສາມາດລົງທະບຽນໄດ້ແນວໃດ?........................................ 37

(74) ລະບົບຖານຂໍ້ມູນນີ້ ສາມາດເກັບຂໍ້ມູນທີ່ໃຊ້ແລ້ວ ເປັນປະຈຳໄດ້ບໍ່? .............................................. 37

(75) ລະບົບຖານຂໍ້ມູນນີ້ສາມາດ ຊ່ວຍປະຊາຊົນ ໃນການ ກຳນົດ ພື້ນທີ່ທີ່ຕັ້ງຂອງສິນຄ້າ ຂອງເຂົາເຈົ້າບໍ່?....... 38

(76) ສາມາດປັບປຸງ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໄດ້ບໍ່?.................................38

ເວລາໃນການຈັດຕັ້ງປະຕິບັດລະບຽບການ.........................................................................................38

(77) ເວລາໃດ ລະບຽບການມີຜົນສັກສິດ ໃນການບັງຄັບໃຊ້ ແລະ ເລີ່ມຕົ້ນຈັດຕັ້ງປະຕິບັດ? ......................38

(78) ຈະເຮັດຫັຍງແດ່ ໃນໄລຍະຂ້າມຜ່ານນີ້?..........................................................................38

(79) ຈະພິສູດຜະລິດຕະພັນໄດ້ແນວໃດ ກ່ອນວັນທີ່ ລະບຽບການມີຜົນສັກສິດໃນການບັງຄັບໃຊ້?................39

ຄຳຖາມອື່ນໆ..........................................................................................................................41

(81) ຄະນະກຳມະທິການຂອງ EU ຈະອອກບັນດາບົດແນະນຳບໍ່? ....................................................41

(82) ຄະນະກຳມະທິການຂອງ EU ຈະອອກບັນດາບົດແນະນຳ ສຳລັບແຕ່ລະສິນຄ້າສະເພາະບໍ່?....................41

(83) ພັນທະໃນການລາຍງານ ສຳລັບ ຜູ້ປະກອບການ ມີຫັຍງແດ່? ....................................................41

(84) ການສັງເກດພື້ນທີ່ປ່າໄມ້ ຂອງ EU ໃນການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ແມ່ນຫັຍງ?42

(85) ຄວາມສ່ຽງຫຼາຍ ປະກອບມີຫັຍງແດ່, ແລະ ຈະໃຊ້ເວລາດົນປານໃດ ຈິ່ງສາມາດຍົກເລີກໄດ້?................43

(86) ລະບຽບການນີ້ ມີຄວາມເຊື່ອມໂຍງແນວໃດກັບ ຄຳສັ່ງ ວ່າດ້ວຍ ພະລັງງານທົດແທນ ຂອງ EU? .........43

# ການຕິດຕາມ ແຫຼ່ງທີ່ມາຂອງສິນຄ້າ

### (1) ເປັນຫຍັງ ແລະ ເປັນແນວໃດ ຜູ້ປະກອບການ ຈຶ່ງຕ້ອງເກັບຂໍ້ມູນ ກ່ຽວກັບ ຈຸດພິກັດ?

ລະບຽບການນີ້ ໄດ້ຮຽກຮ້ອງ ໃຫ້ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອເກັບ ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ໃນຕອນດິນ ທີ່ໄດ້ທຳການຜະລິດສິນຄ້າເຫຼົ່ານີ້.

ການຕິດຕາມ ແຫຼ່ງທີ່ມາຂອງສິນຄ້າ ກັບຄືນໄປຫາ ຕອນດິນ (ເຊັ່ນ: ຕ້ອງການເກັບ ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າໃນຕອນດິນ ທີ່ໄດ້ທຳການຜະລິດສິນຄ້າ) ແມ່ນມີຄວາມຈຳເປັນ **ເພື່ອພິສູດວ່າ ສິນຄ້າເຫຼົ່ານີ້ ບໍ່ມີການທຳລາຍປ່າໄມ້ ທີ່ເກີດຂື້ນຢູ່ໃນພື້ນທີ່ສະເພາະ**. ຂໍ້ມູນ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ເຊິ່ງ ຕິດຕາມສິນຄ້າ ໄປຫາ ຕອນດິນ ທີ່ທຳການຜະລິດ ເປັນສ່ວນໜຶ່ງ ຂອງພາກອຸດສາຫະກຳ ແລະ ບາງອົງການຈັດຕັ້ງທີ່ກວດກາຢັ້ງຢືນຄວາມຖືກຕ້ອງໄດ້ນຳໃຊ້ ໃນໄລຍະທີ່ຜ່ານມາ. ຂໍ້ມູນພາບຖ່າຍທາງອາກາດ (ພາບຖ່າຍທາງອາກາດ, ພາບຖ່າຍດາວທຽມ) ຫຼື ຂໍ້ມູນອື່ນໆ (ເຊັ່ນ: ອາດຈະນຳໃຊ້ ພາບຖ່າຍ ໃນພາກສະໜາມ ທີ່ເຊື່ອມໂຍງ ໄປຫາ ຈຸດທີ່ຕັ້ງພູມສາດ ແລະ ເວລາ ໃນການຖ່າຍພາບ) ເຂົ້າໃນການກວດກາຄວາມຖືກຕ້ອງຂອງສິນຄ້າ ເພື່ອໃຫ້ຮູ້ວ່າ ການແຈ້ງ ພື້ນທີ່ທີ່ຕັ້ງຂອງສິນຄ້າ ແລະ ຜະລິດຕະພັນເຫຼົ່ານີ້ ມີສ່ວນກ່ຽວຂ້ອງກັບ ການທຳລາຍປ່າໄມ້ບໍ່.

**ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງ ຂອງສິນຄ້າ ຕ້ອງໄດ້ລະບຸໄວ້ ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ** ເຊິ່ງຜູ້ປະກອບການຕ້ອງປ້ອນເຂົ້າໃນ ລະບົບຖານຂໍ້ມູນ ກ່ອນຈະນຳເອົາສິນຄ້າ ເຂົ້າມາວາງຂາຍ ໃນຕະຫຼາດ EU ຫຼື ສົ່ງອອກຜະລິດຕະພັນ ອອກຈາກ EU. ສະນັ້ນ ເນື້ອໃນທີ່ສຳຄັນ ຂອງລະບຽບການນີ້ ແມ່ນຫ້າມຈຳໜ່າຍສິນຄ້າ ໃນຕະຫຼາດ EU ຫຼື ສົ່ງອອກ ອອກຈາກ EU ສຳລັບ ທຸກໆ ຜະລິດຕະພັນ ທີ່ບໍ່ໄດ້ເກັບ ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ແລະ ບໍ່ໄດ້ລະບຸຈຸດພິກັດນີ້ ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

ການເກັບຂໍ້ມູນ ຈຸດພິກັດພື້ນທີ່ທີ່ຕັ້ງຂອງສິນຄ້າ ສາມາດເກັບໄດ້ ໂດຍນຳໃຊ້ ໂທລະສັບມືຖື, ລະບົບພາບຖ່າຍດາວທຽມຂອງໂລກ (Global Navigation Satellite System -GNSS) ແລະ ນຳໃຊ້ ລະບົບແອບດີຈີຕອນ ທີ່ບໍ່ມີຄ່າໃຊ້ຈ່າຍ (ເຊັ່ນ: ລະບົບ ຂໍ້ມູນທີ່ຕັ້ງພູມສາດ GIS). ລະບົບນີ້ ແມ່ນບໍ່ຕອ້ງການມີສັນຍານເຄືອຂ່າຍມືຖື, ແຕ່ຕ້ອງການມີສັນຍານ GNSS ເທົ່ານັ້ນ, ຄ້າຍຄືກັນກັບ ລະບົບ Galileo.

ສຳລັບຕອນດິນ ທີ່ມີເນື້ອທີ່ຫຼາຍກ່ວາ 4 ເຮັກຕາ ທີ່ນຳໃຊ້ເຂົ້າໃນການຜະລິດສິນຄ້າ ນອກຈາກ ສິນຄ້າ ງົວ, ພື້ນທີ່ທີ່ຕັ້ງຂອງສິນຄ້າ ຕ້ອງໄດ້ສະໜອງໃຫ້ ໂດຍນຳໃຊ້ ແຜນທີ່ ໝາຍຂອບເຂດທີ່ດິນ (Polygons), ໝາຍຄວາມວ່າ, ຕ້ອງມີຈຸດ ເສັ້ນຂະໜານ ແລະ ເສັ້ນແວງ ທີ່ມີຄ່າ ຫົກຕົວເລກ ເພື່ອກຳນົດລວງຮອບ ຂອງແຕ່ລະຕອນດິນ. ສຳລັບຕອນດິນທີ່ມີເນື້ອທີ່ນ້ອຍ ກ່ວາ 4 ເຮັກຕາ, ຜູ້ປະກອບການ (ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ສາມາດ ນຳໃຊ້ແຜນທີ່ ທີ່ໝາຍຂອບເຂດທີ່ດິນ ຫຼື ນຳໃຊ້ຈຸດດຽວ ທີ່ມີເສັ້ນຂະໜານ ແລະ ເສັ້ນແວງ ທີ່ມີຄ່າ ຫົກຕົວເລກ ເພື່ອ ກຳນົດພື້ນທີ່ທີ່ຕັ້ງຂອງສິນຄ້າເຫຼົ່ານີ້. ສຳລັບ ຄອກລ້ຽງງົວ ທີ່ເປັນພື້ນທີ່ ທີ່ງົວພັກຜ່ອນ ສາມາດ ລະບຸ ຈຸດພິກັດຈຸດດຽວ.

**(2) ຕ້ອງໄດ້ຕິດຕາມແຫຼ່ງທີ່ມາ ຂອງທຸກໆສິນຄ້າ (ທີ່ນໍາເຂົ້າ, ສົ່ງອອກ, ຄ້າຂາຍ)ບໍ່?**

ຂໍ້ກໍານົດ ຂອງແຫຼ່ງທີ່ມາຂອງສິນຄ້າ ແມ່ນນໍາໃຊ້ ສໍາລັບ ແຕ່ລະຊຸດ ສິນຄ້າ ທີ່ກ່ຽວຂ້ອງ ທີ່ໄດ້ນໍາເຂົ້າ/ສົ່ງອອກ/ຄ້າຂາຍ.

ລະບຽບການນີ້ ຮຽກຮ້ອງໃຫ້ ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ) ຕິດຕາມ **ທຸກໆແຫຼ່ງທີ່ມາຂອງສິນຄ້າທີ່ກ່ຽວຂ້ອງ** ກັບຄືນໄປຫາ ຕອນດິນທີ່ທໍາການຜະລິດ ກ່ອນຈະນໍາເອົາສິນຄ້າເຫຼົ່ານີ້ ຈໍາໜ່າຍ ໃນຕະຫຼາດ EU ຫຼື ກ່ອນຈະສົ່ງອອກຈາກ EU. ສະນັ້ນ, **ການສົ່ງບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ແມ່ນຕ້ອງມີຂໍ້ມູນ ພື້ນທີ່ທີ່ຕັ້ງຂອງສິນຄ້າ ເຊິ່ງມີຄວາມຈໍາເປັນ ສໍາລັບ ທຸກໆສິນຄ້າທີ່ຈະນໍາເຂົ້າ** (ຂັ້ນຕອນທາງພາສີ ປ່ອຍສິນຄ້າອອກຂາຍ ແບບເສລີ) ແລະ ຈະສົ່ງອອກ (ຂັ້ນຕອນການສົ່ງອອກຂອງພາສີ) ແລະ ການມອບໂອນມອບ ຊຸດສິນຄ້າ ຢູ່ພາຍໃນຕະຫຼາດ EU.

**(3) ຈະເຮັດແນວໃດ ສໍາລັບ ການຄ້າຂາຍ ສິນຄ້າ ທີ່ມີປະລິມານຫຼວງຫຼາຍ ຫຼື ຜະລິດຕະພັນ ທີ່ມີສ່ວນປະສົມ?**

ສໍາລັບ ຜະລິດຕະພັນ ທີ່ຄ້າຂາຍເປັນ**ປະລິມານຫຼວງຫຼາຍ**, ເປັນຕົ້ນ ໝາກຖົ່ວເຫຼືອງ ຫຼື ນໍ້າມັນປາມ, ໝາຍຄວາມວ່າ ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ) ຕ້ອງຮັບປະກັນວ່າ ທຸກຕອນດິນ ທີ່ທໍາການຜະລິດສິນຄ້າ ທີ່ມີສ່ວນກ່ຽວຂ້ອງກັບ ການນໍາເຂົ້າ ຊຸດສິນຄ້າ ແມ່ນຕ້ອງໄດ້ກວດກາ ເພື່ອໃຫ້ຮູ້ວ່າ ສິນຄ້າເຫຼົ່ານີ້ ບໍ່ໄດ້ປົນເປກັບສິນຄ້າທີ່ບໍ່ຮູ້ຈັກແຫຼ່ງທີ່ມາ ຫຼື ມາຈາກ ພື້ນທີ່ທີ່ມີການທໍາລາຍປ່າໄມ້ ຫຼື ເຮັດໃຫ້ປ່າໄມ້ເຊື່ອມໂຊມ ພາຍຫຼັງວັນທີ ກໍານົດອ້າງອີງພື້ນທີ່ປ່າໄມ້ ໃນວັນທີ 31 ທັນວາ 2020.

ສໍາລັບ ສິນຄ້າ ທີ່ມີ**ສ່ວນປະສົມ**ທີ່ກ່ຽວຂ້ອງ, ເປັນຕົ້ນແມ່ນ ຜະລິດຕະພັນເຟີນີເຈີໄມ້ ທີ່ປະກອບເປັນ ສິ້ນສ່ວນໄມ້ຕ່າງໆ, ຜູ້ປະກອບການຕ້ອງ ເກັບພື້ນທີ່ທີ່ຕັ້ງຂອງທຸກຕອນດິນ ເຊິ່ງ ບັນດາສິ້ນສ່ວນ (ຕົວຢ່າງ ໄມ້) ທີ່ໄດ້ນໍາໃຊ້ເຂົ້າໃນການປຸງແຕ່ງ. ບັນດາສິ້ນສ່ວນເຫຼົ່ານີ້ ອາດຈະມາຈາກແຫຼ່ງທີ່ບໍ່ຮູ້ຈັກ ຫຼື ມາຈາກພື້ນທີ່ທີ່ມີການທໍາລາຍປ່າໄມ້ ແລະ ພື້ນທີ່ທີ່ເຮັດໃຫ້ປ່າໄມ້ເຊື່ອມໂຊມ ພາຍຫຼັງ ວັນທີ ກໍານົດອ້າງອີງພື້ນທີ່ປ່າໄມ້.

**(4) ອະນຸຍາດ ໃຫ້ສົມທຽບ ຄວາມສົມດຸນ ຂອງບໍລິມາດ ຂອງສິນຄ້າ ໃນຕ່ອງໂສ້ການສະໜອງສິນຄ້າ ໄດ້ບໍ່?**

ລະບຽບການນີ້ ໄດ້ກໍານົດວ່າ ບັນດາສິນຄ້າທີ່ນໍາໃຊ້ ໃນການປຸງແຕ່ງ ທຸກຜະລິດຕະພັນ ແມ່ນຕົກຢູ່ໃນຂອບເຂດ ທີ່ສາມາດຕິດຕາມແຫຼ່ງທີ່ມາ ໄປຫາຕອນດິນ ທີ່ທໍາການຜະລິດໄດ້.

ຄວາມສົມດູນຂອງບໍລິມາດ ຂອງສິນຄ້າ ໃນການສະໜອງສິນຄ້າ ທີ່ອະນຸຍາດໃຫ້ປົນເປກັນ ໃນທຸກຂັ້ນຕອນ ຂອງການສະໜອງສິນຄ້າ ແມ່ນສິນຄ້າ ທີ່ປາສະຈາກການທໍາລາຍປ່າໄມ້, ສ່ວນສິນຄ້າທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ບໍ່ປາສະຈາກການທໍາລາຍປ່າໄມ້ **ແມ່ນບໍ່ອະນຸຍາດໃຫ້ປົນເປກັນ ພາຍໃຕ້ລະບຽບການນີ້**, ເພາະວ່າ ບໍ່ຮັບປະກັນວ່າ ສິນຄ້າເຫຼົ່ານີ້ ເປັນສິນຄ້າ ທີ່ປາສະຈາກການທໍາລາຍປ່າໄມ້. ສະນັ້ນ, ບັນດາສິນຄ້າທີ່ປາສະຈາກການທໍາລາຍປ່າໄມ້ ທີ່ຈໍາໜ່າຍໃນຕະຫຼາດ EU ຫຼື ກ່ອນຈະສົ່ງອອກຈາກ EU ຕ້ອງໄດ້ແຍກອອກຈາກສິນຄ້າທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ສິນຄ້າທີ່ບໍ່ປາສະຈາກການທໍາລາຍປ່າໄມ້ ຢູ່ໃນທຸກຂັ້ນຕອນ ໃນການສະໜອງສິນຄ້າ. ເນື່ອງຈາກ ຄວາມສົມດູນຂອງບໍລິມາດ ຂອງສິນຄ້າ ແມ່ນນໍາໃຊ້ບໍ່ໄດ້, ການແຍກ ສິນຄ້າອອກຈາກກັນ ແມ່ນບໍ່ມີຄວາມຈໍາເປັນ.

**(5) ຖ້າສິນຄ້າສ່ວນໃດສ່ວນໜຶ່ງ ບໍ່ຖືກຕ້ອງ ຕາມລະບຽບການ ຈະເປັນແນວໃດ?**

ຖ້າສິນຄ້າ ສ່ວນໃດໜຶ່ງ ບໍ່ຖືກຕ້ອງ ຕາມລະບຽບການ, ຈະ**ໄດ້ກຳນົດ ແລະ ແຍກສ່ວນສິນຄ້າ ທີ່ ບໍ່ຖືກຕ້ອງນີ້ ອອກຈາກສິນຄ້າທີ່ຖືກຕ້ອງ** ກ່ອນຈະວາງຂາຍສິນຄ້າ ໃນຕະຫຼາດ EU ຫຼື ສົ່ງອອກຈາກ EU.

ຖ້າບໍ່ສາມາດ ກຳນົດ ແລະ ແຍກສິນຄ້າອອກຈາກກັນ ເຊັ່ນ: ສິນຄ້າ ທີ່ບໍ່ຖືກຕ້ອງ ໄດ້ປົນເປກັນກັບ ສິນທີ່ຖືກຕ້ອງອື່ນໆ ເຊິ່ງສິນຄ້າ ທີ່ບໍ່ຖືກຕ້ອງທັງໝົດເຫຼົ່ານີ້ ຈະກາຍມາເປັນສິນຄ້າ ທີ່ບໍ່ຖືກຕ້ອງ ແລະ ບໍ່ ສາມາດຮັບປະກັນ ຕາມເງື່ອນໄຂ ໃນມາດຕາ 3 ຂອງລະບຽບການນີ້, ສະນັ້ນ ຈິ່ງບໍ່ສາມາດ ຈຳໜ່າຍສິນຄ້າເຫຼົ່ານີ້ ໃນຕະຫຼາດ EU ຫຼື ສົ່ງອອກຈາກ EU.

ຕົວຢ່າງ, ໃນເມື່ອມີສິນຄ້າ ຈຳນວນຫຼວງຫຼາຍ ໄດ້ປົນເປ ແລະ ຕິດພັນກັບຕອນດິນຫຼາຍຮ້ອຍຕອນ, ໃນຕົວຈິງ ຖ້າມີດິນຕອນໜຶ່ງໄດ້ກໍ່ໃຫ້ເກີດ ການທຳລາຍປ່າໄມ້ ພາຍຫຼັງ ປີ 2020 ອາດເຮັດໃຫ້ສິນຄ້າທັງໝົດເຫຼົ່ານີ້ ບໍ່ຖືກຕ້ອງ ຕາມລະບຽບການ.

ບໍ່ໃຫ້ການລຳອຽງ ຕໍ່ທຸກສະພາບການອື່ນໆ ຂອງສິນຄ້າທີ່ໄດ້ກຳນົດ, ໃນເມື່ອ ສິນຄ້າ ຫຼື ຜະລິດຕະພັນ 100% ໄດ້ຈຳໜ່າຍ ໃນຕະຫຼາດ EU ສິນຄ້າເຫຼົ່ານີ້ຕ້ອງ : (1) ສາມາດຕິດຕາມຍ້ອນຫຼັງ ກັບຄືນໄປຫາຕອນດິນ ທີ່ທຳການຜະລິດ, (2) ຖືກຕ້ອງສອດຄ່ອງ ຕາມກົດໝາຍ ແລະ ປາສະຈາກການທຳລາຍປ່າໄມ້ ຕາມລະບຽບການນີ້, ແລະ (3) ບໍ່ມີການປົນເປ ກັບ ສິນຄ້າ ທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ສິນຄ້າ ບໍ່ປາສະຈາກການທຳລາຍປ່າໄມ້.

**(6) ຕອນດິນ ມີຄວາມໝາຍແນວໃດ?**

"ຕອນດິນ" – ພາຍໃຕ້ ລະບຽບການ, ພື້ນທີ່ທີ່ຕັ້ງຂອງສິນຄ້າ – ແມ່ນໄດ້ກຳນົດ ໃນ ມາດຕາ 2 (27) ເປັນ "ທີ່ດິນ ຢູ່ພາຍໃນ ຊັບສິນ ອະສັງຫາລິມະຊັບ, ທີ່ໄດ້ກຳນົດຮັບຮູ້ ໂດຍກົດໝາຍ ຂອງປະເທດທີ່ຜະລິດສິນຄ້າ, ເຊິ່ງເປັນເງື່ອນໄຂພຽງພໍ ອະນຸຍາດ ໃຫ້ແກ່ການປະເມີນຜົນ ລະດັບຄວາມສ່ຽງ ຂອງການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ທີ່ກ່ຽວຂ້ອງກັບ ການຜະລິດສິນຄ້າ ໃນຕອນດິນນີ້."

**(7) ມີຫຼັກການຫັຍງແດ່ ສຳລັບທີ່ດິນ ທີ່ບໍ່ແມ່ນ ອະສັງຫາລິມະຊັບ?**

ມີຫັຍງເກີດຂຶ້ນ ສຳລັບ ທີ່ດິນຂອງລັດ ແລະ ທີ່ດິນຂອງຊຸມຊົນ ເຊິ່ງບໍ່ໄດ້ຈັດເຂົ້າຢູ່ພາຍໃນ ກອບຂອງ “ຊັບສິນ ອະສັງຫາລິມະຊັບ”?

ລະບຽບການນີ້ ໄດ້ກຳນົດວ່າ ບັນດາສິນຄ້າ ທີ່ຈຳໜ່າຍ ໃນຕະຫຼາດ EU ຫຼື ສົ່ງອອກຈາກ EU ຕ້ອງຜະລິດ ຫຼື ຂຸດຄົ້ນ ໃນທີ່ດິນ ທີ່ໄດ້ກຳນົດ ເປັນຕອນດິນ. ການບໍ່ມີໃບທະບຽນທີ່ດິນ ຫຼື ໃບຕາດິນ ບໍ່ຄວນກີດຂວາງ ການກຳນົດທີ່ດິນ ເປັນຕອນດິນ (ເບິ່ງຂ້າງລຸ່ມນີ້).

**(8) ມີຫັຍງແດ່ ຖ້າບໍ່ມີ ການຂຶ້ນທະບຽນຊັບສິນ ຫຼື ບໍ່ມີໃບຕາດິນ?**

ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ສາມາດເຮັດແນວໃດ ເພື່ອເກັບຂໍ້ມູນ ພື້ນທີ່ທີ່ຕັ້ງຂອງສິນຄ້າ ໃນບັນດາປະເທດ ເຊິ່ງບໍ່ໄດ້ຂຶ້ນທະບຽນ ຊັບສິນ ແລະ ປະຊາຊົນ ບໍ່ມີບັດປະຈຳຕົວ ຫຼື ໃບຕາດິນ ສຳລັບ ທີ່ດິນຂອງເຂົາເຈົ້າ?

ປະຊາຊົນ ສາມາດເກັບຂໍ້ມູນ ພື້ນທີ່ທີ່ຂອງສິນຄ້າ ໃນຕອນດິນຂອງເຂົາເຈົ້າ ໂດຍບໍ່ມີໃບທະບຽນທີ່ດິນ ຫຼື ໃບຕາດິນ ຫຼື ບໍ່ມີບັດປະຈຳຕົວ ຫຼື ບໍ່ມີໃບຕາດິນ ສຳລັບທີ່ດິນຂອງເຂົາເຈົ້າ. ຍົກເວັ້ນ ເຂົາເຈົ້າ ເປັນຜູ້ສະໜອງສິນຄ້າໂດຍກົງ ໃຫ້ຜູ້ປະກອບການ ຫຼື ເປັນຜູ້ປະກອບການດ້ວຍຕົນເອງ, ບໍ່ຈຳເປັນຕ້ອງມີຂໍ້ມູນ ສ່ວນບຸກຄົນ ຈາກປະຊາຊົນ ແລະ ພື້ນທີ່ທີ່ຕັ້ງຂອງສິນຄ້າ ຂອງທີ່ດິນ ທີ່ເຂົາເຈົ້າປູກຝັງ ແມ່ນພຽງພໍແລ້ວ, ຕົວຢ່າງ ເກັບຂໍ້ມູນ ຜ່ານ ແອບໃນໂທລະສັບມືຖື.

ກ່ຽວກັບ ຂໍ້ກຳນົດ ສິນຄ້າທີ່ຖືກຕ້ອງຕາມກົດໝາຍ, ລະບຽບການ ໄດ້ກຳນົດ ໃຫ້ປະຕິບັດຕາມ ບັນດາກົດໝາຍຂອງປະເທດ ທີ່ຜະລິດສິນຄ້າ. ຖ້າປະຊາຊົນໄດ້ຮັບອະນຸຍາດ ໃຫ້ປູກຝັງທີ່ຖືກຕ້ອງຕາມກົດໝາຍ ແລະ ຂາຍ ຜະລິດຕະພັນຂອງເຂົາເຈົ້າ ຖືກຕ້ອງຕາມກົດໝາຍຂອງປະເທດ (ເຊິ່ງ ອາດຈະບໍ່ມີໃບທະບຽນຊັບສິນ ແລະ ປະຊາຊົນບາງຄົນ ອາດມີບັດປະຈຳຕົວ), ໝາຍຄວາມວ່າ ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ໂດຍທົ່ວໄປແລ້ວ ສາມາດ ບັນລຸຕາມ ຂໍ້ກຳນົດ ສິນຄ້າທີ່ຖືກຕ້ອງຕາມກົດໝາຍ ໃນເມື່ອຊື້ສິນຄ້າ ຈາກປະຊາຊົນເຫຼົ່ານີ້. ແຕ່ຢ່າງໃດກໍ່ຕາມ, ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ), ອາດມີຄວາມຕ້ອງການໃນການກວດກາຢັ້ງຢືນຄວາມຖືກຕ້ອງ ເພື່ອບໍ່ໃຫ້ຄວາມສ່ຽງ ກ່ຽວກັບ ສິນຄ້າທີ່ຜິດກົດໝາຍ ໃນຕ່ອງໂສ້ສະໜອງສິນຄ້າຂອງຕົນເອງ.

ມີຫຼາຍວິທີທີ່ແຕກຕ່າງກັນ ເຊິ່ງຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ທີ່ເຄີຍນຳໃຊ້ ເຂົ້າໃນການເກັບຂໍ້ມູນ ພື້ນທີ່ທີ່ຕັ້ງຂອງສິນຄ້າ ໃນປະຈຸບັນ ແລະ ຂໍ້ມູນ ຂອງສິນຄ້າທີ່ຖືກຕ້ອງຕາມກົດໝາຍ: ບາງບ່ອນ ແມ່ນແຕ້ມແຜນທີ່ ທີ່ກ່ຽວຂ້ອງໂດຍກົງ ກັບຜູ້ສະໜອງສິນຄ້າ ຂອງເຂົາເຈົ້າ, ສ່ວນບາງບ່ອນ ແມ່ນຂຶ້ນກັບ ອົງການຈັດຕັ້ງຄົນກາງ ເຊັ່ນ: ສະຫະກອນ, ອົງການຈັດຕັ້ງກວດກາຢັ້ງຢືນ, ລະບົບ ຕິດຕາມແຫຼ່ງທີ່ມາຂອງສິນຄ້າແຫ່ງຊາດ ຫຼື ບໍລິສັດອື່ນໆ. ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ມີຄວາມຮັບຜິດຊອບ ຢ່າງຖືກຕ້ອງຕາມກົດໝາຍ ເພື່ອຮັບປະກັນວ່າ ພື້ນທີ່ທີ່ຕັ້ງຂອງສິນຄ້າ ແລະ ຄວາມຖືກຕ້ອງຕາມກົດໝາຍ ແມ່ນມີຄວາມຖືກຕ້ອງ, ໂດຍບໍ່ໄດ້ຄຳເນິງເຖິງ ວິທີການ ຫຼື ອົງການຈັດຕັ້ງຄົນກາງ ທີ່ເຂົາເຈົ້າເຄີຍເກັບຂໍ້ມູນເຫຼົ່ານີ້.

**(9) ຜູ້ປະກອບການ ສາມາດ ນຳໃຊ້ ຂໍ້ມູນ ພື້ນທີ່ທີ່ຕັ້ງຂອງສິນຄ້າ ຂອງຜູ້ຜະລິດສິນຄ້າ ໄດ້ແນວໃດ?**

ແມ່ນແລ້ວສາມາດໃຊ້ໄດ້, ແຕ່ວ່າສຸດທ້າຍ ຜູ້ປະກອບການ ເປັນຜູ້ຮັບຜິດຊອບ ຕໍ່ຄວາມຊັດເຈນຂອງຂໍ້ມູນ ແລະ ບໍ່ແມ່ນຜູ້ຜະລິດສິນຄ້າ ທີ່ສະໜອງຂໍ້ມູນໃຫ້. ລະບຽບການນີ້ ແມ່ນບໍ່ໄດ້ນຳໃຊ້ ສຳລັບ ຜູ້ຜະລິດສິນຄ້າ (ເຊັ່ນ: ທຸລະກິດຄອບຄົວ) ເຊິ່ງບໍ່ໄດ້ຈຳໜ່າຍຜະລິດຕະພັນ ໃນຕະຫຼາດ EU ດ້ວຍຕົນເອງ (ແລະ ສັ້ນ ຈິ່ງບໍ່ໄດ້ກຳນົດເປັນ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ).

ໃນກໍລະນີນີ້, ຜູ້ປະກອບການ ຕ້ອງຮັບປະກັນວ່າ ພື້ນທີ່ເຊິ່ງ ສິນຄ້າທີ່ໄດ້ຜະລິດເຫຼົ່ານີ້ ແມ່ນໄດ້ແຕ້ມແຜນທີ່ຢ່າງຊັດເຈນ ແລະ ກຳນົດພື້ນທີ່ທີ່ຕັ້ງຂອງສິນຄ້າ ທີ່ຖືກຕ້ອງ ກັບຕອນດິນທີ່ທຳການຜະລິດ. ຜູ້ປະກອບການ ສາມາດນຳໃຊ້ຂັ້ນຕອນການປະເມີນຄວາມສ່ຽງ ແລະ ມາດຕະການສະໜັບສະໜູນ ໃຫ້ຜູ້ສະໜອງສິນຄ້າ ເພື່ອຖືກຕ້ອງສອດຄ່ອງຕາມຂໍ້ກຳນົດຂອງ ລະບຽບການນີ້, ໂດຍສະເພາະແມ່ນ ການສ້າງຄວາມສາມາດ ແລະ ການລົງທຶນອື່ນໆ ໃຫ້ທຸລະກິດຄອບຄົວ.

**(10) ຜູ້ປະກອບການ ຕ້ອງໄດ້ກວດກາຢັ້ງຢືນຄວາມຖືກຕ້ອງ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າບໍ່?**

ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ **ຕ້ອງໄດ້ ກວດກາຢັ້ງຢືນຄວາມຖືກຕ້ອງ ວ່າພື້ນທີ່ທີ່ຕັ້ງຂອງສິນຄ້າ ແມ່ນຖືກຕ້ອງ.**

ຮັບປະກັນຄວາມຈິງ ແລະ ຄວາມຊັດເຈນ ຂອງຂໍ້ມູນພື້ນທີ່ທີ່ຕັ້ງຂອງສິນຄ້າ ເປັນຄວາມຮັບຜິດຊອບ ທີ່ສຳຄັນ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ເຊິ່ງຕ້ອງໄດ້ຈັດຕັ້ງປະຕິບັດ. ການສະໜອງ ລາຍລະອຽດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ທີ່ບໍ່ຊັດເຈນ ອາດຈະເປັນການລະເມີດ ຕໍ່ພັນທະຂອງຜູ້ປະກອບການ (ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ພາຍໃຕ້ລະບຽບການນີ້.

**(11) ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຕ້ອງໄດ້ປະເມີນຊ້ຳ ສຳລັບ ຜະລິດຕະພັນ ທີ່ມາຈາກທີ່ດິນອັນດຽວກັນບໍ່?**

ພັນທະກ່ຽວກັບ ຂໍ້ມູນຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ທີ່ຈະຂຽນລົງໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ຜ່ານລະບົບຖານຂໍ້ມູນ, ແມ່ນກ່ຽວຂ້ອງກັບ ແຕ່ລະຜະລິດຕະພັນທີ່ກ່ຽວຂ້ອງ. ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) **ຈະໄດ້ລະບຸ ຂໍ້ມູນ ແຕ່ລະເທື່ອ** ໃນເມື່ອເຂົາເຈົ້າ ຈຳໜ່າຍສິນຄ້າເຫຼົ່ານີ້ ໃນຕະຫຼາດ EU ຫຼື ສົ່ງອອກ ຜະລິດຕະພັນອອກຈາກ EU. ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຈະໄດ້ປະເມີນຊ້ຳ (ເຊັ່ນ: ປັບປຸງ) ສຳລັບ ແຕ່ລະສິນຄ້າ ທີ່ກ່ຽວຂ້ອງ, ລວມທັງການສະໜອງ ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ.

**(12) ແຜນທີ່ຂອບເຂດທີ່ດິນ ສາມາດກວມເອົາ ຕອນດິນຫຼາບຕອນບໍ່?**

ແຜນທີ່ຂອບເຂດທີ່ດິນ ແມ່ນ ຈະນຳໃຊ້ ເພື່ອກຳນົດລວງຮອບ ຂອງຕອນດິນ ທີ່ໄດ້ທຳການຜະລິດສິນຄ້າ. **ແຜນທີ່ຂອບເຂດທີ່ດິນ ຕ້ອງບົ່ງບອກເຖິງ ຕອນດິນຕອນດຽວ ບໍ່ວ່າຈະຕິດກັນກໍ່ຕາມ.** ແຜນທີ່ໝາຍຂອບເຂດທີ່ດິນ ຕ້ອງໄດ້ສະໜອງໃຫ້ ເທື່ອດຽວ ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ບ່ອນທີ່ ທຳການຜະລິດສິນຄ້າ ຈາກຫຼາຍຕອນດິນ. ແຜນທີ່ຂອບເຂດທີ່ດິນ ບໍ່ສາມາດ ນຳໃຊ້ເພື່ອຕິດຕາມ ລວງຮອບຂອງຕອນດິນ ແບບສຸ່ມຕົວຢ່າງ, ພື້ນທີ່ດິນ ອາດຈະກວມເອົາຕອນດິນ ທີ່ເປັນບາງສ່ວນຂອງຕອນດິນເທົ່ານັ້ນ.

**(13) ແຜນທີ່ຂອບເຂດທີ່ດິນ ສາມາດສະໜອງໃຫ້ເປັນລວງຮອບໄດ້ບໍ່?**

ບໍ່ມີພັນທະ ຫຼື ເປັນໄປບໍ່ໄດ້ ທີ່ຈະສະໜອງ ຂໍ້ມູນຂອງຕອນດິນ ດ້ວຍວິທີ ເປັນລວງຮອບ. **ສຳລັບ ຕອນດິນ ທີ່ມີເນື້ອທີ່ຫຼາຍກ່ວາສີ່ເຮັກຕາ ຂຶ້ນໄປ** (ສຳລັບ ການຜະລິດ ສິນຄ້າທີ່ກ່ຽວຂ້ອງ ນອກຈາກງົວ), ພື້ນທີ່ທີ່ຕັ້ງຂອງສິນຄ້າ ທີ່ຈະສະໜອງໃຫ້ ແມ່ນນຳໃຊ້ແຜນທີ່ໝາຍຂອບເຂດພື້ນທີ່ (ບໍ່ແມ່ນຈຸດໃຈກາງສະເພາະ ພ້ອມກັບລວງຮອບ) ທີ່ມີຈຸດ ເສັ້ນແວງ ແລະ ເສັ້ນຂະໜານ ທີ່ຖືກຕ້ອງເພື່ອລະບຸເຖິງ ລວງຮອບ ຂອງແຕ່ລະຕອນດິນ.

**(14) ຕ້ອງແຈ້ງ ແຫຼ່ງທີ່ມາຂອງສິນຄ້າ ທີ່ປົນເປກັນ ແນວໃດ?**

ຜູ້ປະກອບການຕ້ອງ ແຈ້ງແຫຼ່ງທີ່ມາຂອງສິນຄ້າທັງໝົດ ຢ່າງມີປະສິດທິຜົນ ໃນເມື່ອຂົນສົ່ງ ເຂົ້າມາ EU. ຕົວຢ່າງ, ຖ້າສິນຄ້າ ທີ່ມາຈາກຫຼາຍແຫຼ່ງທີ່ແຕກຕ່າງກັນ ທີ່ໄດ້ປະສົມເຂົ້າກັນ ແລະ ບາງສົນໄດ້ຂົນສົ່ງ ເຂົ້າມາ EU:

- ຕ້ອງແຈ້ງ **ແຫຼ່ງທີ່ມາຂອງສິນຄ້າທັງໝົດ** ໃນເມື່ອເຂົ້າມາຮອດ EU **ທີ່ນຳເຂົ້າມາໃນໂຮງປະສົມ** (ແລະ ອາດຈະກຳນົດເຂົ້າ ໃນການຂົນສົ່ງມາຍັງ EU)

- ການແຈ້ງແຫຼ່ງທີ່ມາ ຂອງຈຳນວນສິນຄ້າ ທີ່ເຂົ້າມາປະສົມ ໃນໂຮງປະສົມ, ເຊິ່ງສິນຄ້າຈຳນວນໜຶ່ງ ທີ່ຂົນສົ່ງ ໄປຍັງ EU **ແມ່ນບໍ່ອະນຸຍາດ** ພາຍໃຕ້ລະບຽບການນີ້, ເຊິ່ງອາດຈະລະເມີດ ລະບຽບການນີ້ ໃນການຈຳໜ່າຍສິນຄ້າທີ່ ບໍ່ຮູ້ຈັກແຫຼ່ງທີ່ມາ ໃນຕະຫຼາດ EU.

### (15) ຜູ້ປະກອບການ ສາມາດ ແຈ້ງທີ່ດິນ ທີ່ບໍ່ໄດ້ຜະລິດສິນຄ້າບໍ່?

ຂໍ້ກຳນົດ ຂອງລະບຽບການນີ້ ຮຽກຮ້ອງໃຫ້ມີຄວາມຖຶກຕ້ອງສອດຄ່ອງ ລະຫ່ວາງ ສິນຄ້າ/ຜະລິດຕະພັນ ທີ່ຈຳໜ່າຍໃນຕະຫຼາດ ແລະ ໃນຕອນດິນທີ່ທຳການຜະລິດສິນຄ້າຢ່າງມີປະສິດທິຜົນ. ແຕ່ຢ່າງໃດກໍ່ຕາມ, **ໃນເງື່ອນໄຂສະເພາະ ຜູ້ປະກອບການສາມາດ ສະໜອງ ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ສຳລັບ ຈຳນວນຕອນດິນ ທີ່ເກີນຂອບເຂດ ຂອງຕອນດິນ ທີ່ທຳການຜະລິດສິນຄ້າເຫຼົ່ານັ້ນ.**

ຖ້າຜູ້ປະກອບການ ແຈ້ງ 'ພື້ນທີ່ທີ່ເກີນຂອບເຂດ ສຳລັບ ທີ່ດິນທີ່ທຳການຜະລິດ' ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ຜູ້ປະກອບການຕ້ອງ ຮັບຜິດຊອບ ຢ່າງເຕັມສ່ວນ ຕໍ່ ຄວາມຖືກຕ້ອງ ສຳລັບ ທຸກຕອນດິນ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ, ໂດຍບໍ່ຄຳນຶງວ່າ ຕອນດິນດັ່ງກ່າວ ກ່ຽວຂ້ອງກັບ ການຜະລິດສິນຄ້າດັ່ງກ່າວຫຼືບໍ່ ທີ່ຈໍໜ່າຍໃນຕະຫຼາດ. ຖ້າໜຶ່ງໃນຕອນດິນ 'ພື້ນທີ່ທີ່ຕັ້ງຂອງສິນຄ້າ' ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ບໍ່ຖືກຕ້ອງ, ຖືວ່າຕອນດິນທັງໝົດ 'ພື້ນທີ່ທີ່ຕັ້ງຂອງສິນຄ້າ' ແມ່ນບໍ່ຖືກຕ້ອງ. ໃນ ກໍລະນີ້, ຜູ້ປະກອບການ ແຈ້ງຕອນດິນ ຢູ່ນອກຂອບເຂດ ຂອງພື້ນທີ່ທີ່ຜະລິດສິນຄ້າ ແມ່ນຕ້ອງໄດ້ດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຄົບຊຸດ ໃຫ້ຖືກຕ້ອງສອດຄ່ອງຕາມ ມາດຕາ 9, 10 ແລະ 11, ສຳລັບທຸກຕອນດິນ ທີ່ໄດ້ແຈ້ງ (ລວມທັງຕອນດິນຢູ່ນອກຂອບເຂດ ຂອງພື້ນທີ່ທີ່ທຳການຜະລິດສິນຄ້າ) ແລະ ຕ້ອງໄດ້ສະໜອງຫຼັກຖານວ່າ: 1) ໄດ້ປະເມີນ ຄວາມສ່ຽງ ໃຫ້ຖືກຕ້ອງສອດຄ່ອງ ຕາມມາດຕາ 10.2 ສຳລັບ ທຸກຕອນດິນ, ແລະ 2) ເຊິ່ງໃນການປະເມີນນີ້, ຜູ້ປະກອບການຕ້ອງພິຈາລະນາ ບັນດາມາດຖານ ຕາມ ຂໍ້ (i) ແລະ (j), ໃນມາດຕາ 10 ແລະ 3) ເຊິ່ງ ຄວາມສ່ຽງນີ້ແມ່ນມີຄວາມສ່ຽງນ້ອຍ ສຳລັບ ທຸກຕອນດິນ.

### (16) ໃນພາກປະຕິບັດຕົວຈິງ ຈະກວດກາ ພື້ນທີ່ທີ່ຕັ້ງຂອງສິນຄ້າ ແນວໃດ?

**ຈະກວດກາ ຄວາມຖືກຕ້ອງ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ທີ່ບໍ່ມີການທຳລາຍປ່າໄມ້ ໃນພາກປະຕິບັດຕົວຈິງ ໄດ້ແນວໃດ?** ໂດຍອີງໃສ່ຈຸດ ພາບຖ່າຍດາວທຽມ ແລະ ແຜນທີ່ການທຳລາຍປ່າໄມ້ບໍ່? ຈະມີແຜນທີ່ຂໍ້ມູນ ພື້ນທີ່ປ່າໄມ້ເບື້ອງຕົ້ນ ຫຼື ພື້ນທີ່ ທີ່ມີການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ບໍ່? ຈະເຮັດແນວໃດ ຖ້າພື້ນທີ່ທີ່ຕັ້ງຂອງສິນຄ້າ ໃນຟາມ, ປ່າປູກ ຫຼື ພື້ນທີ່ສຳປະທານບໍ່ມີ?

ອັນນີ້ ແມ່ນຄວາມຮັບຜິດຊອບຂອງ ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ເພື່ອ ເກັບ ຈຸດພິກັດຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ໃນຕອນດິນ ບ່ອນທີ່ທຳການຜະລິດສິນຄ້າເຫຼົ່ານີ້. ຖ້າຜູ້ປະກອບການ ບໍ່ສາມາດເກັບ ພື້ນທີ່ທີ່ຕັ້ງຂອງສິນຄ້າ ຂອງທຸກຕອນດິນ ທີ່ກ່ຽວຂ້ອງກັບ ສິນຄ້າທີ່ກ່ຽວຂ້ອງ, ເຂົາເຈົ້າ ບໍ່ສາມາດ ຈຳໜ່າຍ ສິນຄ້າເຫຼົ່ານີ້ ໃນຕະຫຼາດ EU ຫຼື ສົ່ງອອກຈາກ EU, ອີງຕາມມາດຕາ 3 ຂອງລະບຽບການນີ້.

ປະກອບການ (ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ແລະ ເຈົ້າໜ້າທີ່ ບັງຄັບໃຊ້ລະບຽບການ ສາມາດກວດກາຄືນ ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ໂດຍທຽບໃສ່ພາບຖ່າຍດາຍທຽມ ຫຼື ແຜນທີ່ປ່າປົກຫຸ້ມ ເພື່ອປະເມີນ ວ່າ ຜະລິດຕະພັນ ສອດຄ່ອງຕາມ ຂໍ້ກຳນົດ ຂອງສິນຄ້າທີ່ປາສະຈາກການທຳລາຍປ່າໄມ້ ໃນລະບຽບການນີ້. ແຕ່ຢ່າງໃດກໍ່ຕາມ, ປະກອບການ (ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ຕ້ອງມີຄວາມເຊື່ອຖື.

### (17) EU ຈະກວດກາ ຄວາມຖືກຕ້ອງ ຂອງສິນຄ້າທີ່ບໍ່ມີການທຳລາຍປ່າໄມ້ ໄດ້ແນວໃດ?

ອົງການຈັດຕັ້ງທີ່ຮັບຜິດຊອບ ຂອງບັນດາປະເທດສະມາຊິກຂອງ EU (EUMS CAs) ຕ້ອງດຳເນີນກວດກາ ບັນດາສິນຄ້າ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ ທີ່ໄດ້ມີ ຫຼື ມີຈຸດປະສົງ ເພື່ອຈຳໜ່າຍ ໃນຕະຫຼາດ EU ຫຼື ສົ່ງອອກຈາກ EU, ທີ່ມາຈາກ ຕອນດິນທີ່ປາສະຈາກການທຳລາຍປ່າໄມ້ ແລະ ໄດ້ຜະລິດຢ່າງຖືກຕ້ອງຕາມກົດໝາຍ (ອີງຕາມ ພັນທະຂອງເຂົາເຈົ້າ ຕາມມາດຕາ 16). ການກວດການີ້ ລວມມີ ການກວດກາ ຄວາມຖືກຕ້ອງ ຂອງບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ແລະ ການຈັດຕັ້ງປະຕິບັດ ໂດຍລວມຂອງ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ຕາມທີ່ໄດ້ບັນຍັດ ໃນລະບຽບການນີ້.

ສຳລັບ ຂໍ້ມູນເພີ່ມຕື່ມ ກ່ຽວກັບ ຂອບເຂດ ພັນທະ ຂອງອົງການຈັດຕັ້ງທີ່ຮັບຜິດຊອບ ຂອງບັນດາປະເທດສະມາຊິກຂອງ EU, ແມ່ນໃຫ້ອີງໃສ່ ມາດຕາ 18 ແລະ 19 ຂອງລະບຽບການນີ້.

### (18) ອົງການຈັດຕັ້ງທີ່ຮັບຜິດຊອບ ຈະນຳໃຊ້ ບັນດານິຍາມ ໃນລະບຽບການນີ້ບໍ່?

ອີງຕາມສະພາບການຕົວຈິງ ໃນການຈັດຕັ້ງປະຕິບັດ ລະບຽບການນີ້, ອົງການຈັດຕັ້ງທີ່ຮັບຜິດຊອບ ຂອງບັນດາປະເທດສະມາຊິກຂອງ EU **ຈະນຳໃຊ້ ບັນດານິຍາມ ທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງລະບຽບການນີ້**. ລະບຽບການນີ້ ແມ່ນມີຂໍ້ຜູກມັດ ທາງດ້ານກົດໝາຍ ແລະ ນິຕິກຳ ໃນ EU. ລະບຽບການນີ້ ຕ້ອງນຳໃຊ້ ແບບກົມກຽວເອກພາບ ໃນທົ່ວ 27 ປະເທດທີ່ເປັນສະມາຊິກຂອງ EU.

### (19) ຈະແຈ້ງ ຮູບແບບ ຂອງແຜນທີ່ເຂດແດນຂອງພື້ນທີ່ ໃນ ເຊັບໄຟ (shapefile) ແນວໃດ?

ຈະໄດ້ສ້າງ ຫຼັກການລະອຽດ ສຳລັບ ການດຳເນີນງານ ຂອງ ລະບົບຂໍ້ມູນ ໃນການຈັດຕັ້ງປະຕິບັດ ກົດໝາຍ. ຈະໄດ້ແຈ້ງ ແລະ ປຶກສາຫາລື ກັບ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການພັດທະນາຫຼັກການນີ້ ຜ່ານເວທີ ການປຶກສາຫາລື ກັບ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບ ການປ້ອງກັນ ແລະ ການຟື້ນຟູ ປ່າໄມ້ຂອງໂລກ. ຖ້າເປັນໄປໄດ້ ລະບົບຂໍ້ມູນນີ້ ຈະຊ່ວຍອຳນວຍຄວາມສະດວກ ໃຫ້ແກ່ການເຮັດວຽກຂອງຜູ້ປະກອບການ ໂດຍ **ອະນຸຍາດໃຫ້ ນຳໃຊ້ ຮູບແບບພື້ນທີ່ທີ່ຕັ້ງຂອງສິນຄ້າຢ່າງກ້ວາງຂວາງ ທີ່**

**ຈະອັບໂຫຼດ ໂດຍກົງເຂົ້າໃນລະບົບ ໃນເມື່ອມີການແຈ້ງ ແຜນທີ່ຂອບເຂດຂອງພື້ນທີ່ ເຂົ້າ ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.** ຈະໄດປັບປຸງ ລະບົບຂໍ້ມູນນີ້ ໃຫ້ທັນສະໃໝ ໃນແຕ່ລະໄລຍະ ໂດຍອີງໃສ່ ຄຳເຫັນຂອງ ບັນດາຜູ້ນຳໃຊ້.

**(20) ການຕິດຕາມແຫຼ່ງທີ່ມາຂອງສິນຄ້າ ໃນຕ່ອງໂສ້ການສະໜອງສິນຄ້າແມ່ນຫັຍງ?**

ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຕ້ອງໄດ້ເກັບ ຂໍ້ມູນຂ່າວສານ, ເອກະສານ ແລະ ຂໍ້ມູນ ແລະ ເກັບຮັກສາໄວ້ ຢ່າງນ້ອຍ ເປັນໄລຍະເວລາ 5 ປີ ເພື່ອພິສູດ ຄວາມຖືກຕ້ອງສອດຄ່ອງ ຕາມລະບຽບການນີ້ ເຊິ່ງໄດ້ ລະບຸ ເປັນລາຍການ ໃນມາດຕາ 9 ແລະ ເອກະສານຊ້ອນທ້າຍ II ລວມທັງ ທີ່ລະບຸໄວ້ ໃນ ມາດຕາ 2 (28) ກ່ຽວກັບ ຂໍ້ມູນ ທີ່ກ່ຽວຂ້ອງກັບ ພື້ນທີ່ທີ່ຕັ້ງຂອງສິນຄ້າ.

ປະກອບການ (ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ)  ຕ້ອງດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ກ່ຽວຂ້ອງກັບ ທຸກຜະລິດຕະພັນທີ່ກ່ຽວຂ້ອງ ທີ່ສະໜອງໃຫ້ໂດຍ ແຕ່ລະຜູ້ສະໜອງສະເພາະ. ສະນັ້ນ, ເຂົາເຈົ້າຕ້ອງ ມີລະບົບ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ເຊິ່ງລວມມີ ການເກັບຂໍ້ມູນ, ຂໍ້ມູນຂ່າວສານ ແລະ ເອກະສານທີ່ຕ້ອງການ ເພື່ອໃຫ້ສອດຄ່ອງ ຕາມຂໍ້ກຳນົດ ທີ່ໄດ້ບັນຍັດໃນ ມາດຕາ 9; ມາດຕາການ ການປະເມີນຄວາມສ່ຽງ ຕາມທີ່ໄດ້ ກຳນົດໄວ້ໃນມາດຕາ 10; ມາດຕາການການຫຼຸດຜ່ອນຄວາມສ່ຽງ ທີ່ໄດ້ ກຳນົດໄວ້ ໃນມາດຕາ 11. ຂໍ້ກຳນົດ ສຳລັບ ການສ້າງຕັ້ງ ແລະ ການບໍລະບັດຮັກສາ ລະບົບ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ການລາຍງານ ແລະ ການເກັບຮັກສາ ການບັນທຶກ ຂໍ້ມູນ ແມ່ນໄດ້ກຳນົດໄວ້ ໃນມາດຕາ 12. ຜູ້ປະກອບການ ຈະໄດ້ສື່ສານ ກັບຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ໃນຕ່ອງໂສ້ການສະໜອງສິນຄ້າທັດໄປ ກ່ຽວກັບ ຂໍ້ມູນທັງໝົດທີ່ມີຄວາມຈຳເປັນ ເພື່ອພິສູດວ່າ ໄດ້ດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ແລະ ສະແດງວ່າມີການພົບເຫັນ ສິນຄ້າ ທີ່ມີຄວາມສ່ຽງນ້ອຍເທົ່ານັ້ນ.

ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ໃນຕ່ອງໂສ້ການສະໜອງສິນຄ້າທີ່ທັດລົງໄປ ເຊິ່ງໄດ້ຮັບຂໍ້ມູນດັ່ງກ່າວ ຈະເປັນຂໍ້ມູນພື້ນຖານ ໃຫ້ແກ່ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຂອງເຂົາເຈົ້າເອງ ອີງຕາມຂໍ້ມູນທີ່ໄດ້ຮັບ, ແຕ່ຄວາມຈິງແລ້ວ ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ອື່ນໆ ທີ່ທັດຂື້ນໄປ ໃນມູນຄ່າຕ່ອງໂສ້ທຸລະກິດ ຕ້ອງດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເພື່ອສະແດງພັນທະ ຂອງຕົນເອງ.

ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຕ້ອງຮັບປະກັນວ່າ ຂໍ້ມູນ ກ່ຽວກັບ ແຫຼ່ງທີ່ມາຂອງສິນຄ້າ ແມ່ນໄດ້ສະໜອງໃຫ້ ອົງການຈັດຕັ້ງທີ່ຮັບຜິດຊອບ ໃນບັນດາປະເທດສະມາຊິກ ຂອງ EU ໂດຍຜ່ານບົດລາຍງານ  ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ປ້ອນເຂົ້າໃນ ລະບົບຖານຂໍ້ມູນ ແມ່ນຖືກຕ້ອງ.  ການພັດທະນາ ແລະ ການດຳເນີນງານ ຂອງ ລະບົບຖານຂໍ້ມູນ  ຕ້ອງສອດຄ່ອງກັບ ບົດບັນຍັດ ການປ້ອງກັບຂໍ້ມູນທີ່ກ່ຽວຂ້ອງ. ພ້ອມກັນນີ້,   **ລະບົບຖານຂໍ້ມູນ ຈະປະກອບມີ ມາດຕະການຄວາມປອດໄພ ເຊິ່ງຈະຮັບປະກັນ ຄວາມຊື່ສັດ ແລະ ຄວາມລັບຂອງຂໍ້ມູນທີ່ສົ່ງໃຫ້.**

**(21) ຈະດຳເນີນຕິດຕາມ ແຫຼ່ງທີ່ມາ ຂອງຜະລິດຕະພັນ ທີ່ມາຈາກຫຼາຍປະເທດ ໄດ້ແນວໃດ?**

ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ຕ້ອງຮັບປະກັນວ່າ ຂໍ້ມູນທີ່ຕ້ອງການ ໃນການຕິດຕາມແຫຼ່ງທີ່ມາຂອງສິນຄ້າ ທີ່ເຂົາເຈົ້າ ສະໜອງໃຫ້ ອົງການຈັດຕັ້ງທີ່ຮັບຜິດຊອບ ຂອງບັນດາປະເທດສະມາຊິກຂອງ EU ແມ່ນຕ້ອງຖືກຕ້ອງ , **ເຖິງແມ່ນວ່າ ຄວາມຍາວ ຫຼື ຄວາມສະຫຼັບຊັບຊ້ອນ ຂອງຕ່ອງໂສ້ການສະໜອງສິນຄ້າຈະແຕກຕ່າງກັນກໍ່ຕາມ.**

ຂໍ້ມູນແຫຼ່ງທີ່ມາຂອງສິນຄ້າ ສາມາດ ບັນທຶກໄວ້ໃນຕ່ອງໂສ້ການສະໜອງສິນຄ້າ. ຕົວຢ່າງ, ການຂົນສົ່ງ ໝາກຖົ່ວເຫຼືອງ ຈຳນວນຫຼາຍ ເຊິ່ງໄດ້ຊື້ມາຈາກ ຈຳນວນຕອນດິນ ຫຼາຍຮ້ອຍຕອນ ທີ່ມາຈາກຫຼາຍປະເທດ ແມ່ນຕ້ອງມີ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເຊິ່ງກວມເອົາບັນດາປະເທດ ທີ່ຜະລິດສິນຄ້າ ແລະ ຂໍ້ມູນພື້ນທີ່ທີ່ຕັ້ງຂອງສິນຄ້າ ສຳລັບ ແຕ່ລະຕອນດິນ ຈາກບັນດາປະເທດເຫຼົ່ານີ້ ທີ່ໄດ້ປະກອບສ່ວນເຂົ້າ ໃນການສົ່ງສິນຄ້າ.

**(22) ວັນທີ ຫຼື ກອບເວລາ ໃນການຜະລິດສິນຄ້າແມ່ນຫັຍງ?**

ປະກອບການ (ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ຕ້ອງໄດ້ເກັບຂໍ້ມູນ ກ່ຽວກັບ ວັນທີ ແລະ ກອບເວລາ ໃນການຜະລິດສິນຄ້າ ຕາມພັນທະທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງລະບຽບການນີ້. ຂໍ້ມູນນີ້ ແມ່ນຕ້ອງໄດ້ເກັບ ເພື່ອຢືນຢັນວ່າ ສິນຄ້າທີ່ກ່ຽວຂ້ອງເຫຼົ່ານີ້ ແມ່ນປາສະຈາກການທຳລາຍປ່າໄມ້. ຍ້ອນເຫດຜົນດັ່ງກ່າວ ວັນທີ ແລະ ກອບເວລາໃນການຜະລິດສິນຄ້າ ແມ່ນນຳໃຊ້ ສຳລັບ ບັນດາສິນຄ້າ ທີ່ລະບຽບການນີ້ ໄດ້ກວມເອົາ ທີ່ຈຳໜ່າຍໃນຕະຫຼາດ ຫຼື ສິນຄ້າ ທີ່ເອົາເຂົ້າມາຜະລິດ ແມ່ນໄດ້ກວມເອົາໂດຍ ລະບຽບການນີ້.

ສຳລັບ ບັນດາສິນຄ້າ ທີ່ນອກຈາກ ງົວ, ວັນທີຂອງການຜະລິດສິນຄ້າ ແມ່ນອີງໃສ່ **ວັນທີ ການເກັບກ່ຽວ ສິນຄ້າ**, ແລະ ກອບເວລາ ຂອງການຜະລິດ ແມ່ນອີງໃສ່ **ໄລຍະເວລາ/ໄລຍະ ການຜະລິດ** (ຕົວຢ່າງ, ກໍລະນີເປັນໄມ້, "ກອບເວລາຂອງການຜະລິດ" ແມ່ນອີງໃສ່ໄລຍະເວລາ ໃນການດຳເນີນການຂຸດຄົ້ນໄມ້).

ສຳລັບ ບັນດາຜະລິດຕະພັນທີ່ກ່ຽວຂ້ອງ ນອກຈາກສັດທີ່ຍັງມີຊີວິດ ໃນສິນຄ້າງົວ, ກອບເວລາຂອງການຜະລິດ ແມ່ນອີງໃສ່ ໄລຍະເວລາ ການມີຊີວິດຂອງງົວ ລວມທັງ ວັນທີ ໃນມື້ຂ້າງົວ.

ໝາຍເຫດ: ຂໍ້ມູນ ກ່ຽວກັບ ວັນທີ ຫຼື ກອບເວລາ ຂອງການຜະລິດ ຜະລິດຕະພັນ ທີ່ຜູ້ປະກອບການ ຕ້ອງການໄປຈຳໜ່າຍ ໃນຕະຫຼາດ ຫຼື ສົ່ງອອກ ແມ່ນບໍ່ຈຳເປັນຕ້ອງບັນທຶກເຂົ້າໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ແຕ່ຜູ້ປະກອບການຕ້ອງເກັບ, ຈັດ ແລະ ເກັບຮັກສາ ຂໍ້ມູນ ເປັນເວລາ ຫ້າປີ (ມາດຕາ 9).

**(23) ຈະຕິດຕາມແຫຼ່ງທີ່ມາຂອງ ສິນຄ້າງົວໄດ້ແນວໃດ?**

ອາດຈະມີຄວາມພຽງພໍ ເພື່ອສະໜອງພື້ນທີ່ທີ່ຕັ້ງຂອງສິນຄ້າງົວ ໃນຕອນດິນທີ່ງົວເກີດບໍ່? ງົວບາງໂຕອາດຈະມີການເຄື່ອນຍ້າຍ ໄປຫາໜຶ່ງ ຫຼື ຫຼາຍພື້ນທີ່ກ່ອນຈະຂ້າ.

ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ຜູ້ທີ່ຈຳໜ່າຍງົວ ໃນຕະຫຼາດ, ຜະລິດຕະພັນງົວ ຕ້ອງບັນທຶກພື້ນທີ່ທີ່ຕັ້ງ ຂອງຟາມລ້ຽງງົວ ທີ່ກ່ຽວຂ້ອງກັບ ການລ້ຽງ, ສະຖານທີ່ເກີດ, ຟາມທີ່ລ້ຽງເກືອ, ທົ່ງຫຍ້າລ້ຽງສັດ ແລະ ໂຮງຂ້າສັດ.

### (24) ຈະເຮັດຫັຍງ ຖ້າຜູ້ສະໜອງສິນຄ້າ ບໍ່ສະໜອງຂໍ້ມູນທີ່ຕ້ອງການໃຫ້?

ຖ້າປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ທີ່ຈຳໜ່າຍ ສິນຄ້າໃນຕະຫຼາດ ເຊິ່ງບໍ່ສາມາດໄດ້ຮັບ ຂໍ້ມູນທີ່ຕ້ອງການ ທີ່ກຳນົດໂດຍລະບຽບການນີ້ ນຳຜູ້ສະໜອງສິນຄ້າ, ເຂົາເຈົ້າຕ້ອງປະຕິເສດ ການຈຳໜ່າຍສິນຄ້າທີ່ກ່ຽວຂ້ອງນີ້ ໃນຕະຫຼາດ ຫຼື ປະເສດໃນການສົ່ງອອກ ເຊິ່ງຈະເປັນການ ລະເມີດຕໍ່ລະບຽບການນີ້ ເຊິ່ງຈະກ້າວໄປສູ່ ການລົງໂທດ.

### (25) ຈະຕ້ອງໄດ້ສະໜອງຈຸດພິກັດ ໃນຕອນດິນ ສຳລັບ ໃນປະເທດທີ່ມີຄວາມສ່ຽງນ້ອຍ?

**ບໍ່ມີຂໍ້ຍົກເວັ້ນ** ສຳລັບ ຂໍ້ກຳນົດ ການຕິດຕາມແຫຼ່ງທີ່ມາຂອງສິນຄ້າ ຜ່ານພື້ນທີ່ທີ່ຕັ້ງຂອງສິນຄ້າ. ຜູ້ປະກອບການຕ້ອງປະເມີນຄວາມສະຫຼັບຊັບຊ້ອນ ຂອງຕ່ອງໂສ້ການສະໜອງສິນຄ້າ ແລະ ຄວາມສ່ຽງຂອງການຫຼີກເວັ້ນ ແຫຼ່ງທີ່ມາຂອງສິນຄ້າ ໃນລະບຽບການນີ້ ແລະ ຄວາມສ່ຽງຂອງການປົນເປ ກັບຜະລິດຕະພັນ ທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ແຫຼ່ງທີ່ມາທີ່ມາຈາກ ປະເທດທີ່ມີຄວາມສ່ຽງຫຼາຍ ແລະ ຄວາມສ່ຽງມາດຕະຖານ (ມາດຕາ 13). ຖ້າຜູ້ປະກອບການໄດ້ຮັບ ຫຼື ຮັບຮູ້ ກ່ຽວກັບ ຂໍ້ມູນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຄວາມສ່ຽງ ທີ່ຜະລິດຕະພັນ ເຫຼົ່ານີ້ ບໍ່ຖືກຕ້ອງ ກັບ ລະບຽບການ ຫຼື ຫຼີກເວັ້ນ ລະບຽບການນີ້, ຜູ້ປະກອບການຕ້ອງ ປະຕິບັດພັນທະທັງໝົດ ຕາມມາດຕາ 10 ແລະ 11 ແລະ ຕ້ອງສື່ສານ ຂໍ້ມູນທີ່ກ່ຽວຂ້ອງ ທັນທີ ໃຫ້ອົງການຈັດຕັ້ງທີ່ຮັບຜິດຊອບ.

### (26) ຂໍ້ກຳນົດ ກ່ຽວກັບ ສິນຄ້າທີ່ຖືກຕ້ອງຕາມກົດໝາຍ ແມ່ນນຳໃຊ້ໄດ້ ສຳລັບ ທີ່ດິນທີ່ປາສະຈາກການທຳລາຍປ່າໄມ້ບໍ່?

ສິນຄ້າ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ ບໍ່ສາມາດ ຈຳໜ່າຍ ໃນຕະຫຼາດ ຫຼື ສົ່ງອອກ ຍົກເວັ້ນ ສິນຄ້າ ແລະ ຜະລິດຕະພັນເຫຼົ່ານີ້ ໄດ້ຜະລິດ ຢ່າງຖືກຕ້ອງຕາມ ນິຕິກຳທີ່ກ່ຽວຂ້ອງ ຂອງປະເທດທີ່ຜະລິດສິນຄ້າ ອີງຕາມຂໍ້ກຳນົດ ທີ່ໄດ້ລະບຸໄວ້ໃນມາດຕາ 3(b).

ບັນດາພັນທະໃນມາດຕາ 3 ແມ່ນສະສົມ: **ຂໍ້ກຳນົດ ສິນຄ້າທີ່ຖືກຕ້ອງຕາມກົດໝາຍ (ມາດຕາ 3(b)) ຕ້ອງໄດ້ຈັດຕັ້ງປະຕິບັດເພີ່ມໃສ່ ຂໍ້ກຳນົດ ສິນຄ້າທີ່ປາສະຈາກການທຳລາຍປ່າໄມ້** (ມາດຕາ3(a)) ແລະ ຂໍ້ກຳນົດ ສຳລັບ ສິນຄ້າ ຫຼື ຜະລິດຕະພັນ ທີ່ໄດ້ປະເມີນ ຢູ່ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ (ມາດຕາ3(c)).

### (27) ມີພັນທະຫັຍງແດ່ ສຳລັບ ປະເທດ ທີ່ບໍ່ແມ່ນສະມາຊິກຂອງ EU ບໍ່?

**ບໍ່ມີພັນທະ ທາງດ້ານນິຕິກຳ ສຳລັບ ປະເທດທີ່ບໍ່ແມ່ນສະມາຊິກ ຂອງ EU**. ລະບຽບການນີ້ ໄດ້ກຳນົດ ບັນດາພັນທະ ໃຫ້ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ (ເບິ່ງໝວດທີ 2 ຂອງລະບຽບການນີ້) ລວມທັງ ສຳລັບ ບັນດາປະເທດສະມາຊິກຂອງ EU ແລະ ອົງການຈັດຕັ້ງທີ່ຮັບຜິດຊອບຂອງເຂົາເຈົ້າ (ເບິ່ງໝວດທີ 3 ຂອງລະບຽບການນີ້).

ແຕ່ຢ່າງໃດກໍ່ຕາມ, ມີຫຼາຍປະເທດໃນທົ່ວໂລກ ໄດ້ດໍາເນີນ ການສົ່ງເສີມ ຕ່ອງໂສ້ການສະໜອງສິນຄ້າທີ່ ປາສະຈາກການທໍາລາຍປ່າໄມ້, ສ້າງຄວາມເຂັ້ມແຂງ ລະບົບ ຕິດຕາມແຫຼ່ງທີ່ມາຂອງສິນຄ້າໃຫ້ສັງຄົມຊາບ ກ່ຽວກັບ ບັນດາສິນຄ້າທີ່ກ່ຽວຂ້ອງ ແລະ ອື່ນໆ ເຊິ່ງຈະເປັນການໃຫ້ຄວາມສະດວກໃຫ້ ບໍລິສັດ ໃນການຈັດຕັ້ງປະຕິບັດ ລະບຽບການນີ້. ມີຄວາມຍິນດີ ໃນການພັດທະນາ ເພື່ອຊ່ວຍ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ໃນການຈັດຕັ້ງປະຕິບັດ ລະບຽບການນີ້.

**°°0°°**

## ຂອບເຂດຂອງສິນຄ້າ

### (28) ມີຜະລິດຕະພັນອັນໃດແດ່ ທີ່ໄດ້ກໍານົດໄວ້ໃນ ລະບຽບການນີ້?

ລະບຽບການນີ້ ແມ່ນນໍາໃຊ້ ສໍາລັບ ຜະລິດຕະພັນ ທີ່ໄດ້ກໍານົດໃນ ເອກະສານຊ້ອນ I ເທົ່ານັ້ນ. ຜະລິດຕະພັນ ທີ່ບໍ່ໄດ້ກໍານົດໃນເອກະສານຊ້ອນທ້າຍທີ I ແມ່ນບໍ່ ກ່ຽວຂ້ອງກັບ ຂໍ້ກໍານົດ ຂອງລະບຽບການນີ້ ມີແຕ່ສິນຄ້າ ທີ່ກ່ຽວຂ້ອງ ທີ່ຕົກຢູ່ໃນຂອບເຂດຂອງສິນຄ້າ ຂອງລະບຽບການນີ້. ຕົວຢ່າງ, ສະບູ່ ຈະບໍ່ໄດ້ກວມເອົາຢູ່ໃນ ລະບຽບການນີ້ ເຖິງແມ່ນວ່າ ນໍ້າມັນປາມໄດ້ບັນຈຸຢູ່ໃນສະບູ່.

ເຊັ່ນດຽວກັນ, ຜະລິດຕະພັນ ທີ່ມີລະຫັດ HS code ທີ່ບໍ່ມີໃນ ເອກະສານຊ້ອນທ້າຍ I, ແຕ່ອາດຈະມີສ່ວນປະກອບ ຫຼື ອົງປະກອບ ທີ່ໄດ້ມາຈາກ ສິນຄ້າ ທີ່ກວມຢູ່ໃນລະບຽບການນີ້ – ເປັນຕົ້ນແມ່ນ ລົດ ທີ່ມີເບາະນັ່ງເປັນໜັງສັດ ຫຼື ຕີນລົດທີ່ມາຈາກຢາງພາລາທໍາມະຊາດ – ແມ່ນບໍ່ກ່ຽວຂ້ອງກັບ ຂໍ້ກໍານົດ ຂອງລະບຽບການນີ້.

ໝາຍເຫດ: ລະບຽບການນີ້ ສະຫະພາບເອີຣົບ ຄາດຄະເນວ່າ ຈະໄດ້ປັບປຸງ ບັນຊີ ລາຍການຜະລິດຕະພັນ ທີ່ກ່ຽວຂ້ອງ ແລະ ການກໍານົດ ຜະລິດຕະພັນ ຕາມການມອບໝາຍ. ພ້ອມກັນນີ້, ຄະນະກໍາມະທິການຂອງ EU ຈະປະເມີນ ຄວາມຕ້ອງການ ແລະ ຄວາມເປັນໄປໄດ້ ໃນການສະເໜີສ້າງນິຕິກໍາ ໄປຍັງ ສະພາຂອງ EU ແລະ ຄະນະກໍາມະທິການ ຂອງ EU ເພື່ອຂະຫຍາຍ ຂອບເຂດຂອງລະບຽບການນີ້ ໄປຍັງ ສິນຄ້າອື່ນໆ ໂດຍອີງໃສ່ການປະເມີນຜົນກະທົບ ກ່ຽວກັບ ສິນຄ້າທີ່ກ່ຽວຂ້ອງ ກັບ ການທໍາລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້. ການທົບທວນຄືນ ຂອບເຂດຂອງສິນຄ້າ ຄັ້ງທໍາອິດແມ່ນ ຈະໄດ້ດໍາເນີນ ໃນໄລຍະ ສອງປີ ຫຼັງຈາກ ລະບຽບການມີຜົນສັກສິດ ໃນການຈັດຕັ້ງປະຕິບັດ.

**(29) ຈະເຮັດຫຍັງກັບ ລາຍການສິນຄ້າ ທີ່ບໍ່ໄດ້ບັນຈຸໃນລາຍການສິນຄ້າ ໃນລະບຽບການ?**

| | **ລາຍການສິນຄ້າ ໃນເອກະສານຊ້ອນທ້າຍ I** | **... ລາຍການສິນຄ້າ ບໍ່ຢູ່ໃນເອກະສານຊ້ອນທ້າຍ I** |
|---|---|---|
| **ສິນຄ້າທີ່ກ່ຽວຂ້ອງ ທີ່ກຳນົດ ໃນເອກະສານຊ້ອນທ້າຍ I ...** | ກ່ຽວຂ້ອງກັບ EUDR | ບໍ່ກ່ຽວຂ້ອງກັບ EUDR |
| **ສິນຄ້າອື່ນໆ ທີ່ບໍ່ໄດ້ກຳນົດ ໃນເອກະສານຊ້ອນທ້າຍ I ...** | ບໍ່ກ່ຽວຂ້ອງກັບ EUDR | ບໍ່ກ່ຽວຂ້ອງກັບ EUDR |

ຜະລິດຕະພັນ ທີ່ກຳນົດ ໃນເອກະສານຊ້ອນທ້າຍ I ເຊິ່ງບໍ່ໄດ້ ບັນຈຸ ຫຼື ກຳນົດໃນ ບັນດາສິນຄ້າ ໃນເອກະສານຊ້ອນທ້າຍ I ແມ່ນບໍ່ໄດ້ກວມເອົາຢູ່ໃນລະບຽບການນີ້.

**"ລະຫັດ" ກ່ອນລະຫັດ HS** ຂອງຜະລິດຕະພັນ ໃນ ເອກະສານຊ້ອນທ້າຍ I ໝາຍຄວາມວ່າ ຜະລິດຕະພັນທີ່ໄດ້ອະທິບາຍ ໃນເອກະສານຊ້ອນທ້າຍ ແມ່ນ "ຄ້າຍຄືກັນ" ກັບ ທຸກຜະລິດຕະພັນ ເຊິ່ງສາມາດຈັດປະເພດ ພາຍໃຕ້ລະຫັດ HS. ຕົວຢ່າງ, ລະຫັດ 9401 ອາດຈະກວມເອົາຕັ່ງ ທີ່ຜະລິດຈາກວັດຖຸດິບ ທີ່ບໍ່ແມ່ນໄມ້, ແຕ່ ມີແຕ່ຕັ່ງໄມ້ເທົ່ານັ້ນ ແມ່ນກ່ຽວຂ້ອງກັບ ຂໍ້ກຳນົດຂອງລະບຽບການນີ້.

**(30) ລະບຽບການນີ້ ໄດ້ນຳໃຊ້ ສຳລັບ ປະລິມານ ຫຼື ມູນຄ່າ ຂອງສິນຄ້າບໍ່?**

**ບໍ່ມີລະດັບມາດຕະຖານ ຂອງບໍລິມາດ ຫຼື ມູນຄ່າ ຂອງສິນຄ້າທີ່ກ່ຽວຂ້ອງ ຫຼື ຜະລິດຕະພັນທີ່ກ່ຽວຂ້ອງ, ລວມທັງຢູ່ພາຍໃນການປຸງແຕ່ງຜະລິດຕະພັນ, ເຊິ່ງ ລະບຽບການນີ້ ບໍ່ມີຜົນບັງຄັບໃຊ້.**

ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ທີ່ ຈຳໜ່າຍ ຫຼື ສະໜອງສິນຄ້າ ໃນຕະຫຼາດ ຫຼື ສົ່ງອອກ ຜະລິດຕະພັນທີ່ກ່ຽວຂ້ອງ ທີ່ກວມເອົາຢູ່ໃນ ເອກະສານຊ້ອນທ້າຍ I, ເຖິງຈະເປັນປະລິມານ ແມ່ນກ່ຽວຂ້ອງກັບ ພັນທະຂອງລະບຽບການນີ້.

**(31) ຈະເຮັດຫຍັງກັບ ຜະລິດຕະພັນທີ່ຜະລິດໃນ EU?**

ຜະລິດຕະພັນທີ່ຜະລິດ ຢູ່ໃນ EU ແມ່ນ **ກ່ຽວຂ້ອງກັບ ຂໍ້ກຳນົດອັນດຽວກັນ ກັບ ຜະລິດຕະພັນ ທີ່ຜະລິດຢູ່ນອກອານາເຂດຂອງ EU**. ລະບຽບການນີ້ ແມ່ນ ມີຜົນບັງຄັບໃຊ້ ສຳລັບ ຜະລິດຕະພັນ ທີ່ໄດ້ກຳນົດໃນ ເອກະສານຊ້ອນທ້າຍ I, ເຖິງວ່າ ຈະຜະລິດຢູ່ໃນ EU ຫຼື ນຳເຂົ້າ.

ຕົວຢ່າງ, ຖ້າບໍລິສັດຂອງ EU ຜະລິດໂຊໂກແລັດ  (ລະຫັດ 1806, ທີ່ໄດ້ກຳນົດຢູ່ໃນ ເອກະສານຊ້ອນທ້າຍ I), ແມ່ນຈະພິຈາລະນາ ເປັນຜູ້ປະກອບການ ທີ່ກ່ຽວຂ້ອງກັບ ພັນທະຂອງລະບຽບການນີ້, ເຖິງແມ່ນວ່າ ແປ້ງໂກໂກ້ ທີ່ນຳໃຊ້ ໃນໂຊໂກແລັດ ໄດ້ຈຳໜ່າຍໃນຕະຫຼາດ ແລະ ຕ້ອງປະຕິບັດຕາມຂໍ້ກຳນົດ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ (ເບິ່ງຄຳຖາມ 38 ກ່ຽວກັບ ຜູ້ປະກອບການ ໃນຕ່ອງໂສ້ການສະໜອງສິນຄ້າ).

### (32) ລະບຽບການນີ້ ຈະນຳໃຊ້ແນວໃດ ສຳລັບ ໄມ້ເພື່ອການຫຸ້ມຫໍ່?

ຕົວຢ່າງ, ໃນກໍລະນີ ທີ່ຜູ້ຜະລິດ ຂາຍສິນຄ້າຫຸ້ມຫໍ່ ໃຫ້ຜູ້ຜະລິດ ຜະລິດຕະພັນ (ເພື່ອປ້ອງກັນ ຜະລິດຕະພັນສຸດທ້າຍ - ທີ່ບໍ່ໄດ້ຂາຍເປັນຜະລິດຕະພັນສຸດທ້າຍໃຫ້ລູກຄ້າ), ເນື້ອໃນບົດ ລະບຽບການ **"ບໍ່ໄດ້ລວມ ວັດຖຸຫຸ້ມຫໍ່ ທີ່ນຳໃຊ້ເປັນ ວັດຖຸຫຸ້ມຫໍ່ ເພື່ອຊ່ວຍ, ປ້ອງກັນ ແລະ ຮັບນ້ຳໜັກ ຜະລິດຕະພັນອື່ນໆ ທີ່ວາງຂາຍໃນຕະຫຼາດ" ໃນເອກະສານຊ້ອນທ້າຍ I ພາຍໃຕ້ ລະຫັດໄມ້ HS 4415** ແມ່ນຕ້ອງເຂົ້າໃຈດັ່ງລຸ່ມນີ້:

ຖ້າວັດສະດຸຫຸ້ມຫໍ່ທີ່ກ່ຽວຂ້ອງ ທີ່ຈຳໜ່າຍໃນຕະຫຼາດ ຫຼື ສົ່ງອອກ ເປັນຜະລິດຕະພັນ ຫຼັກ (ເຊັ່ນ: ວັດສະດຸຫຸ້ມຫໍ່ ທີ່ເປັນຜະລິດຕະພັນດ້ວຍຕົນເອງ), ແທນທີ່ຈະເປັນ ວັດສະດຸຫຸ້ມຫໍ່ ຜະລິດຕະພັນອື່ນ, ແມ່ນມີຜົນບັງຄັບໃຊ້ ສຳລັບລະບຽບການນີ້ ແລະ ສະນັ້ນ ຕ້ອງໄດ້ບັນລຸ ຕາມຂໍ້ກຳນົດ ຂອງການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

ຖ້າວັດສະດຸຫຸ້ມຫໍ່, ທີ່ໄດ້ຈັດ ເລກລະຫັດ  HS 4415, ທີ່ນຳໃຊ້ເພື່ອຊ່ວຍ, ປ້ອງກັນ ຫຼື ຮັບນ້ຳໜັກ ຜະລິດຕະພັນອື່ນ ແມ່ນ  ບໍ່ມີຜົນບັງຄັບໃຊ້ ສຳລັບລະບຽບການນີ້.

ຖ້າວັດສະດຸຫຸ້ມຫໍ່, ທີ່ນຳໃຊ້ ທີ່ນຳໃຊ້ເປັນເຄື່ອງຫຸ້ມຫໍ່ ເພື່ອຊ່ວຍ, ປ້ອງກັນ ຫຼື ຮັບນ້ຳໜັກ ຜະລິດຕະພັນອື່ນ  ທີ່ຈຳໜ່າຍໃນຕະຫຼາດ ບໍ່ເປັນຜະລິດຕະພັນທີ່ກ່ຽວຂ້ອງ ຢູ່ພາຍໃນ ເອກະສານຊ້ອນທ້າຍ I ຂອງລະບຽບການນີ້, ເຖິງແມ່ນວ່າ ຈະມີເລກລະຫັດ HS ຈະຕົກຖືກຕົກໄປ.
ການແນະນຳ ຄູ່ມືຜູ້ນຳໃຊ້ ໃນການສິນສິ່ງ ແມ່ນຕົກຢູ່ໃນຂໍ້ຍົກເວັ້ນ ເວັ້ນເສຍແຕ່ ໄດ້ຊື້ ເປັນຜະລິດຕະພັນສະເພາະຕົວ.

### (33) ເຈັ້ຍ/ເຈັ້ຍກະດາດທີ່ຜະລິດຄືນໃໝ່ ຈະມີຜົນບັງຄັບໃຊ້ ພາຍໃຕ້ຂອບເຂດ ຂອງຜະລິດຕະພັນໃນລະບຽບການນີ້ບໍ່?

ຜະລິດຕະພັນ ເຈັ້ຍ/ເຈັ້ຍກະດາດທີ່ຜະລິດຄືນໃໝ່ສ່ວນຫຼາຍ ທີ່ບັນຈຸເປີເຊັນຈຳນວນນ້ອຍ ຂອງວັດຖຸດິບເຈັ້ຍກະກາດ ຫຼື ເປັນເຈັ້ຍ/ເຈັ້ຍທີ່ຜະລິດນຳໃຊ້ຄືນ ຂອງລູກຄ້າໃນເມື່ອກ່ອນ (ຕົວຢ່າງ, ເສດເຈັ້ຍກະດາດທີ່ຖິ້ມ ຈາກ ແກັດເຈັ້ຍ) ເພື່ອສ້າງຄວາມແຂງແຮງ ຂອງໄຟເບີເຈັ້ຍ.

ເອກະສານຊ້ອນທ້າຍ I ເນັ້ນວ່າ ລະບຽບການນີ້ **ບໍ່ມີຜົນບັງຄັບໃຊ້ ສຳລັບສິນຄ້າ ທີ່ບໍ່ໄດ້ຜະລິດທັງໝົດ ຈາກວັດຖຸດິບ ເຊິ່ງມີວົງຈອນຊີວິດຂອງຕົນເອງ ແລະ ຖ້າບໍ່ດັ່ງນັ້ນ ເຊິ່ງໄດ້ຖິ້ມ ເປັນສິ່ງເສດເຫຼືອ** ຕາມທີ່ກຳນົດໃນມາດຕາ 3, ຂໍ້ (1), ຂອງ ລະບຽບການ 2008/98/EC. ສະນັ້ນ, ຈຶ່ງບໍ່ມີພັນທະ ມີຜົນບັງຄັບໃຊ້ ສຳລັບ ລະບຽບການນີ້ ທີ່ກ່ຽວຂ້ອງກັບ ວັດຖຸ ຜະລິດຄືນໃໝ່.

ກົງກັນຂ້າມ, **ຖ້າສິນຄ້າບັນຈຸ ເປັນເປີເຊັນ ໃນວັດຖຸ ທີ່ບໍ່ແມ່ນຜະລິດຕະພັນ ທີ່ຜະລິດຄືນໃໝ່ ແມ່ນກ່ຽວຂ້ອງກັບ ຂໍ້ກຳນົດຂອງລະບຽບການນີ້** ແລະຕ້ອງໄດ້ຕິດຕາມແຫຼ່ງທີ່ມາຂອງ ວັດຖຸທີ່ບໍ່ໄດ້ຜະລິດຄືນໃໝ່ດັ່ງກ່າວ ໄປຫາ ຕອນດິນຕົ້ນກຳເນີດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ.

### (34) ເລກລະຫັດ CN ແລະ HS ແມ່ນຫັຍງ ແລະ ຈະຕ້ອງນຳໃຊ້ ລະຫັດນີ້ໄດ້ແນວໃດ?

ການຄັດເລືອກຊື່ ລາຍການສິນຄ້າ ທີ່ຄຸ້ມຄອງໂດຍ ສົນທິສັນຍາ ວ່າດ້ວຍ ການກຳນົດສິນຄ້າແບບກົມກຽວ ແລະ ລະບົບການວາງເລກລະຫັດ ໂດຍທົ່ວໄປແລ້ວ ຮັບຮູ້ເປັນ **"ການຄັດເລືອກຊື່ ລາຍການງສິນຄ້າ HS "**, ແມ່ນ ການຄັດເລືອກຊື່ ລາຍການສິນຄ້າຈຸດປະສົງຂອງສາກົນ ເຊິ່ງໄດ້ຊີ້ແຈງ ພາຍໃຕ້ ການອຸປະຖັມ ຂອງ ອົງການພາສີໂລກ (WCO). ການຄັດເລືອກຊື່ ລາຍການສິນຄ້າໄດ້ຈັດເປັນ ເລກລະຫັດ ຫົກຕົວເລກ ເພື່ອຈັດປະເພດສິນຄ້າ ແລະ ມີຜົນບັງຄັບໃຊ້ທົ່ວໂລກ. ບັນດາປະເທດ/ ບັນດາພາກພື້ນສາມາດຕື່ມ ຕົວເລກເພີ່ມ ໃສ່ ຫົກຕົວເລກ ການຄັດເລືອກຊື່ ລາຍການສິນຄ້າ HS ເປັນການຈັດແບ່ງປະເພດສິນຄ້າທີ່ລະອຽດ.

**ການຄັດເລືອກຊື່ ລາຍການສິນຄ້າ ແບບປະສົມ (ເລກລະຫັດ CN)** ຂອງສະຫະພາບເອີຣົບ ແມ່ນ ແປດຕົວເລກລະຫັດສິນຄ້າ ເຊິ່ງໄດ້ແບ່ງອອກຊື່ ລາຍການສິນຄ້າ HS ຂອງໂລກ ມາເປັນສິນຄ້າສະເພາະ ເພື່ອຕອບສະໜອງຕາມ ຄວາມຕ້ອງການຂອງ ວົງຄະນະຍາດ ຂອງ EU.

ເລກລະຫັດ CN ເປັນພື້ນຖານ ໃຫ້ແກ່ການແຈ້ງ ສິນຄ້າ ສຳລັບ ການນຳເຂົ້າ ເຂົ້າໃນຕະຫຼາດ EU ຫຼື ສົ່ງອອກຈາກ EU, ແລະ ຢູ່ພາຍໃນ ສະຖິຕິການຄ້າຂອງ EU. ສິນຄ້າ ແລະ ຜະລິດຕະພັນ ໃນເອກະສານຊ້ອນທ້າຍ I ຂອງລະບຽບການນີ້ ແມ່ນ ໄດ້ຈັດອອກເປັນ ເລກລະຫັດ CN. ຜະລິດຕະພັນທີ່ກ່ຽວຂ້ອງ ໃນເອກະສານຊ້ອນທ້າຍ I ຂອງລະບຽບການນີ້ ແມ່ນໄດ້ຈັດອອກເປັນ ການຄັດເລືອກຊື່ ລາຍການສິນຄ້າ ແບບປະສົມ ທີ່ໄດ້ກຳນົດໃນ ເອກະສານຊ້ອນທ້າຍ I ຂອງລະບຽບການ (EEC) No 2658/87.

ໃນເວລານຳເຂົ້າສິນຄ້າ, ໃນເມື່ອປ່ອຍສິນຄ້າ ອອກຈຳໜ່າຍແບບເສລີ ຕາມທີ່ໄດ້ກຳນົດໃນ ມາດຕາ 201 ຂອງລະບຽບການ ຂອງ EU ເລກທີ 952/2013, ເລກລະຫັດ CN ສາມາດແບ່ງອອກ ເປັນສິບຕົວເລກລະຫັດ TARIC ໂດຍສະເພາະໄດ້ສ້າງຂຶ້ນເພື່ອແກ້ໄຂ ຄວາມຕ້ອງການ ທາງດ້ານນິຕິກຳຂອງ EU. ໃນເມື່ອແຈ້ງສິນຄ້າ ສຳລັບ ຂັ້ນຕອນສົ່ງອອກ ຕາມທີ່ໄດ້ກຳນົດໃນ ມາດຕາ 269 ຂອງລະບຽບການ ຂອງ EU ເລກທີ 952/2013, ການຈັດແບ່ງຂັ້ນສຸດທ້າຍ ແມ່ນສາມາດ ແບ່ງອອກເປັນແປດຕົວເລກຂອງ ເລກລະຫັດ CN.

ສະມາຊິກ ຜູ້ສະໜອງສິນຄ້າ ຕ້ອງໄດ້ຈັດ ຜະລິດຕະພັນ ຂອງຕົນເອງ ອີງຕາມ ເອກະສານຊ້ອນທ້າຍ I ຕາມບົນພື້ນຖານ ລະບຽບການ CN  (ລະບຽບການຂອງ ຄະນະກໍາມະທິການ (EEC) ເລກທີ 2658/87 ວ່າດ້ວຍ ອາກອນ ແລະ ສະຖິຕິ ລາຍຊື່ລາຍການສິນຄ້າ ແລະ ວ່າດ້ວຍ ອາກອນພາສີປົກກະຕິ) ທີ່ສ້າງຂື້ນ ວ່າລະບຽບການ ມີຜົນບັງຄັບໃຊ້ ສໍາລັບ ຜະລິດຕະພັນເຫຼົ່ານີ້. ເລກລະຫັດ HS ສາມາດປັບປຸງທຸກໆຫ້າປີ. ລະບຽບການ CN ຂອງ EU ແມ່ນຖືກຮັບຮອງໃນແຕ່ລະປີ ເພື່ອໃຫ້ສອດຄ່ອງ ຕາມການສະເໜີໃຫ້ປັບປຸງ.
ເບິ່ງຂໍ້ມູນລະອຽດ: ລະບຽບການ ຂອງຄະນະກໍາມະທິການຂອງ EEC ເລກທີ 2658/87 ລົງວັນທີ  23 ກໍລະກົດ 1987 ວ່າດ້ວຍ ອາກອນ ແລະ ສະຖິຕິລາຍຊື່ສິນຄ້າ ແລະ ອາກອນພາສີ ປົກກະຕິ.

°°0°°

# ບັນດາພັນທະຂອງລະບຽບການ

### (35) ແມ່ນໃຜ ຖືກພິຈາລະນາເປັນຜູ້ປະກອບການ?

ຕາມທີ່ໄດ້ກໍານົດໃນມາດຕາ 2(15) ຂອງລະບຽບການນີ້, ຜູ້ປະກອບການແມ່ນ ບຸກຄົນທົ່ວໄປ ຫຼື ນິຕິບຸກຄົນ ຜູ້ທີ່ຈໍາໜ່າຍສິນຄ້າໃນຕະຫຼາດ (ລວມທັງຜ່ານການນໍາເຂົ້າ) ຫຼື ສົ່ງອອກ ໃນຮູບແບບຂອງ ກິດຈະກໍາທາງດ້ານການຄ້າ.

ນິຍາມນີ້ ກໍ່ໄດ້ກວມເອົາ ບັນດາບໍລິສັດ ທີ່ຜະລິດໜຶ່ງຜະລິດຕະພັນ ໃນເອກະສານຊ້ອນທ້າຍ I (ເຊິ່ງໄດ້ຜ່ານການປະເມີນ ຄວາມຖືກຕ້ອງຂອງສິນຄ້າ) ເຂົ້າໃນການເປັນ ຜະລິດຕະພັນອື່ນ ໃນເອກະສານຊ້ອນທ້າຍ I. ຕົວຢ່າງ, ຖ້າບໍລິສັດ A, ທີ່ຢູ່ໃນ EU, ນໍາເຂົ້າ ນໍ້າມັນເບີໂກໂກ້ (ເລກລະຫັດ HS 1804, ທີ່ກໍານົດໃນເອກະສານຊ້ອນທ້າຍ I), ແລະ ບໍລິສັດ B, ກໍ່ຢູ່ໃນ EU, ນໍາໃຊ້ ນໍ້າມັນເບີໂກໂກ້ ເພື່ອຜະລິດ ໂຊໂຄແລັດ  (ເລກລະຫັດ HS 1806, ທີ່ກໍານົດໃນເອກະສານຊ້ອນທ້າຍ I) ແລະ ໃນເວລາຈໍາໜ່າຍສິນຄ້າເຫຼົ່ານີ້ໃນຕະຫຼາດ, ທັງບໍລິສັດ  A ແລະ B ສາມາດພິຈາລະນາເປັນຜູ້ປະກອບການ ພາຍໃຕ້ລະບຽບການນີ້.

ຜູ້ປະກອບການ ທີ່ຈໍາໜ່າຍສິນຄ້າໃນຕະຫຼາດ ທີ່ໄດ້ກໍານົດ ໃນເອກະສານຊ້ອນທ້າຍ ເຊິ່ງບໍ່ໄດ້ ດໍາເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ກ່ອນບາດກ້າວ ຂອງ ຕ່ອງໂສ້ການສະໜອງສິນຄ້າ (ຕົວຢ່າງ ຜູ້ນໍາເຂົ້າ ຊື້ໝາກໂກໂກ້) ບໍ່ຈໍາກັດຂະໜາດຂອງສິນຄ້າ  ແມ່ນມີ ພັນທະສົ່ງບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

### (36) "ຮູບແບບ ກິດຈະກໍາ ທາງດ້ານການຄ້າ" ແມ່ນຫັຍງ?

ກິດຈະກໍາທາງດ້ານການຄ້າ ແມ່ນໄດ້ເຂົ້າໃຈ ເປັນ ການດໍາເນີນກິດຈະກໍາ ໃນສະພາບການ ທາງທຸລະກິດທີ່ກ່ຽວຂ້ອງ.

ນິຍາມລວມ ຂອງ "ຜູ້ປະກອບການ" (ມາດຕາ 2.15) ແລະ ຂອງ 'ຮູບແບບກິດຈະກໍາ ທາງດ້ານການຄ້າ' (ມາດຕາ 2.19) ໝາຍເຖິງທຸກບຸກຄົນ, ທີ່ຈໍາໜ່າຍ ຜະລິດຕະພັນທີ່ກ່ຽວຂ້ອງ ໃນຕະຫຼາດ ເພື່ອຂາຍ (ທີ່ມີ ຫຼື ບໍ່ມີການປຸງແຕ່ງ) ຫຼື ເປັນຂອງຂັວນ ເພື່ອ

ຈຸດປະສົງໃນການປຸງແຕ່ງ ຫຼື ຈ່າຍໜ່າຍ ໃຫ້ລູກຄ້າ ທີ່ດຳເນີນການຄ້າ ຫຼື ບໍ່ດຳເນີນການຄ້າ, ຫຼື ເພື່ອນຳໃຊ້ ໃນສະຖານະ ເປັນກິດຈະກຳ ທາງດ້ານການຄ້າ ແມ່ນກ່ຽວຂ້ອງກັບ ຂໍ້ກຳນົດໃນການປະເມີນ ຄວາມຖືກຕ້ອງຂອງສິນຄ້າແລະ ການສົ່ງ ບົດລາຍງານການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

### (37) 'ນິຕິກຳທີ່ກ່ຽວຂ້ອງ ຂອງປະເທດທີ່ຜະລິດສິນຄ້າ ແມ່ນຫັຍງ?

ສິນຄ້າ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ ສາມາດຈຳໜ່າຍ ໃນຕະຫຼາດ EU ຖ້າສິນຄ້າ ແລະ ຜະລິດຕະພັນເຫຼົ່ານີ້ ປາສະຈາກການທຳລາຍປ່າໄມ້ ແລະ ຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງສອດຄ່ອງ ຕາມນິຕິກຳທີ່ກ່ຽວຂ້ອງ ຂອງປະເທດທີ່ຜະລິດສິນຄ້າ, ມາດຕາ 3 (b), ມາດຕາ 2 ຂອງ EUDR.

"ນິຕິກຳທີ່ກ່ຽວຂ້ອງ " ອາດຈະກວມເອົາ, ສິ່ງອື່ນໆ, ບັນດາກົດໝາຍຂອງປະເທດ (ລວມທັງ ລະບຽບການ) ແລະ ນິຕິສາດ ລວມທັງ ກົດໝາຍສາກົນ ທີ່ກ່ຽວຂ້ອງກັບ ກົດໝາຍພາຍໃນປະເທດ. ລະບຽບການນີ້ ສະເໜີ ລາຍຊື່ຂົງເຂດ ນິຕິກຳ ໂດຍບໍ່ມີ ການກຳນົດ ນິຕິກຳສະເພາະ ເຊິ່ງ ອາດຈະມີຄວາມແຕກຕ່າງກັນ ຈາກປະເທດໜຶ່ງໄປຫາປະເທດອື່ນ ແລະ ອາດຈະມີການປັບປຸງ. ອີງໃສ່ນິຍາມ, ນິຕິກຳ ໄດ້ກຳນົດເປັນຕົວໜັງສື (a) ຫາ (h) ທີ່ມີຄວາມເຂົ້າໃຈ ເຊື່ອມໂຍງກັບ ຂົງເຂດຂອງການຜະລິດ. ສຳລັບນິຕິກຳ ວ່າດ້ວຍ ການປ້ອງກັນສິ່ງແວດລ້ອມ, ຄວາມໝາຍ ແລະ ຈຸດປະສົງ ທີ່ກຳນົດໃນມາດຕາ 1 ຂອງ EUDR ເຊິ່ງຕ້ອງໄດ້ພິຈາລະນາ. ສະນັ້ນ, ນິຕິກຳ ທີ່ກ່ຽວຂ້ອງກັບ ການປົກປັກຮັກສາປ່າໄມ້, ການຫຼຸດຜ່ອນທາດອາຍຜິດເຮືອນແກ້ວ ຫຼື ການອະນຸລັກຊີວະນາໆພັນ ແມ່ນກ່ຽວຂ້ອງ ກັບ ລະບຽບການນີ້.
ເອກະສານທີ່ກ່ຽວຂ້ອງ ທີ່ຕ້ອງການ ສຳລັບ ຈຸດປະສົງ ໃນການປະເມີນຄວາມສ່ຽງ, ມາດຕາ 9 (1) (h), 10 EUDR. ຕົວຢ່າງ, ເອກະສານເຫຼົ່ານີ້ ອາດຈະປະກອບມີ ເອກະສານທາງການ ຈາກອົງການຈັດຕັ້ງລັດ, ຂໍ້ຕົກລົງຂອງສັນຍາ, ຄຳຕັດສິນຂອງສານ ຫຼື ການປະເມີນຜົນກະທົບ ແລະ ການດຳເນີນການກວດສອບ. ໃນທຸກກໍລະນີ, ຜູ້ປະກອບການ ຕ້ອງໄດ້ ກວດກາເອກະສານເຫຼົ່ານີ້ ທີ່ສາມາດກວດກາຢັ້ງຢືນຄວາມຖືກຕ້ອງ ແລະ ມີຄວາມເຊື່ອຖື ໂດຍພິຈາລະນາ ຄວາມສ່ຽງ ຂອງ ການຮັບສິນບົນ ຂອງປະເທດທີ່ຜະລິດສິນຄ້າ.

ຄະນະກຳມະທິການ ຂອງ EU ຈະອອກບົດແນະນຳ ທາງດ້ານນິຕິກຳ ສະເພາະ ໃນເວລາທີ່ເໝາະສົມ.

### (38) ບັນດາພັນທະຂອງຜູ້ປະກອບການ ໃນຕ່ອງໂສ້ການສະໜອງສິນຄ້າ ຂັ້ນທັດລົງໄປ ມີຫັຍງແດ່?

ຜູ້ປະກອບການ ໃນຕ່ອງໂສ້ການສະໜອງສິນຄ້າ ຂັ້ນທັດລົງໄປ ແມ່ນ ຜູ້ປະກອບການ ທີ່ຫັນປ່ຽນ ຜະລິດຕະພັນ ທີ່ກຳນົດໃນເອກະສານຊ້ອນທ້າຍ I (ເຊິ່ງໄດ້ຜ່ານການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ມາແລ້ວ) ມາເປັນ ບັນຊີ ຜະລິດຕະພັນອື່ນ ໃນເອກະສານຊ້ອນທ້າຍ I. ພັນທະຂອງເຂົາເຈົ້າ ແມ່ນຂຶ້ນກັບ ວ່າເຂົາເປັນ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ຫຼືບໍ່.

ໃນເມື່ອປ້ອນ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ລົງໃນລະບົບຖານຂໍ້ມູນ, ຜູ້ປະກອບການ ທີ່ບໍ່ແມ່ນ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃນຕ່ອງໂສ້ການສະໜອງສິນຄ້າ ຂັ້ນລຸ່ມ ອາດຈະອ້າງອີງໃສ່ ການປະເມີນ ຄວາມຖືກຕ້ອງ ຂອງສິນຄ້າ ທີ່ໄດ້ດຳເນີນ ໄປແລ້ວໃນເບື້ອງຕົ້ນ ໃນຕ່ອງໂສ້ການສະໜອງສິນຄ້າ ໂດຍ ບັນທຶກເລກທີອ້າງອີງ ທີ່ກ່ຽວຂ້ອງ ສຳລັບ ສິ້ນສ່ວນຂອງ ຜະລິດຕະພັນຂອງເຂົາເຈົ້າ ທີ່ກ່ຽວຂ້ອງກັບ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ. ແຕ່ຢ່າງໃດກໍ່ຕາມ, ເຂົາເຈົ້າ ມີພັນທະ ເພື່ອຮັບປະກັນວ່າ ໄດ້ມີການດຳເນີນ ການປະເມີນສິນຄ້າ ຄວາມຖືກຕ້ອງຂອງສິນຄ້າ ແລະ ຮັບຜິດຊອບ ຕໍ່ດ້ານນິຕິກຳ ໃນກໍລະນີ ມີການລະເມີດ ລະບຽບການ. ສຳລັບ ສິ້ນສ່ວນຂອງຜະລິດຕະພັນ ທີ່ບໍ່ກ່ຽວຂ້ອງກັບ ການປະເມີນ ຄວາມຖືກຕ້ອງຂອງ ສິນຄ້ານັ້ນ, ຜູ້ປະກອບການ ທີ່ບໍ່ແມ່ນ ວິະສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແມ່ນຕ້ອງ ດຳເນີນ ການປະເມີນ ຄວາມ ຖືກຕ້ອງຂອງສິນຄ້າ ຢ່າງຄົບຖ້ວນ ແລະ ສົ່ງບົດລາຍງານ ການປະເມີນສິນຄ້າ ຄວາມຖືກຕ້ອງຂອງສິນຄ້າ.

ຜູ້ປະກອບການ ທີ່ແມ່ນ ວິະສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນຕ່ອງໂສ້ການສະໜອງສິນຄ້າ ທີ່ຫັດລົງໄປ ແມ່ນ ກ່ຽວຂ້ອງກັບ ພັນທະອັນດຽວກັນ ເຊິ່ງເປັນຜູ້ປະກອບການ ທີ່ຮັບຜິດຊອບທາງດ້ານນິຕິກຳ ໃນກໍລະນີ ມີການລະເມີດ ລະບຽບ ການນີ້. ແຕ່ຢ່າງໃດກໍ່ຕາມ, ກ່ຽບກັບ ສິ້ນສ່ວນ ຂອງຜະລິດຕະພັນຂອງເຂົາເຈົ້າ ເຊິ່ງມີສ່ວນກ່ຽວຂ້ອງກັບ ການປະເມີນ ຄວາມ ຖືກຕ້ອງຂອງສິນຄ້າ, ເຂົາເຈົ້າຕ້ອງ a) ອາດຈະ ດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ສຳລັບ ສິ້ນສ່ວນ ຂອງ ຜະລິດຕະ ພັນຂອງເຂົາເຈົ້າ ທີ່ກ່ຽວຂ້ອງກັບ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ດຳເນີນໄປແລ້ວ; b) ຫຼື ບໍ່ໄດ້ປ້ອນ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເຂົ້າໃນລະບົບ ຖານຂໍ້ມູນ. ແຕ່ເຂົາເຈົ້າ ຕ້ອງສະໜອງ ເລກທີ ຂອງການປະເມີນ ຄວາມ ຖືກຕ້ອງຂອງສິນຄ້າ ທີ່ໄດ້ຮັບມາ ຈາກການສະໜອງສິນໃຫ້ໃນຄັ້ງກ່ອນ. ສຳລັບ ສິ້ນສ່ວນ ຂອງຜະລິດຕະພັນທີ່ກ່ຽວຂ້ອງ ເຊິ່ງບໍ່ ໄດ້ກ່ຽວຂ້ອງກັບ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ຜູ້ປະກອບການ SME ຕ້ອງດຳເນີນ ການປະເມີນ ສິນຄ້າ ທີ່ ປາສະຈາກການທຳລາຍປ່າໄມ້ ຢ່າງຄົບຖ້ວນ ແລະ ສົ່ງບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

### (39) ລະບຽບການນີ້ມີຜົນບັງຄັບໃຊ້ ສຳລັບ ການສົ່ງອອກ ແນວໃດ?

ລະບຽບການນີ້ມີຜົນບັງຄັບໃຊ້ ສຳລັບ ທັງການສົ່ງອອກ ແລະ ການນຳເຂົ້າ. ຜູ້ປະກອບການທີ່ສົ່ງອອກ ສິນຄ້າທີ່ກ່ຽວຂ້ອງ ແມ່ນ ຕ້ອງໄດ້ແຈ້ງ ເລກທີ ອ້າງອີງ ຂອງບົດລາຍງການ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໃນເອກະສານ ແຈ້ງການສົ່ງອອກຂອງ ເຂົາເຈົ້າ. ຜູ້ປະກອບການທີ່ສົ່ງອອກ ຜະລິດຕະພັນ ທີ່ປຸງແຕ່ງຈາກສິນຄ້າ ທີ່ໄດ້ກຳນົດຢູ່ໃນ ບົດລາຍງການ ການປະເມີນ ຄວາມ ຖືກຕ້ອງຂອງສິນຄ້າ ອາດຈະຕ້ອງ ສະໜອງໃຫ້ ແບບງ່າຍດາຍ ຕາມມາດຕາ 4 (ເບິ່ງຂໍ້ມູນ ສຳລັບ ຜະລິດຕະພັນ ທີ່ຜະລິດໃນ EU).

### (40) ບໍລິສັດໃດ ທີ່ບໍ່ແມ່ນຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ SME ແລະ ເຂົາເຈົ້າມີພັນທະຫັຍງແດ່?

ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແມ່ນ ຜູ້ຄ້າຂາຍສິນຄ້າ ເຊິ່ງບໍ່ແມ່ນ ວິສາຫະກິດຂະໜາດ ນ້ອຍ ແລະ ຂະໜາດກາງ ອີງໃສ່ມາດຕາ 2(30) ຂອງ EUDR. ຂໍ້ບັນຍັດນີ້ ແມ່ນອີງໃສ່ ນິຍາມ ທີ່ລະບຸໃນມາດຕາ 3 ຂອງ ລະບຽບການ 2013/34/EU.

ອັນນີ້ ແມ່ນມີຄວາມຈຳເປັນ ກວມເອົາ ບໍລິສັດຂະໜາດໃຫ່ຍ ເຊິ່ງບໍ່ແມ່ນຜູ້ປະກອບການ ທີ່ເຮັດການຄ້າ ຜະລິດຕະພັນ ທີ່ກຳນົດໃນ ເອກະສານຊ້ອນທ້າຍ 1 ໃນຕະຫຼາດ, ຕົວຢ່າງ, ຮ້ານຊຸບພະສິນຄ້າ ຂະໜາດໃຫ່ຍ ຫຼື ຕ່ອງໂສ້ການຄ້າຂາຍຍ່ອຍ.

ເນື່ອງຈາກ ມາດຕາ 5(1) ຂອງລະບຽບການນີ້, ພັນທະຂອງ ຜູ້ຄ້າຂາຍສິນຄ້າ ຂະໜາດໃຫ່ຍ ແມ່ນຄ້າຍຄືກັນກັບ ຜູ້ປະກອບການຂະໜາດໃຫ່ຍ ຂັ້ນຫັດລົງໄປ: a) ເຂົາເຈົ້າຕ້ອງເກັບຮັກສາ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ; b) ໃນເມື່ອເຮັດແບບນີ້, ເຂົາເຈົ້າ ອາດຈະອີງໃສ່ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໃນເມື່ອກ່ອນ ທີ່ດຳເນີນໄປໃນຕ່ອງໂສ້ການສະໜອງສິນຄ້າ ແຕ່ໃນກໍລະນີ ເຂົາເຈົ້າມີສ່ວນກ່ຽວຂ້ອງກັບ ຂໍ້ບັນຍັດຂອງມາດຕາ 4(9); c) ເຂົາເຈົ້າຈະຮັບຜິດຊອບ ໃນກໍລະນີມີການລະເມີດ ລະບຽບການນີ້, ຮັບຜິດຊອບຕໍ່ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ໄດ້ດຳເນີນໄປໃນເມື່ອກ່ອນ ຫຼື ຮັບຜິດຊອບຕໍ່ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ສົ່ງໃຫ້ໂດຍ ຜູ້ປະກອບການສະໜອງສິນຄ້າ ຂັ້ນເທິງ.

### (41) ແມ່ນໃຜ ຈະຮັບຜິດຊອບ ໃນກໍລະນີ ມີການລະເມີດ ລະບຽບການນີ້?

ທຸກຜູ້ປະກອບການ ແມ່ນຮັບຜິດຊອບ ຕໍ່ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງ ຂອງຜະລິດຕະພັນ ທີ່ເຂົາເຈົ້າຈຳໜ່າຍໃນຕະຫຼາດ ຫຼື ສົ່ງອອກ. ພ້ອມກັນນີ້ ລະບຽບການນີ້ ກໍ່ໄດ້ກຳນົດໃຫ້ ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ເພື່ອສື່ສານ ຂໍ້ມູນທີ່ຈຳເປັນທຸກຢ່າງ ໄປຕາມ ຕ່ອງໂສ້ຂອງການສະໜອງສິນຄ້າ.

ພ້ອມກັນນີ້ ຜູ້ຄ້າຂາຍສິນຄ້າ ກໍ່ຕ້ອງຮັບຜິດຊອບຕໍ່ ຜະລິດຕະພັນທີ່ກ່ຽວຂ້ອງ ທີ່ເຂົາເຈົ້າ ຈຳໜ່າຍໃນຕະຫຼາດ ຫຼື ສົ່ງອອກ.

ສະນັ້ນ, ໃນກໍລະນີ ມີການລະເມີດ ຕໍ່ລະບຽບການນີ້ (ຖ້າຜະລິດຕະພັນ ທີ່ໄດ້ນຳເຂົ້າມາໃນຕະຫຼາດ ຫຼື ໃນກໍລະນີ ບໍ່ມີການເປີດເຜີຍຂໍ້ມູນທີ່ດີ ໂດຍຜູ້ປະກອບການ), ແຕ່ລະພາກສ່ວນ ໃນຕ່ອງໂສ້ການສະໜອງສິນຄ້າ ແມ່ນກ່ຽວຂ້ອງກັບ ການຈຳໜ່າຍ ຫຼື ຂາຍ ສິນຄ້າໃນຕະຫຼາດ ຫຼື ສົ່ງອອກ ຜະລິດຕະພັນທີ່ກ່ຽວຂ້ອງ ແມ່ນຕ້ອງມີຄວາມຮັບຜິດຊອບ ແລະ ອາດຈະມີຮັບຜິດຊອບ.

### (42) ແມ່ນໃຜເປັນຜູ້ປະກອບການ ໃນກໍລະນີ ເປັນ ຕົ້ນໄມ້ຢືນຕົ້ນ ຫຼື ສິດໃນການຂຸດຄົ້ນ?

ຕົ້ນໄມ້ຢືນຕົ້ນ ບໍ່ໄດ້ຢູ່ໃນຂອບເຂດຂອງລະບຽບການນີ້. ຂຶ້ນກັບ ຂໍ້ຕົກລົງ ສັນຍາລະອຽດ, ຜູ້ປະກອບການ ໃນເວລາຂຸດຄົ້ນ ອາດຈະເປັນ ເຈົ້າຂອງປ່າໄມ້ ຫຼື ບໍລິສັດເຊິ່ງມີສິດ ໃນການຂຸດຄົ້ນ ຜະລິດຕະພັນທີ່ກ່ຽວຂ້ອງ ຂຶ້ນກັບໃຜ ເປັນຜູ້ຈຳໜ່າຍ ສິນຄ້າໃນຕະຫຼາດ ຫຼື ສົ່ງອອກ.

°°0°°

# ບັນດານິຍາມ

ບັນດານິຍາມ ເປັນພື້ນຖານ ຂອງບັນດາພັນທະ ສຳລັບ ບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນປະເທດທີສາມ ເຊິ່ງມີທຸລະກິດການຄ້າ ທີ່ພົວພັນກັບ EU, ລວມທັງ ອົງການຈັດຕັ້ງທີ່ຮັບຜິດຊອບຂອງ EU.

**(43) ການທຳລາຍປ່າໄມ້ຂອງໂລກ ໝາຍຄວາມວ່າແນວໃດ?**

'ການທຳລາຍປ່າໄມ້ຂອງໂລກ' ໝາຍວ່າ ການທຳລາຍປ່າໄມ້ ທີ່ດຳເນີນໃນທົ່ວໂລກ (ທັງຢູ່ໃນ EU ແລະ ນອກ EU) ທີ່ສອດຄ່ອງ ຕາມນິຍາມ ທີ່ກຳນົດ ໃນມາດຕາ 2 (ເຊັ່ນ: ການຫັນປ່ຽນ ປ່າໄມ້ ມາເປັນການຜະລິດກະສິກຳ, ບໍ່ວ່າຈະເກີດຈາກ/ມະນຸດຫຼື ບໍ່).

ການທຳລາຍປ່າໄມ້ ຫຼື ການເຊື່ອມໂຊມຂອງປ່າໄມ້ ເປັນບັນດາປັດໃຈ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການສູນເສຍຊີວະນາໆພັນ - ເປັນສອງວິກິດການ ດ້ານສິ່ງແວດລ້ອມທົ່ວໂລກ ທີ່ສຳຄັນ ໃນຍຸກນີ້.

ສາຍເຫດຕົ້ນຕໍ ຂອງການທຳລາຍປ່າໄມ້ ຫຼື ການເຊື່ອມໂຊມຂອງປ່າໄມ້ ໃນທົ່ວໂລກ ແມ່ນການຂະຫຍາຍ ທີ່ດິນກະສິກຳໃນການຜະລິດສິນຄ້າ ເປັນຕົ້ນແມ່ນ ໝາກຖົ່ວເຫຼືອງ, ຜະລິດຕະພັນງົວ, ນ້ຳມັນປາມ, ໄມ້, ໝາກໂກໂກ້, ຢາງພາລາ ແລະ ກາເຟ. ເສດຖະກິດ ແລະ ຜູ້ບໍລິໂພກສ່ວນໃຫ່ຍ ກ່ຽວກັບ ສິນຄ້າເຫຼົ່ານີ້,  EU ກຳລັງປະກອບສ່ວນ ຕໍ່ການທຳລາຍປ່າໄມ້ ແລະ  ການເຊື່ອມໂຊມຂອງປ່າໄມ້ ທົ່ວໂລກ. ສະນັ້ນ EU ຈິ່ງມີຄວາມຮັບຜິດຊອບ ເພື່ອຢຸດຕິ ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້.

ໂດຍມີການສົ່ງເສີມ ການຜະລິດ ແລະ ການບໍລິໂພກ ສິນຄ້າແລະ ຜະລິດຕະພັນ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ຫຼຸດຜ່ອນ ຜົນກະທົບຂອງ EU ຕໍ່ ການທຳລາຍປ່າໄມ້ ຫຼື ການເຊື່ອມໂຊມຂອງປ່າໄມ້ ໃນທົ່ວໂລກ, ໄດ້ຄາດວ່າ ລະບຽບການນີ້ ຈະຫຼຸດ ທາດອາຍພິດທີ່ເກີດຈາກ EU ແລະ ການສູນເສຍ ຊີວະນາໆພັນ.

**(44) ມີມາດຖານຫັຍງແດ່ ທີ່ໄມ້ຕ້ອງຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງສອດຄ່ອງ?**

**ຄຳສັບ ນິຍາມ ການປາສະຈາກການທຳລາຍປ່າໄມ້ ໃນມາດຕາ 2 (13) (b) ("….ໃນກໍລະນີ ສິນຄ້າທີ່ກ່ຽວຂ້ອງ ເຊິ່ງໄດ້ ບັນຈຸ ຫຼື ໃຊ້ນຳໃຊ້ໄມ້ເພື່ອປຸງແຕ່ງ…")** ແຍກໄມ້ອອກຈາກຂອບເຂດ ຂອງຜະລິດຕະພັນ, ສ້າງຄວາມສັບສົນ ຕໍ່ມາດຖານ  'ການປາສະຈາກການທຳລາຍປ່າໄມ້' ໃນມາດຕາ 3 (a) ກ່ຽວກັບໄມ້. ໄມ້ຈຳເປັນ  ຕ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງກັບ ທັງສອງມາດຖານ ທີ່ ກ່ຽວຂ້ອງກັບ ການທຳລາຍປ່າ ແລະ ການເຊື່ອມໂຊມ ຂອງປ່າໄມ້ບໍ່, ຫຼື ປະຕິບັດ ຕາມການເຊື່ອມໂຊມ ຂອງປ່າໄມ້ເທົ່ານັ້ນບໍ່?

ເພື່ອໃຫ້ສອດຄ່ອງກັບ ຂໍ້ກຳນົດຂອງ ລະບຽບການນີ້, ໄມ້ຕ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງກັບ ທັງສອງມາດຖານ: a) ໄດ້ຕ້ອງຂຸດຄົ້ນ ມາຈາກທີ່ດິນທີ່ ບໍ່ກ່ຽວຂ້ອງກັບ ການທຳລາຍປ່າໄມ້ ພາຍຫຼັງ ວັນທີ 31 ທັນວາ 2020; ແລະ b) ໄມ້ ຈະຕ້ອງຂຸດຄົ້ນ ທີ່ກໍ່ໃຫ້ເກີດ ການເຊື່ອມໂຊມຂອງປ່າໄມ້ ວັນທີ 31 ທັນວາ 2020.

**(45) ລະດັບ ການນຂຸດຄົ້ນ ທີຖືກຕ້ອງ ແມ່ນຫັຍງ?**

**ຖ້າຜູ້ປະກອບການໄມ້ ໃນປີ 2022 ຂຸດຄົ້ນໄມ້ 20% ຂອງປ່າໄມ້ ທີ່ມີ 100% ປ່າປົກຫຸ້ມ ແລະ ປ່ອຍໃຫ້ໄມ້ຟື້ນຟູ ຕາມທຳມະຊາດ, ການຂຸດຄົ້ນໄມ້ ໄດ້ຈັດຕັ້ງປະຕິບັດຢ່າງສອດຄ່ອງແລ້ວບໍ່? ໃນ 30 ປີຕໍ່ມາ, ໃນເມື່ອປ່າໄມ້ໄດ້ຟື້ນຟູຄືນໃໝ່, ການຂຸດຄົ້ນໄມ້ສາມາດດຳເນີນ ຖືກຕ້ອງອີງຕາມ EUDR ບໍ່?**

ພາຍໃຕ້ລະບຽບການນີ້, "ການເຊື່ອມໂຊມຂອງປ່າໄມ້" ມີຄວາມໝາຍວ່າ ການປ່ຽນແປງໂຄງສ້າງຂອງປ່າປົກຫຸ້ມ, ທີ່ດຳເນີນໃນຮູບແບບຂອງ ການຫັນປ່ຽນປ່າໄມ້ທຳມະຊາດ ຫຼື ປ່າທີ່ຟື້ນຟູຕາມທຳມະຊາດ ມາເປັນປ່າປູກ ຫຼື ມາເປັນທີ່ດິນປ່າໄມ້ອື່ນໆ , ແລະ ການຫັນປ່ຽນປ່າໄມ້ທຳມະຊາດມາເປັນ ໄມ້ປູກ (ມາດຕາ 2 (7)).
ນິຍາມນີ້ ກວມເອົາທຸກ ປະເພດປ່າໄມ້ ທີ່ກຳນົດໂດຍ ອົງການອາຫານ ແລະ ກະສິກຳ ຂອງອົງການສະຫະປະຊາຊາດ. ສະນັ້ນ, ການເຊື່ອມໂຊມຂອງປ່າໄມ້ ພາຍໃຕ້ລະບຽບການນີ້ ປະກອບມີ ການຫັນປ່ຽນ ປະເພດປ່າໄມ້ທີ່ໄດ້ກຳນົດ ມາເປັນ ປະເພດປ່າໄມ້ອື່ນໆ ຫຼື ທີ່ດິນປ່າໄມ້ອື່ນໆ.

ລະດັບ ຄວາມແຕກຕ່າງກັນ ຂອງການຂຸດຄົ້ນໄມ້ແມ່ນ ອະນຸຍາດ ໃນເງື່ອນໄຂທີ່ວ່າ ການຂຸດຄົ້ນນີ້ ບໍ່ໄດ້ກໍ່ໃຫ້ເກີດ ການປ່ຽນແປງ ພາຍໃຕ້ນິຍາມ ກ່ຽວກັບ ການເຊື່ອມໂຊມຂອງປ່າໄມ້.

**(46) "ການເຊື່ອມໂຊມຂອງປ່າໄມ້" ຈະມີຜົນກະທົບ ຕໍ່ ລະບົບການຄຸ້ມຄອງປ່າໄມ້ແບບຍືນຍົງ ໃນປະຈຸບັນບໍ່?**

ການເຊື່ອມໂຊມຂອງປ່າໄມ້ ພາຍໃຕ້ລະບຽບການນີ້, ໝາຍເຖິງ ການຫັນປ່ຽນ ປະເພດປ່າໄມ້ໃດໜຶ່ງ ມາເປັນ ປະເພດປ່າໄມ້ອື່ນໆ ຫຼື ທີ່ດິນປ່າໄມ້ອື່ນໆ. ລະບົບການຄຸ້ມຄອງປ່າໄມ້ແບບຍືນຍົງ ສາມາດ ນຳໃຊ້ ແລະ ສົ່ງເສີມ, ສະໜອງ ເຊິ່ງບໍ່ກ້າວໄປສູ່ ການອະນຸລັກ ທີ່ບັນລຸຕາມ ນິຍາມ ຂອງການເຊື່ອມໂຊມ.

**(47) ຈະນຳໃຊ້ "ຕົ້ນໄມ້ທີ່ສາມາດ ໄປເຖິງ ລະດັບທີ່ໄດ້ກຳນົດ ໃນພື້ນທີ່" ແນວໃດ?**

**ພວກເຮົາຈະນຳໃຊ້ສຳນວນຄຳສັບ "ຕົ້ນໄມ້ທີ່ສາມາດ ໄປເຖິງ ລະດັບທີ່ໄດ້ກຳນົດ ໃນພື້ນທີ່" ກ່ຽວກັບ ຄວາມສູງຂອງຕົ້ນໄມ້ ແລະ ການປົກຫຸ້ມຂອງເຮືອນຍອດ ໃນນິຍາມປ່າໄມ້ ໃນມາດຕາ 2 (4) ແນວໃດ?**

ຖ້າປ່າໄມ້ມີ ຫຼື ຄາດວ່າ ມີ**ການປົກຫຸ້ມຂອງເຮືອນຍອດ ຫຼາຍກ່ວາ** 10% ຂອງ**ການປົກຫຸ້ມຂອງເຮືອນຍອດຂອງຊະນິດພັນໄມ້ ທີ່ມີລວງສູງ ຫຼື ຄາດຄະເນລວງສູງ** 5 ແມັດຫຼື ຫຼາຍກ່ວານັ້ນ, ແມ່ນຕ້ອງໄດ້ຈັດເປັນ "ປ່າໄມ້", ອີງໃສ່ນິຍາມຂອງ

FAO. ເຊັ່ນ: ຕອນປ່າໄມ້ ທີ່ມີອາຍຸນ້ອຍ ທີ່ຄາດຄະເນວ່າ ຈະມີຄວາມໜາແໜ້ນຂອງເຮືອນຍອດ 10 ເປີເຊັນ ແລະ ລວງສູງຂອງຕົ້ນໄມ້ ແມ່ນ 5 ແມັດ ແມ່ນກຳນົດເປັນປ່າໄມ້, ເຊິ່ງເປັນ ພື້ນທີ່ບໍ່ມີປ່າໄມ້ຊົ່ວຄາວ, ເຊິ່ງ ການນຳໃຊ້ ພື້ນທີ່ສ່ວນໃຫຍ່ຍັງເປັນປ່າໄມ້.

**(48) ການປ່ຽນແປງທີ່ດິນປ່າໄມ້ອັນໃດ ຈຶ່ງຖືກຕ້ອງສອດຄ່ອງ?**

**ການທຳລາຍປ່າໄມ້ ແມ່ນໄດ້ກຳນົດໃນ ມາດຕາ 2 (3) ເຊິ່ງເປັນ "ການຫັນປ່ຽນປ່າໄມ້ ມາເປັນການຜະລິດກະສິກຳ." ການປ່ຽນແປງ ການນຳໃຊ້ທີ່ດິນປ່າໄມ້ອື່ນໆອັນໃດ ທີ່ຖືກຕ້ອງສອດຄ່ອງຕາມ ລະບຽບການນີ້ບໍ່?**

ການທຳລາຍປ່າໄມ້ ພາຍໃຕ້ລະບຽບການນີ້ ແມ່ນໄດ້ກຳນົດເປັນ ການຫັນປ່ຽນປ່າໄມ້ ມາເປັນການຜະລິດກະສິກຳ. ການຫັນປ່ຽນ ສຳລັບ ການນຳໃຊ້ອື່ນໆ ເປັນຕົ້ນ ການພັດທະນາຕົວເມືອງ ຫຼື ພັດທະນາ ພື້ນຖານໂຄງລ່າງ ແມ່ນບໍ່ຈັດເຂົ້າຢູ່ໃນນິຍາມຂອງ ລະບຽບການນີ້. ຕົວຢ່າງ, ໄມ້ທີ່ມາຈາກພື້ນທີ່ປ່າໄມ້ ເຊິ່ງໄດ້ຂຸດຄົ້ນຢ່າງຖືກຕ້ອງຕາມກົດໝາຍ ເພື່ອສ້າງເສັ້ນທາງ ແມ່ນຖືກຕ້ອງສອດຄ່ອງ ຕາມລະບຽບການນີ້.

**(49) ໄພພິບັດທາງທຳມະຊາດ ອາດຈະຈັດເຂົ້າເປັນ ການທຳລາຍປ່າໄມ້ບໍ່?**

ນິຍາມຂອງ "ການທຳລາຍປ່າໄມ້" ຢູ່ໃນລະບຽບການນີ້ ປະກອບການມີ ການຫັນປ່ຽນປ່າໄມ້ ມາເປັນການຜະລິດກະສິກຳ, ເຖິງວ່າຈະແມ່ນການກະທຳຂອງມະນຸດ ຫຼື ບໍ່ ເຊິ່ງລວມທັງ ຢູ່ໃນສະພາບການ ທາງໄພພິບັດທາງທຳມະຊາດ. ປ່າໄມ້ ໄດ້ພົບບັນຫາໄຟໄໝ້ ແລະ ຕໍ່ມາກໍ່ໄດ້ຫັນປ່ຽນມາເປັນ ທີ່ດິນກະສິກຳ (ວັນທີ ອ້າງອີງພື້ນທີ່ປ່າໄມ້) ອາດຈະພິຈາລະນາ ເປັນການທຳລາຍປ່າໄມ້ ພາຍໃຕ້ລະບຽບການນີ້. ໃນກໍລະນີສະເພາະນີ້, ແມ່ນຫ້າມ ສຳລັບຜູ້ປະກອບການ ໃນການຊື້ສິນຄ້າ ຢູ່ພາຍຂອບເຂດຂອງສິນຄ້າ ຂອງລະບຽບການນີ້ ຈາກພື້ນທີ່ດັ່ງກ່າວ (ແຕ່ບໍ່ໃຫ້ກໍ່ໃຫ້ເກີດໄຟໄໝ້ປ່າ). ກົງກັນຂ້າມ, ຖ້າປ່າໄມ້ທີ່ໄດ້ຮັບຜົນກະທົບ ໄດ້ເປີດໂອກາດໃຫ້ຟື້ນຟູ, ອັນນີ້ ແມ່ນບໍ່ແມ່ນການທຳລາຍປ່າໄມ້, ແລະ ຜູ້ປະກອບການສາມາດຊື້ ໄມ້ ຈາກປ່າໄມ້ດັ່ງກ່າວ ໃນເມື່ອເຕີບໂຕແລ້ວ.

**(50) 'ທີ່ດິນໄມ້ອື່ນໆ' ຫຼື ລະບົບນິເວດອື່ນໆ ຈະຈັດເປັນການທຳລາຍປ່າໄມ້ບໍ່?**

ລະບຽບການນີ້ ແມ່ນອີງໃສ່ ນິຍາມ 'ປ່າໄມ້' ຂອງອົງການອາຫານ ແລະ ກະສິກຳ ຂອງສະຫະປະຊາຊາດ. **ທີ່**ດິນໄມ້ອື່ນໆ' ຫຼື ລະບົບນິເວດອື່ນໆ ລວມມີ ປ່າໄມ້ ສີ່ລ້ານເຮັກຕາ – ທີ່ດິນສ່ວນໃຫຍ່ແມ່ນບໍ່ໄດ້ນຳໃຊ້ ສຳລັບ ກະສິກຳ– ເຊິ່ງປະກອບດ້ວຍພື້ນທີ່ ທີ່ກຳນົດເປັນ ພື້ນທີ່ເປົ່າວ່າງ, ດິນບໍວິເວັນນ້ຳ ແລະ ລະບົບນິເວດທີ່ມີຄຸນຄ່າອື່ນໆ ໃນກົດໝາຍຂອງປະເທດ.

ການທົບທວນ ລະບຽບການຄັ້ງທຳອິດ ແມ່ນຈະໄດ້ເຮັດ ຢູ່ພາຍໃນ ໜຶ່ງປີ ຫຼັງຈາກການບັງຄັບໃຊ້ ເຊິ່ງຈະປະເມີນ ຜົນກະທົບຂອງການຂະຫຍາຍຂອບເຂດ ໄປຍັງ 'ທີ່ດິນປ່າໄມ້ອື່ນໆ'. ການທົບທວນ ຄັ້ງທີສອງ ແມ່ນຈະໄດ້ເຮັດ ຢູ່ພາຍໃນ ສອງປີ ຫຼັງ

ຈາກການບັງຄັບໃຊ້ລະບຽບການນີ້ ເຊິ່ງຈະປະເມີນ ຜົນກະທົບ ຂອງການຂະຫຍາຍຂອບເຂດ ໄປຍັງ ລະບົບນິເວດຕ່າງໆທີ່ນອກເໜືອຈາກ 'ປ່າໄມ້' ແລະ 'ທີ່ດິນປ່າໄມ້ອື່ນໆ'.

ການຫັນປ່ຽນປ່າໄມ້ທຳມະຊາດ ແລະ ປ່າໄມ້ທີ່ຟື້ນຟູຕາມທຳມະຊາດ ມາເປັນປ່າປູກ ຫຼື ເປັນ ທີ່ດິນປ່າໄມ້ອື່ນໆ ແມ່ນເປັນສ່ວນໜຶ່ງ ຂອງນິຍາມ ກ່ຽວກັບ ການເຊື່ອມໂຊມຂອງປ່າໄມ້', ແລະ ຜະລິດຕະພັນໄມ້ ທີ່ມາຈາກ ທີ່ດິນຫັນປ່ຽນດັ່ງກ່າວເຊິ່ງບໍ່ສາມາດ ຈຳໜ່າຍ ສິນຄ້າໃນຕະຫຼາດ ຫຼື ບໍ່ສາມາດສົ່ງອອກ ສິນຄ້າເຫຼົ່ານີ້.

°°0°°

# ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ

### (51) ຂ້ອຍມີພັນທະຫັຍງແດ່ ເຊິ່ງປັນ ຜູ້ປະກອບການຂອງ EU?

ຕາມຫຼັກການລວມແລ້ວ, ຜູ້ປະກອບການ (ແລະ ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ຈະໄດ້ສ້າງ ແລະ ດຳເນີນ ລະບົບ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ເຊິ່ງປະກອບມີສາມບາດກ້າວ.

ບາດກ້າວທີທຳອິດ, ເຂົາເຈົ້າຕ້ອງກັບຂໍ້ມູນ ໂດຍອີງໃສ່ ມາດຕາ 9, ເປັນຕົ້ນ ສິນຄ້າ ຫຼື ຜະລິດຕະພັນ ເຊິ່ງເຂົາເຈົ້າມີຄວາມຕັ້ງໃຈທີ່ຈະຈຳໜ່າຍ (ຫຼື ຂາຍ ໃນກໍລະນີທີ່ ບໍ່ແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ໃນຕະຫຼາດ ຫຼື ສົ່ງອອກ ລວມທັງຂັ້ນຕອນຂອງພາສີ 'ການປ່ອຍ ການຈຳໜ່າຍສິນຄ້າແບບເສລີ' ແລະ 'ສົ່ງອອກ', ລວມທັງ ສິ່ງທີ່ກ່ຽວຂ້ອງກັບ ປະລິມານ, ຜູ້ສະໜອງສິນຄ້າ, ປະເທດທີ່ຜະລິດສິນຄ້າ, ຫຼັກຖານ ໃນການຂຸດຄົ້ນທີ່ຖືກຕ້ອງຕາມກົດໝາຍ ແລະ ອື່ນໆ. ຂໍ້ກຳນົດທີ່ສຳຄັນ ໃນບາດກ້າວນີ້ ແມ່ນເພື່ອ ເກັບ ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ ໃນຕອນດິນ ບ່ອນທີ່ທີ່ຜະລິດສິນຄ້າ ແລະ ສະໜອງຂໍ້ມູນ ທີ່ກ່ຽວຂ້ອງ– ຜະລິດຕະພັນ, ເລກລະຫັດ CN, ປະລິມານສິນຄ້າ, ປະເທດທີ່ຜະລິດສິນຄ້າ, ຈຸດພິກັດ ຂອງພື້ນທີ່ທີ່ຕັ້ງຂອງສິນຄ້າ – ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເພື່ອປ້ອນເຂົ້າໃນ ລະບົບຖານຂໍ້ມູນ. ຖ້າຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ບໍ່ສາມາດ ເກັບ ຂໍ້ມູນທີ່ຕ້ອງການ, ແມ່ນຕ້ອງປະຕິເສດ ການວາງຈຳໜ່າຍ (ຫຼື ຂາຍ ໃນຕະຫຼາດ ໃນກໍລະນີ ບໍ່ແມ່ນຜູ້ຄ້າຂາຍສິນຄ້າ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ໃນຕະຫຼາດ ຫຼື ປະຕິເສດ ການສົ່ງອອກ ສິນຄ້າ ທີ່ກ່ຽວຂ້ອງດັ່ງກ່າວ. ຖ້າຫາກບໍ່ປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມຂໍ້ກຳນົດນີ້ ເຊິ່ງເປັນການລະເມີດຕໍ່ ລະບຽບການນີ້ ທີ່ຈະກ້າວໄປສູ່ການລົງໂທດ.

ຖ້າຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ) ທີ່ບໍ່ສາມາດເກັບຂໍ້ມູນທີ່ກຳນົດແມ່ນຕ້ອງປະຕິເສດ ການຈຳໜ່າຍຜະລິດຕະພັນເຫຼົ່ານີ້ ໃນຕະຫຼາດ EU ຫຼື ສົ່ງອອກຈາກ EU. ຖ້າຫາກບໍ່ປະຕິບັດໃຫ້ຖືກຕ້ອງສອດຄ່ອງ ຕາມຂໍ້ກຳນົດນີ້ ຈະເປັນການລະເມີດຕໍ່ ລະບຽບການນີ້ ເຊິ່ງຈະກ້າວໄປສູ່ການລົງໂທດ.

ບາດກ້າວທີສອງ, ບໍລິສັດຕ້ອງປ້ອນຂໍ້ມູນທີ່ເກັບ ໃນບາດກ້າວທີໜຶ່ງ ເຂົ້າໃນບົດລາຍງານ ການປະເມີນຄວາມສ່ຽງ ຂອງລະບົບການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເພື່ອກວດກາຢັ້ງຢືນຄວາມຖືກຕ້ອງ ແລະ ປະເມີນຜົນ ຄວາມສ່ຽງຂອງ ຜະລິດຕະພັນ ທີ່ບໍ່ຖືກຕ້ອງ ໃນເມື່ອເອົາສິນຄ້າ ເຂົ້າມາໃນຕ່ອງໂສ້ການສະໜອງສິນຄ້າ, ໂດຍພິຈາລະນາ ບັນດາມາດຖານ ທີ່ກຳນົດໃນມາດຕາ 10. ຜູ້ປະກອບການຕ້ອງ ສາມາດຊີ້ແຈງ ຂໍ້ມູນທີ່ໄດ້ເກັບ ເພື່ອກວດກາ ທຽບໃສ່ ມາດຖານການປະເມີນຄວາມສ່ຽງ ແລະ ເຂົາເຈົ້າໄດ້ກຳນົດຄວາມສ່ຽງໄດ້ແນວໃດ.

ບາດກ້າວທີສາມ, ຜູ້ປະກອບການ ຕ້ອງດຳເນີນມາດຕະການການຫຼຸດຜ່ອນຄວາມສ່ຽງທີ່ດີ ແລະ ສົມເຫດສົມຜົນ ໃນກໍລະນີເຂົາເຈົ້າພົບເຫັນ ຄວາມສ່ຽງທີ່ບໍ່ຖືກຕ້ອງ ໃນບາດກ້າວທີສອງ ເພື່ອຮັບປະກັນວ່າ ຄວາມສ່ຽງນີ້ກາຍມາເປັນຄວາມສ່ຽງນ້ອຍ, ໂດຍພິຈາລະນາ ບັນດາມາດຖານ ທີ່ກຳນົດໃນມາດຕາ 11. ຕ້ອງໄດ້ບັນທຶກ ບັນດາມາດຕະການນີ້.

ຜູ້ປະກອບການ ທີ່ຊື້ສິນຄ້າຈຳນວນຫຼາຍ ຈາກພື້ນທີ່ ທີ່ຈັດເປັນ ຄວາມສ່ຽວນ້ອຍ ແມ່ນຈະດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ແບບກະທັດຮັດ. ອີງຕາມມາດຕາ 13, ເຂົາເຈົ້າຕ້ອງເກັບຂໍ້ມູນ ໃຫ້ສອດຄ່ອງຕາມມາດຕາ 9, ແຕ່ເຂົາເຈົ້າ ບໍ່ຈຳເປັນຕ້ອງ ປະເມີນ ຫຼຸດຜ່ອນຄວາມສ່ຽງ (ມາດຕາ 10 ແລະ 11) ເວັ້ນເສຍແຕ່ ຜູ້ປະກອບການ ໄດ້ຮັບ ຫຼື ມີຂໍ້ມູນທີ່ກ່ຽວຂ້ອງທັງໝົດ, ລວມທັງ ບັນຫາຕົວຈິງ ທີ່ສົ່ງໃຫ້ ຕາມາດຕາ 31, ທີ່ຊີ້ໃຫ້ເຫັນວ່າມີຄວາມສ່ຽງ ເຊິ່ງ ຜະລິດຕະພັນທີ່ກ່ຽວຂ້ອງນີ້ ແມ່ນບໍ່ຖືກຕ້ອງສອດຄ່ອງຕາມ ລະບຽບການນີ້ (ມາດຕາ 13.2).

### (52) ຕົວແທນທີ່ໄດ້ຮັບອະນຸຍາດ ແມ່ນຫຍັງ?

ອີງຕາມມາດຕາ 6, ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ອາດມອບສິດ ໃຫ້ຕົວແທນທີ່ໄດ້ຮັບອະນຸຍາດ ເພື່ອສົ່ງ ບົດລາຍງານການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໃນນາມເຂົາເຈົ້າ. ໃນກໍລະນີນີ້, ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ຈະຮັບຜິດຊອບສຳລັບ ຄວາມຖືກຕ້ອງສອດຄ່ອງ ຂອງ ຜະລິດຕະພັນທີ່ກ່ຽວຂ້ອງ.

ຖ້າຜູ້ປະກອບການ ທີ່ເປັນບຸກຄົນທົ່ວໄປ ຫຼື ເປັນ ຈຸນລະວິສາຫະກິດ, ແມ່ນຈະມອບສິດ ໃຫ້ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ໃນຕ່ອງໂສ້ການສະໜອງສິນຄ້າ ທັດໄປ ເພື່ອເປັນ ຕົວແທນທີ່ໄດ້ຮັບອະນຸຍາດຂອງເຂົາເຈົ້າ, ເຊິ່ງບໍ່ແມ່ນ ບຸກຄົນທົ່ວໄປ ຫຼື ບໍ່ແມ່ນ ຈຸນລະວິສາຫະກິດ. ໃນກໍລະນີນີ້, ຖ້າຜູ້ປະກອບການ ຍັງມີຄວາມຮັບຜິດຊອບ ສຳລັບ ຖືກຕ້ອງສອດຄ່ອງ ຂອງຜະລິດຕະພັນ.

### (53) ບໍລິສັດ ສາມາດ ດຳເນີນການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໃນນາມຕາງໜ້າ ບໍລິສັດສາຂາໄດ້ບໍ່?

ອີງການຈັດຕັ້ງພາຍໃນ ແລະ ນະໂຍບາຍ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຂອງກຸ່ມບໍລິສັດ (ບໍລິສັດແມ່ ແລະ ບໍລິສັດສາຂາຂອງຕົນ) ແມ່ນບໍ່ໄດ້ຄຸ້ມຄອງພາຍໃຕ້ລະບຽບການນີ້. ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ເຊິ່ງຈຳໜ່າຍ ຫຼື ຂາຍສິນຄ້າໃນຕະຫຼາດ ຫຼື ສົ່ງອອກ ສິນຄ້າທີ່ກ່ຽວຂ້ອງ, ແມ່ນຮັບຜິດຊອບ ຕໍ່ຄວາມຖືກຕ້ອງຂອງຜະລິດຕະພັນ ແລະ ຄວາມຖືກຕ້ອງທັງໝົດ

ພາຍໃຕ້ລະບຽບການນີ້. ສະນັ້ນ, ຕ້ອງສະແດງຊື່ຂອງບໍລິສັດ ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ແລະ ຕ້ອງໄດ້ຮັບຜິດຊອບ ຢ່າງຄົບຖ້ວນ ຕໍ່ລະບຽບການນີ້.

**(54) ການນຳເຂົ້າ ຜະລິດຕະພັນຄືນໃໝ່ ແມ່ນຫັຍງ?**

**ພັນທະ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຂອງຂ້ອຍ ມີຫັຍງແດ່ ຖ້າ ຂ້ອຍນຳເຂົ້າຜະລິດຕະພັນຄືນໃໝ່ ເຊິ່ງໄດ້ ສົ່ງອອກຈາກ EU ໃນເມື່ອກ່ອນ?**

ໃນເມື່ອ ຜູ້ປະກອບການ (ຫຼື ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ SME) ນຳເຂົ້າຜະລິດຕະພັນຄືນໃໝ່ ເຊິ່ງໄດ້ສົ່ງອອກ ໃນເມື່ອກ່ອນ ແລະ ໄດ້ດຳເນີນຕາມຂັ້ນຕອນ ທາງພາສີ 'ການປ່ອຍການຈຳໜ່າຍສິນຄ້າແບບເສລີ', ພັນທະອັນດຽວກັນ ທີ່ນຳໃຊ້ ສຳລັບ ຜະລິດຕະພັນ ທີ່ຈຳໜ່າຍຄັ້ງທຳອິດໃນຕະຫຼາດ. ໃນເມື່ອນຳເຂົ້າ, ຜະລິດຕະພັນທີ່ກ່ຽວຂ້ອງ ແມ່ນສູນເສຍ ສະຖານະທາງພາສີ ກ່ຽວກັບ 'ສິນຄ້າຂອງ EU' ເຊິ່ງ ຜະລິດຕະພັນທີ່ກ່ຽວຂ້ອງເຫຼົ່ານີ້ ແມ່ນ ພິຈາລະນາ ເປັນຜະລິດຕະພັນໃໝ່ ໃນການຈຳໜ່າຍໃໝ່ ຫຼື ຂາຍໃໝ່ ໃນຕະຫຼາດ. ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ມີປະຈຸບັນ ສາມາດຊ່ວຍຜູ້ປະກອບການ ໃນການດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

**(55) ມີຂັ້ນຕອນທາງພາສີອັນໃດ ທີ່ໄດ້ຮັບຜົນກະທົບ?**

ຜະລິດຕະພັນທີ່ກ່ຽວຂ້ອງ ທີ່ຈຳໜ່າຍ ພາຍໃຕ້ ຂັ້ນຕອນທາງພາສີ ອື່ນ ນອກຈາກ 'ການປ່ອຍ ການຈຳໜ່າຍສິນຄ້າແບບເສລີ' ຫຼື ສົ່ງອອກ (ເຊັ່ນ: ສາງສິນຄ້າຂອງພາສີ, ການປຸງແຕ່ງພາຍໃນ, ສິນຄ້າ ສຳລັບການວາງສະແດງ ແລະ ອື່ນໆ) ແມ່ນບໍ່ມີຜົນບັງຄັບໃຊ້ ພາຍໃຕ້ EUDR.

**(56) ພາລະບົດບາດ ຂອງການຢັ້ງຢືນຄວາມຖືກຕ້ອງ ຫຼື ລະບົບ ການກວດກາຢັ້ງຢືນຄວາມຖືກຕ້ອງ ມີຫັຍງແດ່?**

ລະບົບການຢັ້ງຢືນຄວາມຖືກຕ້ອງ ສາມາດນຳໃຊ້ ໂດຍສະມາຊິກ ສະໜອງສິນຄ້າ ເພື່ອຊ່ວຍ ປະເມີນຄວາມສ່ຽງຂອງເຂົາເຈົ້າ ຢູ່ໃນ ຂອບເຂດການຢັ້ງຢືນຄວາມຖືກຕ້ອງ ທີ່ກວມເອົາ ຂໍ້ມູນທີ່ຕ້ອງການ ເພື່ອໃຫ້ສອດຄ່ອງກັບ ບັນດາພັນທະ ຂອງລະບຽບການນີ້. ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ເຊິ່ງບໍ່ແມ່ນ SMEs ແມ່ນຕ້ອງໄດ້ດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ແລະ ຍັງມີຄວາມຮັບຜິດຊອບ ຕໍ່ການລະເມີດລະບຽບການນີ້.

**(57) ຈະເກັບເອກະສານດົນປານໃດ?**

**ຜູ້ປະກອບການຕ້ອງ ເກັບເອກະສານໄວ້ ດົນປານໃດ ກ່ຽວກັບ ການດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ? ຜູ້ຄ້າຂາຍສິນຄ້າທີ່ເປັນ SME ຕ້ອງໄດ້ເກັບ ຂໍ້ມູນທີ່ກ່ຽວຂ້ອງ ກ່ຽວກັບ ຜະລິດຕະພັນທີ່ກ່ຽວຂ້ອງ ທີ່ເຂົາເຈົ້າໄດ້ຈຳໜ່າຍ ຫຼື ຂາຍໃນຕະຫຼາດ ຫຼື ສົ່ງອອກ ບໍ່? ມີຫັຍງແດ່ທີ່ຕ້ອງໄດ້ພິຈາລະນາຫັຍງແດ່ ໃນເບື້ອງຕົ້ນ ຂອງໄລຍະເວລານີ້?**

ຜູ້ປະກອບການຕ້ອງ ເກັບ, ຈັດ ແລະ ເກັບຮັກສາຂໍ້ມູນ ເປັນເວລາ ຫ້າປີ ເລີ່ມແຕ່ມື້ຈຳໜ່າຍສິນຄ້າ ໃນຕະຫຼາດ ຫຼື ສົ່ງອອກ ສິນຄ້າ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ, ຂໍ້ມູນທີ່ເກັບ ແມ່ນອີງໃສ່ມາດຕາ 9, ໂດຍມີຫຼັກຖານ. ອີງໃສ່ບົດບັນຍັດ ຂອງມາດຕາ 10 (4) ແລະ ມາດຕາ 11 (3), ຜູ້ປະກອບການຕ້ອງ ສາມາດພິສູດ ວ່າ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໄດ້ດຳເນີນໄປແນວໃດ ແລະ ໄດ້ວາງມາດຕະການຫຼຸດຜ່ອນຄວາມສ່ຽງຫຍັງແດ່ ໃນກໍລະນີ ທີ່ພົບເຫັນຄວາມສ່ຽງ. ເອກະສານທີ່ກ່ຽວຂ້ອງ ກ່ຽວກັບ ມາດຕະການນີ້ ແມ່ນຕ້ອງເກັບຮັກສາຢ່າງນ້ອຍເປັນເວລາ ຫ້າປີ ຫຼັງຈາກ ສຳເລັດ ການດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ. ຜູ້ປະກອບການ ຕ້ອງເກັບຮັກສາ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເປັນເວລາ ຫ້າປີ ນັບແຕ່ ວັນທີ ທີ່ໄດ້ປ້ອນບົດລາຍງານ ເຂົ້າໃນລະບົບຖານຂໍ້ມູນ, ເຊິ່ງແມ່ນກ່ອນວັນທີ ການຈຳໜ່າຍ ຜະລິດຕະພັນໃນຕະຫຼາດ ຫຼື ສົ່ງອອກ. ຍ້ອນເຫດຜົນດັ່ງກ່າວ, ຜູ້ຄ້າຂາຍສິນຄ້າ ທີ່ບໍ່ແມ່ນ SME ແມ່ນມີພັນທະອັນດຽວກັບ ກັບ ຜູ້ປະກອບການ.

ຜູ້ຄ້າຂາຍສິນຄ້າ SME ຕ້ອງເກັບຮັກສາຂໍ້ມູນ ເປັນເວລາ ຫ້າປີ ຕາມທີ່ໄດ້ກຳນົດໃນມາດຕາ 5 (3), ລວມທັງເລກທີ ຂອງບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຈາກວັນທີ ຈຳໜ່າຍຜະລິດຕະພັນທີ່ກ່ຽວຂ້ອງ ໃນຕະຫຼາດ ຫຼື ສົ່ງອອກ.

### (58) ມີມາດຖານຫຍັງແດ່ ສຳລັບ ຜະລິດຕະພັນທີ່ມີຄວາມສ່ຽງນ້ອຍ?

'ຄວາມສ່ຽງນ້ອຍ' ແມ່ນລະດັບຂອງຄວາມສ່ຽງ ເຊິ່ງນຳໃຊ້ ສຳລັບ ຜະລິດຕະພັນທີ່ກ່ຽວຂ້ອງ ທີ່ຈະຈຳໜ່າຍ ໃນຕະຫຼາດ ຫຼື ສົ່ງອອກ ເຊິ່ງ ຈະປະເມີນລະອຽດ ກ່ຽວກັບ ຂໍ້ມູນທົ່ວໄປ ແລະ ຂໍ້ມູນສະເພາະ ຂອງຜະລິດຕະພັນ ແລະ ການນຳໃຊ້ ມາດຕະການຫຼຸດຜ່ອນຜົນກະທົບ ທີ່ມີຄວາມເໝາະສົມ, ບັນດາສິນຄ້າ ຫຼື ຜະລິດຕະພັນເຫຼົ່ານີ້ ບໍ່ໄດ້ສະແດງຄວາມກັງວົນ ຕໍ່ບັນຫາການຈັດຕັ້ງປະຕິບັດ ບໍ່ຖືກຕ້ອງ ຕາມ ມາດຕາ 3, ຂໍ້ (a) ຫຼື (b).

### (59) 'ຜະລິດຕະພັນທີ່ມີຄວາມສ່ຽງນ້ອງ' ແມ່ນສາມາດຍົກເວັ້ນໄດ້ບໍ່?

**ພວກເຮົາສາມາດ ເຂົ້າໃຈຄວາມສ່ຽງນ້ອຍ ຕາມມາດຕາ 2 (26), EUDR ອ່ານຮ່ວມກັນ ຕາມມາດຕາ 10(1), EUDR ເປັນມາດຖານຍົກເວັ້ນ ສຳລັບ EUDRບໍ່?**

ຈຳນວນ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ [ທີ່ບໍ່ແມ່ນ SMEs] ອາດຈະສະຫຼຸບໄດ້ວ່າ ມີຄວາມສ່ຽງນ້ອຍ (ເຊິ່ງເປັນເງື່ອນໄຂລ່ວງ ໜ້າ ໃນການຈຳໜ່າຍ ຫຼື ຂາຍ ໃນຕະຫຼາດ ຫຼືສົ່ງອອກ ຜະລິດຕະພັນທີ່ກ່ຽວຂ້ອງ) **ເຊິ່ງມີຜົນຕໍ່ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ** (ອີງຕາມມາດ 4(1)). ການດຳເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເປັນພັນທະທີ່ສຳຄັນ ຂອງຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ພາຍໃຕ້ລະບຽບການນີ້, ເຊິ່ງບໍ່ມີການຍົກເວັ້ນໃດໆ.

ໝາຍເຫດ: ອົງປະກອບຂອງ 'ຄວາມສ່ຽງນ້ອຍ' ບໍ່ໄດ້ນຳໃຊ້ ສຳລັບ ບັນດາສິນຄ້າ (ບໍ່ມີ 'ສະຖານະຄວາມສ່ຽງ' ຕໍ່ ສິນຄ້າ ໃນລະບຽບການນີ້).

**(60) ສິນຄ້າອັນໃດໜຶ່ງ ຈາກປະເທດໃດໜຶ່ງ ສາມາດພິຈາລະນາ ເປັນສິນຄ້າ ທີ່ມີ 'ຄວາມສ່ຽງນ້ອຍໄດ້ບໍ່?**

ນ້ຳມັນປາມ, ຢາງພາລາ, ກາເຟ, ໝາກໂກໂກ້ ຫຼື ໄມ້ ຈາກປະເທດໃດໜຶ່ງ ສາມາດ ພິຈາລະນາເປັນ ສິນຄ້າທີ່ມີ 'ຄວາມສ່ຽງນ້ອຍໄດ້ບໍ່'?
ບໍ່ໄດ້ ໃຫ້ເບິ່ງ ຄຳຖາມ ຂ້າງເທິງ.

°°0°°

## ການຈັດລະດັບຄວາມສ່ຽງຂອງ ປະເທດທີ່ຜະລິດສິນຄ້າ ແລະ ການຮ່ວມມື

**(61) ການຈັດລະດັບຄວາມສ່ຽງຂອງ ປະເທດທີ່ຜະລິດສິນຄ້າ ແມ່ນຫັຍງ?**

ລະບົບ ການຈັດລະດັບຄວາມສ່ຽງຂອງ ປະເທດທີ່ຜະລິດສິນຄ້າ ທີ່ດຳເນີນ ໂດຍ ຄະນະກຳມະທິການຂອງ EU ຈະໄດ້ປະເພດປະເທດ ເປັນສາມປະເພດ (ຄວາມສ່ຽງຫຼາຍ, ຄວາມສ່ຽງມາດຕະຖານ ແລະ ຄວາມສ່ຽງນ້ອຍ) ອີງໃສ່ລະດັບຄວາມສ່ຽງ ໃນການຜະລິດສິນຄ້າຂອງປະເທດ ທີ່ບໍ່ປາສະຈາກການທຳລາຍປ່າໄມ້.

ມາດຖານ ສຳລັບ ການກຳນົດ ສະຖານະຄວາມສ່ຽງ ຂອງບັນດາປະເທດ ແມ່ນໄດ້ກຳນົດ ໃນມາດຕາ 29 ຂອງລະບຽບການນີ້. ມາດຕາ 29 (2) ໃຫ້ສິດໃຫ້ ຄະນະກຳມະທິການຂອງ EU ເພື່ອສ້າງ ລະບົບຄວາມສ່ຽງ ແລະ ກຳນົດ ລາຍຊື່ ຂອງບັນດາປະເທດທີ່ມີຄວາມສ່ຽງ ບໍ່ໃຫ້ກາຍ 18 ເດືອນ ພາຍຫຼັງ ລະບຽບການນີ້ ໄດ້ມີຜົນບັງຄັບໃຊ້ ໃນເມື່ອ ພັນທະສຳຄັນຂອງລະບຽບການ ເລີ່ມຕົ້ນຈັດຕັ້ງປະຕິບັດ. ການຈັດຄວາມສ່ຽງນີ້ ແມ່ນອີງໃສ່ ຈຸດປະສົງ ແລະ ການວິເຄາະປະເມີນທີ່ມີຄວາມໂປ່ງໃສ ກ່ຽວກັບມາດຖານດ້ານປະລິມານ ແລະ ຄຸນນະພາບ ໂດຍພິຈາລະນາ ຫຼັກຖານທາງວິທະຍາສາດຫຼ້າສຸດ, ແຫຼ່ງຂໍ້ມູນທີ່ມີຄວາມເຊື່ອຖືຂອງສາກົນ, ແລະ ຂໍ້ມູນ ທີ່ສາມາດກວດກາຢັ້ງຢືນຄວາມຖືກຕອ້ງ ໃນພາກຈັດຕັ້ງປະຕິບັດຕົວຈິງ.

**(62) ວິທີການໃນການຈັດປະເພດຄວາມສ່ຽງມີຫັຍງແດ່?**

ວິທີການໃນການຈັດປະເພດຄວາມສ່ຽງ ແມ່ນກຳລັງພັດທະນາ ໂດຍ ຄະນະກຳມະທິການຂອງ EU ແລະ ຈະສະເໜີ ໃນກອງປະຊຸມປຶກສາຫາລື ກ່ຽວກັບ ການທຳລາຍປ່າໄມ້ ກັບ ພາກສ່ວນທີ່ກ່ຽວຂ້ອງ ໃນອານາຄົດ ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ.

**(63) ພາກສ່ວນທີ່ກ່ຽວຂ້ອງຈະປະກອບສ່ວນແນວໃດແດ່?**

**ບັນດາປະເທດຜູ້ຜະລິດ ແລະ ພາກສ່ວນອື່ນໆ ສາມາດປະກອບສ່ວນເຂົ້າ ຂະບວນການຈັດຄວາມສ່ຽງນີ້ໄດ້ແນວໃດ ແລະ ປະເທດທີ່ຜະລິດສິດຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈະສະໜອງຂໍ້ມູນ ໃຫ້ແກ່ການປະເມີນ, ກວດກາຢັ້ງຢືນຄວາມຖືກຕ້ອງ ແລະ ນຳໃຊ້ຄວາມສ່ຽງນີ້ ແນວໃດ?**

ຄະນະກຳມະທິການຂອງ EU ໄດ້ອີງຕາມມາດຕາ 29(5) ເພື່ອຈັດການປຶກສາຫາລື ສະເພາະ ກັບ ທຸກໆປະເທດ ທີ່ຈະໄດ້ຖືກຈັດປະເພດຄວາມສ່ຽງ ເປັນຄວາມສ່ຽງຫຼາຍ ໂດຍມີຈຸດປະສົງເພື່ອຫຼຸດຜ່ອນລະດັບຄວາມສ່ຽງຂອງເຂົາເຈົ້າ. ການປຶກສາຫາລື ນີ້ ຈະເປັນໂອກາດ ໃຫ້ບັນດາປະເທດຄູ່ຮ່ວມພັດທະນາ ເພື່ອສະໜອງ ຂໍ້ມູນທີ່ກ່ຽວຂ້ອງເພີ່ມຕື່ມ ແລະ ເຮັດວຽກຢ່າງໃກ້ສິດກັບ EU ກ່ອນ ຈະຈັດປະເພດຄວາມສ່ຽງໃຫ້ສຳເລັດ.

### (64) ບັນດາປະເທດສາມາດ ແລກປ່ຽນຂໍ້ມູນ ທີ່ກ່ຽວຂ້ອງ ໃຫ້ ຄະນະກຳມະທິການ ຂອງ EUໄດ້ບໍ່?

**ບັນດາປະເທດສາມາດ ແລກປ່ຽນຂໍ້ມູນ ເຊິ່ງພິຈາລະນາ ມີຄວາມເໝາະສົມ ໃຫ້ແກ່ການຈັດຕັ້ງປະຕິບັດລະບຽບການນີ້ (ເປັນຕົ້ນຂໍ້ມູນ ກ່ຽວກັບ ອັດຕາການ ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້) ໃຫ້ ຄະນະກຳມະທິການຂອງ EUໄດ້ບໍ່? ຖ້າສາມາດ, ບັນດາປະເທດນີ້ສາມາດ ແລກປ່ຽນໃຫ້ທາງນອກ ໃນການປຶກສາຫາລືສະເພາະ ທີ່ລະບຸໃນມາດຕາ 29(5)ໄດ້ບໍ່?**

ໃນຄະນະທີ່ ລະບຽບການນີ້ ບໍ່ໄດ້ວາງພັນທະ ໃຫ້ປະເທດທີ ສາມ ເພື່ອແລກປ່ຽນຂໍ້ມູນ ທີ່ກ່ຽວຂ້ອງ ໃຫ້ EU, ບັນດາປະເທດທີ່ຕ້ອງການແລກປ່ຽນ ຂໍ້ມູນເຫຼົ່ານີ້ກັບ EU ແມ່ນມີຄວາມຍິນດີໃຫ້ແລກປ່ຽນ ໃນທຸກຂັ້ນຕອນ ຈາກພົນສັກສິດ ໃນການຈັດຕັ້ງປະຕິບັດ ລະບຽບການນີ້. ເຂົາເຈົ້າສາມາດແລກປ່ຽນຂໍ້ມູນ ເຖິງແມ່ນຈະບໍ່ໄດ້ ເຂົ້າຮ່ວມໃນການປຶກສາຫາລື ກັບ EU ກໍ່ຕາມ, ຕົວຢ່າງ ຢູ່ໃນມາດຕາ 29(5) ຂອງລະບຽບການນີ້ ກ່ຽວຂ້ອງກັບ ການຈັດປະເພດຄວາມສ່ຽງຂອງປະເທດທີ່ຜະລິດສິນຄ້າ ຫຼື ຢູ່ໃນສະພາບການທີ່ແຕກຕ່າງກັນ.

### (65) ຈະໄດ້ພິຈາລະນາ ຄວາມສ່ຽງຂອງສິນຄ້າ ທີ່ຖືກຕ້ອງຕາມກົດໝາຍ ນຳບໍ່?

**ການຈັດລະດັບຍຄວາມສ່ຽງຂອງປະເທດທີ່ຜະລິດສິນຄ້າ ຈະໄດ້ພິຈາລະນາ ຄວາມສ່ຽງ ຂອງສິນຄ້າ ທີ່ຖືກຕ້ອງຕາມກົດໝາຍ ລວມທັງ ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ບໍ່? ນິຕິກຳ ແລະ ນະໂຍບາຍປ່າໄມ້ ຂອງປະເທດທີ່ຜະລິດສິນຄ້າ ຈະເປັນແນວໃດ ໂດຍສະເພາະແມ່ນ 'ການທຳລາຍປ່າໄມ້ທີ່ຖືກຕ້ອງຕາມກົດໝາຍ', ຈະໄດ້ປະເມີນ/ພິຈາລະນາ ໃນໄລຍະ ຂະບວນການຈັດລະດັບຄວາມສ່ຽງຂອງປະເທດທີ່ຜະລິດສິນຄ້າບໍ່?**

ລາຍການມາດຖານ ໄດ້ກຳນົດໃນມາດຕາ 29 ຂອງລະບຽບການນີ້. ການປະເມີນຂອງ ຄະນະກຳມະທິການຂອງ EU ຈະອີງໃສ່ຈຸດປະສົງ ແລະ ການວິເຄາະປະເມີນ ຄວາມໂປ່ງໃສ ອີງໃສ່ມາດຖານທີ່ໄດ້ກຳນົດ ໃນມາດຕາ 29 (3) ແລະ 29 (4) ຂອງລະບຽບການນີ້. ມາດຖານດ້ານປະລິມານທີ່ກ່ຽວຂ້ອງ ມີ: (a) ອັດຕາການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້, (b) ອັດຕາການຂະຫຍາຍຕົວ ຂອງທີ່ດິນກະສິກຳ ສຳລັບ ການຜະລິດສິນຄ້າທີ່ກ່ຽວຂ້ອງ, ແລະ (c) ແນວໂນ້ມທິດທາງຂອງການຜະລິດສິນຄ້າ ແລະ ຜະລິດຕະພັນ ທີ່ກ່ຽວຂ້ອງ.

ຕາມທີ່ໄດ້ລະບຸໄວ້ໃນລະບຽບການນີ້, ການປະເມີນ ອາດຈະພິຈາລະນາ ມາດຖານອື່ນໆ ເຊິ່ງລວມມີ (a) ຂໍ້ມູນທີ່ສະໜອງໃຫ້ໂດຍລັດຖະບານນຳ ແລະ ນິຕິບຸຄົນທີ່ສາມ (NGOs, ພາກອຸດສາຫະກຳ); (b) ຂໍ້ຕົກລົງ ແລະ ເຄື່ອງມືອື່ນໆ ລະຫ່ວາງ ປະເທດທີ່

ກ່ຽວຂ້ອງ ແລະ EU ແລະ/ຫຼື ບັນດາປະເທດສະມາຊິກຂອງຕົນ ທີ່ແກ້ໄຂ ບັນຫາການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້; (c) ການມີນິຕິກຳຂອງປະເທດ ເພື່ອຕ້ານກັບ ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ແລະ ການຈັດຕັ້ງປະຕິບັດກົດໝາຍຂອງເຂົາເຈົ້າ; (d) ການມີຂໍ້ມູນທີມີຄວາມໂປ່ງໃສ ໃນປະເທດ; (e) ຖ້າເປັນໄປໄດ້, ການມີ, ການຈັດຕັ້ງປະຕິບັດໃຫ້ສອດຄ່ອງຕາມ, ຫຼື ມີການຈັດຕັ້ງປະຕິບັດກົດໝາຍທີ່ມີປະສິດທິຜົນ ທີ່ປົກປ້ອງສິດ ຂອງປະຊາຊົນໃນທ້ອງຖິ່ນ; (ແລະ (g) ການຂ້ວາມບາດຂອງສາກົນ ທີ່ບັງຄັບໂດຍ ຄະນະກຳມະທິການ ຄວາມປອດໄພຂອງສະຫະປະຊາຊາດ ຫຼື ຄະນະກຳມະທິການຂອງ EU ຕໍ່ກັບການນຳເຂົ້າ ຫຼື ສົ່ງອອກ ສິນຄ້າ ແລະ ຜະລິດຕະພັນ ທີ່ກ່ຽວຂ້ອງ; ອື່ນໆ.

**(66) ມີການສະໜັບສະໜູນຫັຍງແດ່ ໃຫ້ປະເທດທີ່ຜະລິດສິນ ແລະ ທຸລະກິດຄອບຄົວ?**

**ຈະຊ່ວຍເຫຼືອ ປະເທດທີ່ຜະລິດສິນ ແລະ ທຸລະກິດຄອບຄົວ ແນວໃດແດ່ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມ ລະບຽບການນີ້? ພວກເຮົາຈະຮັບປະກັນແນວໃດ ເພື່ອເຮັດໃຫ້ ບໍ່ມີການຈຳກັດ ທຸລະກິດຄອບຄົວ ໃນຕ່ອງໂສ້ການສະໜອງສິນຄ້າ?**

EU ແລະ ບັນດາປະເທດສະມາຊິກຂອງຕົນ ຈະຮ່ວມມືກັບ ບັນດາປະເທດຄູ່ຮ່ວມພັດທະນາ, ຜູ້ບໍລິໂພກ ແລະ ປະເທດທີ່ຜະລິດສິນຄ້າ ເປັນຕົ້ນ ເພື່ອ ແກ້ໄຂ ຮ່ວມກັນກ່ຽວກັບ ບັນຫາການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ໂດຍຜ່ານແຜນງານເອີຣົບທີມ (TEI) ກ່ຽວກັບ ຕ່ອງໂສ້ມູນຄ່າທຸລະກິດ ສິນຄ້າທີ່ປາສະຈາກການທຳລາຍປ່າໄມ້. ການຮ່ວມມື ແລະ ກົນໄກການຮ່ວມມື ພາຍໃຕ້ ແຜນງານ ເອີຣົບທີມ TEI ຈະຊ່ວຍ ບັນດາປະເທດ ທີ່ຜະລິດສິນຄ້າ ໃນການແກ້ໄຂ ບັນຫາການທຳລາຍປ່າໄມ້ ແລະ ການ ເຊື່ອມໂຊມຂອງປ່າໄມ້ ຕາມຄວາມຕ້ອງການສະເພາະ ທີ່ໄດ້ສະເໜີ ແລະ ບ່ອນທີ່ຕ້ອງການໃນການຮ່ວມມື - ຕົວຢ່າງ, ເພື່ອຊ່ວຍ ທຸລະກິດຄອບຄົວ ແລະ ບັນດາບໍລິສັດ ເພື່ອການຮັບປະກັນ ໃນການຄຸ້ມຄອງ ຕ່ອງໂສ້ມູນຄ່າທຸລະກິດ ສິນຄ້າທີ່ປາສະຈາກການທຳລາຍປ່າໄມ້. ຄະນະກຳມະທິການຂອງ EU ໄດ້ຈັດຕັ້ງປະຕິບັດໂຄງການ ເພື່ອ ເຜີຍແຜ່ ຂໍ້ມູນ, ສ້າງຈິດສຳນຶກ, ແລະ ຕອບ ບັນດາຄຳຖາມ ທາງດ້ານວິຊາການ ຜ່ານກອງປະຊຸມປຶກສາຫາລື ກັບ ທຸລະກິດຄອບຄົວ ໃນປະເທດທີສາມທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ.

ເບິ່ງຂໍ້ມູນລະອຽດຕື່ມ ໃນໂອກາດ ສຳລັບ ທຸລະກິດຄອບຄົວໃນ EUDR

**(67) ອົງປະກອບຕ່າງໆ ຂອງແຜນງານເອີຣົບທີມ (TEI) ມີຫັຍງແດ່?**

**ມີຫັຍງແດ່ທີ່ພົວພັນກັນ ລະຫວ່າງ ອົງປະກອບຕ່າງໆຂອງແຜນງານ TEI: ສູນກາງ, ໂຄງການ ກະສິກຳ ສຳລັບ ລະບົບນິເວດປ່າໄມ້ແບບຍືນຍົງ (SAFE), ໂຄງການ FPI ແລະ ບັນດາສິ່ງອຳນວຍຄວາມສະດວກ ທີ່ວາງແຜນໃນສະພາບເງື່ອນໄຂນີ້, ແຕ່ລວມທັງມີຄວາມເໝາະສົມ ສຳລັບ ສະພາບເງື່ອນໄຂໂດຍລວມ, ຕົວຢ່າງ ໃນລະດັບພາກພື້ນບໍ່? ຈະຫຼີກຈະລ້ຽງຄວາມຊໍ້າຊ້ອນແນວໃດ?**

ແຜນງານ ເອີຣົບທີມ ເປັນສູນກາງ (ເອີ້ນຫຍໍ້: “ສູນກາງ ເປັນສູນ ສຳລັບ ການທຳລາຍປ່າໄມ້”) ຈະສະໜອງຂໍ້ມູນ ແລະ ເຜີຍແຜ່ໃຫ້ປະເທດຄູ່ຮ່ວມພັດທະນາ ກ່ຽວກັບ ຄຸນຄ່າ ໃນຕ່ອງໂສ້ທຸລະກິດ ສິນຄ້າທີ່ປາສະຈາກການທຳລາຍປ່າໄມ້ ແລະ ຈະດຳເນີນ ການສະໜອງຄວາມຮູ້ ເພື່ອປະສານງານກັບ ບັນດາໂຄງການທີ່ມີໃນປະຈຸບັນ ໃນ EU ແລະ ບັນດາປະເທດສະມາຊິກ, ລວມທັງ ບັນດາກິດຈະກຳໃນອານາຄົດ ທີ່ອຸທິດໃຫ້ແກ່ເປົ້າໝາຍຂອງແຜນງານ ເອີຣົບທີມ. ອັນນີ້ ຈະຮັບປະກັນວ່າ ບັນດາກິດຈະກຳຕ່າງໆ ຂອງ

ແຜນງານເອີຣົບທີມ ກ່ຽວກັບ ຄຸນຄ່າ ໃນຕ່ອງໂສ້ທຸລະກິດ ສິນຄ້າທີ່ປາສະຈາກການທຳລາຍປ່າໄມ້ ໃນປະເທດທີ່ຜະລິດສິນຄ້າ ແມ່ນສາມາດເຮັດໃຫ້ຖືກຕ້ອງສອດຄ່ອງ, ໄດ້ກຳນົດຊ່ອງຫວ່າງ ແລະ ຫຼີກລ້ຽງຄວາມຊໍ້າຊ້ອນກັນ.

**ໂຄງການ ກະສິກຳ ສຳລັບ ລະບົບນິເວດປ່າໄມ້ແບບຍືນຍົງ (SAFE)** ເປັນໂຄງການ ທີ່ສຳຄັນທີ່ສຸດ ກ່ຽວກັບ ການຮ່ວມມືຂອງ ແຜນງານ ເອີຣົບທີມ. ໂຄງການ ກະສິກຳ ສຳລັບ ລະບົບນິເວດປ່າໄມ້ແບບຍືນຍົງ ກຳລັງຈັດຕັ້ງປະຕິບັດ ໃນປະເທດ ບຣາຊິນ, ເອກວາດໍ, ອິນໂດເນເຊຍ ແລະ ຊຳເບຍ. ການຮ່ວມມື ກັບປະເທດຕໍ່ໄປ ຈະເພີ່ມ ປະເທດຫວຽດນາມ ແລະ ສາທາລະນະລັດ ກົງໂກ ໃນປີ 2024. ໂຄງການ ກະສິກຳ ສຳລັບ ລະບົບນິເວດປ່າໄມ້ແບບຍືນຍົງ ຈະຜັນຂະຫຍາຍອອກໄປ ກວມເອົາຫຼາຍປະເທດ ຜ່ານການປະກອບສ່ວນທຶນ ຈາກປະເທດສະມາຊິກ ໃນອານາຄົດ.

**ໂຄງການຊ່ວຍເຫຼືອດ້ານວິຊາການ ກ່ຽວກັບ ຄຸນຄ່າໃນຕ້ອງໂສ້ທຸລະກິດ ສິນຄ້າທີ່ປາສະຈາກການທຳລາຍປ່າໄມ້ (Technical Facility on Deforestation-free Value Chains)** ຈະເປັນໂຄງການ ທີ່ສາມາດປັບປ່ຽນໄດ້ ແລະ ເປັນເຄື່ອງມືທີ່ຕ້ອງການ ເພື່ອຊ່ວຍ ບັນດາປະເທດທີ່ຜະລິດສິນຄ້າ ໃຫ້ມີຄວາມຮູ້ ກ່ຽວກັບ ຂໍ້ກຳນົດທາງດ້ານວິຊາການ ເປັນຕົ້ນແມ່ນ ພື້ນທີ່ທີ່ຕັ້ງຂອງສິນຄ້າ, ແຜນທີ່ການນຳໃຊ້ທີ່ດິນ ແລະ ແຫຼ່ງທີ່ມາຂອງສິນຄ້າ, ໂດຍສະເພາະແມ່ນສຸມໃສ່ ທຸລະກິດຄອບຄົວ. ບັນດາກິດຈະກຳນີ້ ຈະປະສານງານຢ່າງໃກ້ສິດ ກັບ EU ປະຈຳຢູ່ແຕ່ລະປເທດ ແລະ ວາງໃຫ້ສອດຄ່ອງ ກັບ ບັນດາໂຄງການທີ່ມີໃນປະຈຸບັນ ລວມທັງໂຄງການ ກະສິກຳ ສຳລັບ ລະບົບນິເວດປ່າໄມ້ແບບຍືນຍົງ, ເພື່ອສ້າງ ການຕື່ມເຕັມເຊິ່ງກັນ ແລະ ກັນ ແລະ ຫຼີກລ້ຽງຄວາມຊໍ້າຊ້ອນກັນ.

### (68) ແຜນງານ ຂອງ ເອີຣົບທີມ (Team Europe initiative) ມີການພົວພັນແນວໃດ ກັບ ຄຳສັ່ງ ວ່າດ້ວຍ ການປະເມີນຄວາມຖືກຕ້ອງຂອງສິນຄ້າທີ່ມີຄວາມຮັບຜິດຊອບຂອງບໍລິສັດ (CSDDD)?

ໃນທັດສະນະ ຂອງຂະບວນການ ທາງດ້ານນິຕິກຳໃນປະຈຸບັນ ກ່ຽວກັບ ຄຳສັ່ງ ວ່າດ້ວຍ ການປະເມີນຄວາມຖືກຕ້ອງຂອງສິນຄ້າທີ່ມີຄວາມຮັບຜິດຊອບຂອງບໍລິສັດ, ຂັ້ນສູນກາງ ຂອງແຜນງານ ເອີຣົບທີມ ຈະເຮັດວຽກຢ່າງໃກ້ສິດກັບ ຮ່ວມກັບ ຫ້ອງການ ຂອງ EU ກ່ຽວກັບ ຄຳສັ່ງ ວ່າດ້ວຍ ການປະເມີນຄວາມຖືກຕ້ອງຂອງສິນຄ້າທີ່ມີຄວາມຮັບຜິດຊອບຂອງບໍລິສັດ, ໂດຍສະເພາະແມ່ນ ກ່ຽວຂ້ອງກັບ ມູນຄ່າໃນຕ່ອງໂສ້ທຸລະກິດກະສິກຳ ແລະ ທຸລະກິດຄອບຄົວ ເຊິ່ງຈະໄດ້ຮັບຜົນກະທົບໂດຍ EUDR ແລະ CSDDD.

### (69) ພວກເຮົາ ສາມາດຫຼຸດຜ່ອນຄວາມສ່ຽງ ຂອງລະດັບ "ຄວາມສ່ຽງຫຼາຍ" ທີ່ບໍ່ຖືກຕ້ອງ ແນວໃດ?

**ພວກເຮົາ ສາມາດຫຼຸດຜ່ອນຄວາມສ່ຽງ ຂອງຜູ້ປະກອບການ ເພື່ອຫຼີກລ້ຽງ ຕ່ອງໂສ້ການສະໜອງສິນຄ້າໃດໜຶ່ງ ຫຼື ປະເທດ ຫຼື ພາກພື້ນໃດໜຶ່ງທີ່ຜະລິດສິນຄ້າ ເຊິ່ງໄດ້ຈັດເປັນລະດັບ 'ຄວາມສ່ຽງຫຼາຍ' ແນວໃດ?**

ຜູ້ປະກອບການທີ່ຊື້ສິນຄ້າ ຈາກບັນດາ ປະເທດ ທີ່ມີຄວາມສ່ຽງ ມາດຕະຖານ ແລະ ມີຄວາມສ່ຽງຫຼາຍ ຫຼື ພາກສ່ວນໃດໜຶ່ງຂອງ ປະເທກ ແມ່ນມີພັນທະ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໃນມາດຕະຖານອັນດຽວກັນ. ສິ່ງທີ່ມີຄວາມແຕກຕ່າງກັນ ແມ່ນ ໃນເມື່ອຂົນສົ່ງ ສິນຄ້າອອກຈາກປະເທດທີ່ມີຄວາມສ່ຽງຫຼາຍ ແມ່ນຈະເພີ່ມການກວດກາ ຈາກອົງການຈັດຕັ້ງທີ່ຮັບຜິດຊອບ (9% ສໍາລັບຜູ້ປະກອບການ ທີ່ຊື້ສິນຄ້າ ຈາກ ພື້ນທີ່ທີ່ມີຄວາມສ່ຽງຫຼາຍ). ໃນລັກສະນະນີ້, ການປ່ຽນແປງຢ່າງໄວວາ ໃນການສະ ໜອງສິນຄ້າ ແມ່ນຈະບໍ່ຮັບປະກັນ ຫຼື ບໍ່ຄາດຄະເນວ່າຈະມີ. ພ້ອມກັນນີ້, ການຈັດປະເພດ ຄວາມສ່ຽງຫຼາຍ ແມ່ນຈະໄດ້ດໍາເນີນ ການປຶກສາຫາລື ສະເພາະກັບ ຄະນະກໍາມະທິການຂອງ EU ເພື່ອແກ້ໄຂ ຮາກເງົ້າຂອງ ການທໍາລາຍປ່າໄມ້ ແລະ ການເຊື່ອມໂຊມ ຂອງປ່າໄມ້ຮ່ວມກັນ ລວມທັງມີຈຸດປະສົງ ເພື່ອຫຼຸດຜ່ອນ ລະດັບຄວາມສ່ຽງຂອງເຂົາເຈົ້າ.

### (70) EU ຈະຮັບປະກັນ ຄວາມໂປ່ງໃສໄດ້ແນວໃດ?

ຂະບວນການ ທີ່ກ້າວໄປສູ່ ລະບົບການຈັດລະດັບຄວາມສ່ຽງຂອງປະເທດທີ່ຜະລິດສິນຄ້າ ແມ່ນຕ້ອງມີຄວາມໂປ່ງໃສ. ຈະໄດ້ ດໍາເນີນ ການປັບປຸງ ແລະ ປຶກສາຫາລື ກ່ຽວກັບ ວິທີການຈັດລະດັບຄວາມສ່ຽງ ເປັນປົກກະຕິ ຜ່ານການປະຊຸມກັບພາກສ່ວນທີ່ ກ່ຽວຂ້ອງ ກ່ຽວກັບ ການທໍາລາຍປ່າໄມ້, ເຊິ່ງ ຈະມີການເຂົ້າຮ່ວມຂອງ ບັນດາປະເທດທີສາມ, ໄປຄຽງຄູ່ກັບການເຂົ້າຮ່ວມຂອງ 27ປະເທດສະມາຊິກຂອງ EU. ຄະນະກໍາມະທິການຂອງ EU ຈະປັບປຸງ ກ່ຽວກັບ ວິທີການ ແລະ ວິທີການທີ່ຈະນໍາໃຊ້.

ພ້ອມກັນນັ້ນ, ອີງໃສ່ພັນທະ ພາຍໃຕ້ລະບຽບການນີ້, ຄະນະກໍາມະທິການຂອງ EU ຈະຈັດ ການປຶກສາຫາລື ສະເພາະ ກັບທຸກ ປະເທດ ທີ່ເປັນ ຫຼື ຈະຈັດເປັນປະເທດທີ່ມີ ຄວາສ່ຽງຫຼາຍ (ກ່ອນຈະຈັດລັບຄວາມສ່ຽງ), ທີ່ມີຈຸດປະສົງ ເພື່ອຫຼຸດຜ່ອນ ລະດັບ ຄວາມສ່ຽງຂອງເຂົາເຈົ້າ.' ອັນນີ້ ແມ່ນເພື່ອຮັບປະກັນວ່າ ຈະບໍ່ມີການປະກາດຢ່າງກະທັນຫັນ ກ່ຽວກັບ ສະຖານະຄວາມສ່ຽງ ແລະ ຈະ ອະນຸຍາດໃຫ້ ໃຫ້ມີການປຶກສາຫາລື ຢ່າງລະອຽດ. ການປຶກສາຫາລື ອັນນີ້ ຈະໃຫ້ໂອກາດໃຫ້ ປະເທດທີ່ຜະລິດສິນຄ້າ ເພື່ອສະ ໜອງຂໍ້ມູນທີ່ກ່ຽວຂ້ອງ ເພີ່ມຕື່ມ.

°°0°°

## ການສະໜັບສະໜູນ ການຈັດຕັ້ງປະຕິບັດລະບຽບການ

### (71) ລະບົບຖານຂໍ້ມູນ ແລະ 'ລະບົບປະຕູດຽວຂອງ EU 'ແມ່ນຫັຍງ?

ລະບົບຖານຂໍ້ມູນ (IS) ແມ່ນລະບົບ IT ເຊິ່ງຈະປະກອບມີ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ສົ່ງໃຫ້ໂດຍ ຜູ້ ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມ ຂໍ້ກໍານົດຂອງລະບຽບການນີ້. ລະບົບຖານຂໍ້ ມູນນີ້ ຈະດໍາເນີນງານ ໂດຍ ການຍື່ນສະມັກ ຕາມລະບຽບການ ແລະ ຈະສະໜອງໃຫ້ ຜູ້ນໍາໃຊ້ ກ່ຽວກັບ ການດໍາເນີນງານ ທີ່ລະບຸ ໄວ້ໃນ ມາດຕາ 33(2) ຂອງລະບຽບການນີ້.

ລະບົບປະຕູດຽວສິ່ງແວດລ້ອມ ຂອງ EU ສໍາລັບພາສີ (EU SWE-C) ເປັນກອບວຽກ ເຊິ່ງສາມາດ ດໍາເນີນງານ ລະຫ່ວາງ IT ຂອງພາສີ ແລະ ລະບົບ ບໍ່ແມ່ນພາສີ, ເຊັ່ນ: ລະບົບຖານຂໍ້ມູນ ທີ່ສ້າງຕັ້ງຂຶ້ນ ອີງໃສ່ມາດຕາ 33 ຂອງລະບຽບການນີ້. ອີງປະກອບ

ສູນກາງຂອງ EU SWE-C, ໄດ້ຮັບຮູ້ເປັນລະບົບ  EU CSW-CERTEX, ຈະເຊື່ອມຕໍ່ ກັບລະບົບຖານຂໍ້ມູນ ກັບ ລະບົບ IT ພາສີແຫ່ງຊາດ ແລະ ຈະສາມາດ ແລກປ່ຽນ ແລະ ວິເຄາະຂໍ້ມູນ ເພື່ອສິ່ງໃຫ້ອົງການພາສີ  ແລະ ບໍ່ແມ່ນອົງການພາສີ   ໂດຍຜູ້ປະກອບທາງເສດຖະກິດ. ລະບົບປະຕູດຽວ ຈະຮັບປະກັນວ່າ ການແລກປ່ຽນຂໍ້ມູນ ໃນເວລາຕົວຈິງ ແລະ ການຮ່ວມມືແບບດີຈິຕ ອນລະຫ່ວາງ ບັນດາ ອົງການພາສີ    ແລະ ບັນດາອົງການຈັດຕັ້ງທີ່ຮັບຜິດຊອບ ທີ່ຮັບຜິດຊອບ ຈັດຕັ້ງປະຕິບັດ ຮູບແບບ ທີ່ບໍ່ແມ່ນພາສີ ລວມທັງ ຢູ່ໃນພາກສະໜາມ ໃນການປ້ອງກັນສິ່ງແວດລ້ອມ.

### (72) ການປົກປ້ອງ ຄວາມປອດໄພຂອງຂໍ້ມູນມີຫັຍງແດ່?

ລະບົບຖານຂໍ້ມູນ ແລະ ຕາມມາດ້ວຍ ການເຊື່ອມຕໍ່ກັບ ສິ່ງແວດລ້ອມປະຕູດຽວ ຂອງ EU ສໍາລັບ ພາສີ, ແມ່ນຈະສອດຄ່ອງກັບ ບົດບັນຍັດ ທີ່ກ່ຽວຂ້ອງ ແລະ ສາມາດນໍາໃຊ້ ທາງດ້ານ ການປ້ອງກັນຂໍ້ມູນ. ຄວາມສອດຄ່ອງກັບ ນະໂຍບາຍການເປີດເຜີຍຂໍ້ມູນຂອງ EU, ຄະນະກໍາມະທິການຂອງ EU ຈະໃຫ້ສັງຄົມ ເຂົ້າເຖິງ ຂໍ້ມູນ ເພື່ອຕື່ມຂໍ້ມູນໃສ່ຕາຕະລາງທີ່ບໍ່ເປີດເຜີຍຊື່ ໃນລະບົບຖານຂໍ້ມູນ ໃນຮູບແບບຂອງການເປີດເຜີຍ ເຊິ່ງສາມາດ ອ່ານໄດ້ໂດຍເຄື່ອງຈັກ ແລະ ຮັບປະກັນ ການດໍາເນີນງານເຊິ່ງກັນ ແລະ ກັນ, ການນໍາໃຊ້ຄືນ ແລະ ການເຂົ້າເຖິງຂໍ້ມູນ.

### (73) ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ສາມາດລົງທະບຽນໄດ້ແນວໃດ?

**ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ສາມາດນໍາໃຊ້ ຕົວເລກປະຈໍາຕົວ (ID number)/ຕົວເລກ ລົງທະບຽນຂອງບໍລິສັດ ຫັຍງແດ່ ສໍາລັບ ໃນລະບົບຖານຂໍ້ມູນ? ຜູ້ປະກອບການ/ຜູ້ຄ້າຂາຍສິນຄ້າຕ້ອງເຮັດແນວໃດ, ຜູ້ທີ່ບໍ່ມີຕົວເລກ EORI ແລະ ບໍ່ມີຕົວເລກພາສີມູນຄ່າເພີ່ມ VAT, ລົງທະບຽນ ສໍາລັບ ລະບົບຖານຂໍ້ມູນ?**

ຜູ້ປະກອບການ ເຊິ່ງນໍາເຂົ້າ ສິນຄ້າ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ ຕ້ອງສະໜອງ ຕົວເລກ **ການລົງທະບຽນຜູ້ປະກອບການທາງດ້ານເສດຖະກິດ ແລະ ເລກປະຈໍາຕົວ** (EORI) ຂອງຕົນ ໃນເມື່ອລົງທະບຽນ ໃນລະບົບ TRACES NT. ປະກອບການ/ຜູ້ຄ້າຂາຍສິນຄ້າພາຍໃນ, ຜູ້ທີ່ບໍ່ມີ ເລກປະຈໍາຕົວ EORI ອາດຈະລົງທະບຽນ ຜ່ານໜຶ່ງໃນ ຜູ້ກໍານົດອື່ນໆ ທີ່ສະໜັບສະໜູນໂດຍລະບົບ TRACES ເຊັ່ນ ເລກປະຈໍາຕົວ VAT, ເລກປະຈໍາຕົວຂອງບໍລິສັດແຫ່ງຊາດ ຫຼື ເລກປະຈໍາຕົວ ຜູ້ຈ່າຍພາສີ.

### (74) ລະບົບຖານຂໍ້ມູນນີ້ ສາມາດເກັບຂໍ້ມູນທີ່ໃຊ້ແລ້ວ ເປັນປະຈໍາໄດ້ບໍ່?

**ຈະເປັນໄປໄດ້ບໍ່ ເພື່ອ 'ເກັບ' ທີ່ນໍາໃຊ້ແລ້ວ ເປັນປະຈໍາ (ເຊັ່ນ: ຜູ້ສະໜອງສິນຄ້າຫຼັກຂອງ ຜູ້ປະກອບການ/ຜູ້ຄ້າຂາຍສິນຄ້າ) ໃນລະບົບຖານຂໍ້ມູນ, ເຊິ່ງສາມາດປ້ອນຂໍ້ມູນໄດ້ຢ່າງງ່າຍດາຍ ແບບໂອໂຕ ແທນທີ່ຈະ ຕ້ອງຕື່ມຂໍ້ມູນຄືນ ສໍາລັບ ແຕ່ລະບົດລາຍງານການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ບໍ່?**

ລະບົບຖານຂໍ້ມູນ ບໍ່ມີລະບົບການດໍາເນີນງານແບບນີ້ໃນປະຈະບັນ. ແຕ່ຢ່າງໃດກໍ່ຕາມ, ມັນຈະເປັນການຊໍ້າຊ້ອນ ສໍາລັບບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ໄດ້ສົ່ງໄປແລ້ວ, ສະນັ້ນຈິ່ງເປັນການຫຼຸດຜ່ອນ ເວລາ ທີ່ຕ້ອງການ ໃນການຕື່ມຂໍ້

ມູນ ບົດລາຍງານໃໝ່. ອັນນີ້ແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ ໃນການປ່ຽນແປງທີ່ຈຳເປັນ ສຳລັບ ບົດລາຍງານທີ່ຊ້ຳຊ້ອນກັນ ເພື່ອຮັບປະກັນຄວາມຖືກຕ້ອງ. ພ້ອມກັນນີ້, ຈະສະໜອງ ປຸ່ມ 'ການນຳເຂົ້າ', ເຊິ່ງອະນຸຍາດໃຫ້ຜູ້ປະກອບການເສດຖະກິດເພື່ອ ປ້ອນຂໍ້ມູນເຂົ້າ ກ່ຽວກັບ ສະຖານສະຖານທີ່ຜະລິດ ຈາກໄຟເອກະສານໃນເມື່ອກ່ອນ (Format GeoJSon).

**(75) ລະບົບຖານຂໍ້ມູນນີ້ສາມາດ ຊ່ວຍປະຊາຊົນ ໃນການ ກຳນົດ ພື້ນທີ່ທີ່ຕັ້ງຂອງສິນຄ້າ ຂອງເຂົາເຈົ້າບໍ່?**

ບໍ່, ລະບົບຖານຂໍ້ມູນນີ້ ດຳເນີນເປັນ ບ່ອນເກັບມ້ຽນ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ສົ່ງໃຫ້ໂດຍຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ອີງຕາມມາດຕາ 4(2) ແລະ ມາດຕາ 5(1). ສະນັ້ນ, ລະບົບຖານຂໍ້ມູນນີ້ບໍ່ໄດ້ ສະໜອງຊອບແວ ຫຼື ເຄື່ອງມື ເພື່ອກຳນົດ ຈຸດພິກັດ ພື້ນທີ່ທີ່ຕັ້ງຂອງສິນຄ້າ.

**(76) ສາມາດປັບປຸງ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ໄດ້ບໍ່?**

ການລຶບລ້າງ ຫຼື ການປັບປຸງ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ທີ່ໄດ້ສົ່ງໄປແລ້ວ ສາມາດປັບປຸງໄດ້ພາຍໃນ 72 ຊົ່ວໂມງ ຫຼັງຈາກໄດ້ປ້ອນ ເລກທີ ຂອງບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ເຂົ້າໃນລະບົບຖານຂໍ້ມູນ. ການລຶບລ້າງ ຫຼື ການປັບປຸງ ບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຈະເປັນໄປບໍ່ໄດ້ ໃນເມື່ອຖືກນຳໃຊ້ ໃນການແຈ້ງພາສີ, ໃນບົດລາຍງານ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ອື່ນ ຫຼື ຄວາມສອດຄ່ອງກັບ ຜະລິດຕະພັນ ທີ່ໄດ້ຈຳໜ່າຍ ຫຼື ຂາຍ ໃນຕະຫຼາດ ຫຼື ສົ່ງອອກ.

°°0°°

# ເວລາໃນການຈັດຕັ້ງປະຕິບັດລະບຽບການ

**(77) ເວລາໃດ ລະບຽບການມີຜົນສັກສິດ ໃນການບັງຄັບໃຊ້ ແລະ ເລີ່ມຕົ້ນຈັດຕັ້ງປະຕິບັດ?**

ລະບຽບການນີ້ ໄດ້ເຜີຍແຜ່ ຢ່າງເປັນທາງການໃນວາລະສານຂອງ EU ໃນວັນທີ 9 ມິຖຸນາ 2023. ລະບຽບການນີ້ ໄດ້ມີຜົນສັກສິດ ໃນການບັງຄັບໃຊ້ ໃນວັນທີ 29 ມິຖຸນາ 2023. ແຕ່ຢ່າງໃດກໍ່ຕາມ, ການຈັດຕັ້ງປະຕິບັດ ບາງມາດຕາ ໃນວັກທີ 2 ຂອງມາດຕາ 38 ຈະມີຜົນ ໃນການຈັດຕັ້ງປະຕິບັດ ໃນວັນທີ 30 ທັນວາ 2024 (ໄລຍະຂ້າມຜ່ານ 18 ເດືອນ) ແລະ ວັນທີ 30 ມິຖຸນາ 2025 ((ໄລຍະຂ້າມຜ່ານ 24 ເດືອນ) ສຳລັບ ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ.

**(78) ຈະເຮັດຫັຍງແດ່ ໃນໄລຍະຂ້າມຜ່ານນີ້?**

**ຜະລິດຕະພັນ ຈະຈຳໜ່າຍ ໃນຕະຫຼາດ EU ລະຫ່ວາງ ວັນທີສັກສິດໃນການບັງຄັບໃຊ້ ແລະ ວັນທີ່ຈັດຕັ້ງປະຕິບັດ ລະບຽບການນີ້ ແມ່ນຕ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງ ຕາມຂໍ້ກຳນົດຂອງລະບຽບການນີ້ບໍ່?**

ການດຳເນີນ ການຈັດຕັ້ງປະຕິບັດ ລະບຽບການ ສຳລັບ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ວິສາຫະກິດຂະໜາດໃຫ່ຍ ແລະ ຂະໜາດກາງ ແມ່ນໃຊ້ເວລາ ປະມານ 18 ເດືອນ (ໃນວັນທີ 30 ທັນວາ 2024) ຫຼັງຈາກ ລະບຽບການ ມີຜົນສັກສິດໃນການບັງຄັບໃຊ້. ອັນນີ້ ກໍ່ໝາຍຄວາມວ່າ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ບໍ່ມີຄວາມຈຳເປັນ ຕ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງ ກັບລະບຽບການນີ້ ໃນເມື່ອຈຳໜ່າຍສິນຄ້າ ໃນຕະຫຼາດ EU ກ່ອນວັນທີ່ນີ້. ສຳລັບ ວິສາຫະກິດຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ ທີ່ຢູ່ໃນໄລຍະຂ້າມຜ່ານນີ້ ແມ່ນສາມາດຂະຫຍາຍເວລາ ເປັນ (24 ເດືອນ ຫຼັງຈາກ ລະບຽບການມີຜົກສັກສິດໃນການບັງຄັບໃຊ້ ໃນວັນທີ 30 ມິຖຸນາ 2025).

**(79) ຈະພິສູດຜະລິດຕະພັນໄດ້ແນວໃດ ກ່ອນວັນທີ່ ລະບຽບການມີຜົນສັກສິດໃນການບັງຄັບໃຊ້?**
**ໃຜເປັນຜູ້ຮັບ ຜິດຊອບໃນການພິສູດຕໍ່ ສິນຄ້າ ຫຼື ຜະລິດຕະພັນທີ່ກ່ຽວຂ້ອງ ເຊິ່ງຜູ້ປະກອບການ ຕ້ອງການ ການຈຳໜ່າຍສິນຄ້າໃນຕະຫຼາດ ຫຼື ສົ່ງອອກ ທີ່ຜະລິດ ກ່ອນວັນທີ ທີ່ ລະບຽບການມີຜົນສັກສິດບັງຄັບໃຊ້ ແລະ ລະບຽບການນີ້ ນຳໃຊ້ໄດ້ນຳໃຊ້ແມ່ນບໍ່?**

ລະບຽບການນີ້ ແມ່ນຈັດຕັ້ງປະຕິບັດໄດ້ ອີງຕາມຂໍ້ກຳນົດ ໃນມາດຕາ 1 (1) ຖ້າ ເງື່ອນໄຂ ຂອງມາດຕາ 1 (2) ໄດ້ບັນລຸ. ຜູ້ປະກອບການ ທີ່ຮັບຜິດຊອບຕໍ່ ບັນຫາ ການພິສູດ ສຳລັບ ຂໍ້ຍົກເວັ້ນນີ້ ແລະ ຕ້ອງສາມາດສະໜອງ ຂໍ້ມູນທີ່ກ່ຽວຂ້ອງ ເພື່ອພິສູດທີ່ສົມເຫດສົມຜົນ ເຊິ່ງ ບັນດາເງື່ອນ ຂອງມາດຕາ 1(2) ແມ່ນຕ້ອງຖືກຕ້ອງ. ໃນກໍລະນີນີ້ ຜູ້ປະກອບການ ບໍ່ມີພັນທະ ເພື່ອສົ່ງ ບົດລາຍງານການ ປະເມີນ ຄວາມຖືກຕ້ອງຂອງສິນຄ້າ, ຜູ້ປະກອບການ ຕ້ອງໄດ້ເກັບຮັກສາ ເອກະສານຕະຫຼອດເວລາ ເພື່ອພິສູດ ຂໍ້ຍົກເວັ້ນ ສຳລັບການນຳໃຊ້ ສຳລັບ ລະບຽບການ ແລະ ພັນທະຂອງລະບຽບການນີ້.

**(80) ມີພັນທະຫັຍງແດ່ ສຳລັບ ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME ໃນເມື່ອເຂົາເຈົ້າຈຳໜ່າຍສິນຄ້າ ໃນຕະຫຼາດ ຫຼື ສົ່ງອອກ ຜະລິດຕະພັນທີ່ກ່ຽວຂ້ອງ ໃນໄລຍະຂ້າມຜ່ານ (ເຊັ່ນ: ໃນໄລຍະລະຫ່ວາງ ລະບຽບການມີຜົນບັງຄັບໃຊ້ ໃນວັນທີ (30/6/2023) ແລະ ການຈັດຕັ້ງປະຕິບັດລະບຽບການ ໃນວັນທີ (30/12/2024)**
ສະພາບການນີ້ ອາດຈະອະທິບາຍອອກເປັນ ບາງຮູບການດັ່ງລຸ່ມນີ້:

1. *ສິນຄ້າທີ່ກ່ຽວຂ້ອງ (ເຊັ່ນ: ຢາງພາລາທຳມະຊາດ - ເລກລະຫັດ CN 4001) ທີ່ຈຳໜ່າຍ ໃນຕະຫຼາດໃນໄລຍະ ຂ້າມຜ່ານ, ເຊິ່ງບໍ່ຈຳເປັນຕ້ອງກຳນົດພື້ນທີ່ທີ່ຕັ້ງຂອງສິນຄ້າ ແລະ ເພື່ອນຳໃຊ້ເຂົ້າໃນການປຸງແຕ່ງ ຜະລິດຕະພັນສຳເລັດຮູບທີ່ກ່ຽວຂ້ອງ (ເຊັ່ນ: ຢາງຕີນລົດ - ເລກລະຫັດ CN 4011), ຫຼັງຈາກນັ້ນ ໄດ້ຈຳໜ່າຍ ໃນຕະຫຼາດ (ຫຼືສົ່ງອອກ) ພາຍຫຼັງວັນທີ 30/12/2024.*

ຖ້າສິນຄ້າ ໄດ້ຈຳໜ່າຍ ໃນຕະຫຼາດໃນໄລຍະຂ້າມຜ່ານນີ້ ເຊັ່ນ: ກ່ອນລະບຽບການມີຜົນບັງຄັບໃນການນຳໃຊ້, ໃນເມື່ອຈຳໜ່າຍຜະລິດຕະພັນສຳເລັດຮູບ ໃນຕະຫຼາດ, ພັນທະຂອງຜູ້ປະກອບການ (ແລະຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME) ຈະໄດ້ຈຳກັດການເກັບຂໍ້ມູນ ແລະ ຫຼັກຖານທີ່ຖືກຕ້ອງ ເພື່ອພິສູດ ວ່າສິນຄ້າທີ່ກ່ຽວຂ້ອງ (ຢາງພາລາ) ທີ່ນຳໃຊ້ ເພື່ອຜະລິດ ຜະລິດຕະພັນທີ່ກ່ຽວຂ້ອງນີ້

(ຢາງຕີນລົດ) ທີ່ໄດ້ຈຳໜ່າຍ ໃນຕະຫຼາດ ກ່ອນ ລະບຽບການມີຜົນສັກສິດໃນການບັງຄັບໃຊ້. ອັນນີ້ແມ່ນບໍ່ມີຄວາມລຳອຽງ ອີງຕາມມາດ 37.2 ທີ່ກ່ຽວຂ້ອງກັບ ໄມ້ ແລະ ຜະລິດຕະພັນໄມ້[1].

ຖ້າສິນຄ້າ ໄດ້ຈຳໜ່າຍ ໃນຕະຫຼາດ ຫຼື ສົ່ງອອກ ພາຍຫຼັງໄລຍະຂ້າມຜ່ານເຊັ່ນ: ພາຍຫຼັງວັນທີ 30/12/2024, ຜູ້ປະກອບການ (ແລະຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME) ຕ້ອງປະຕິບັດຕາມ ບັນດາພັນທະຂອງລະບຽບການນີ້. ພ້ອມກັນນີ້, ສຳລັບສິ້ນສ່ວນຂອງຜະລິດຕະພັນ ທີ່ໄດ້ຜະລິດ ເປັນສິນຄ້າ ທີ່ຈຳໜ່າຍ ໃນຕະຫຼາດ ພາຍຫຼັງວັນທີ 30/12/2024, ປະກອບການ (ແລະຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME) ຕ້ອງປະຕິບັດຕາມ ບັນດາພັນທະຂອງລະບຽບການນີ້.

2. *ສິນຄ້າທີ່ກ່ຽວຂ້ອງ (ເຊັ່ນ: ນ້ຳມັນເບີໝາກໂກໂກ້- ເລກລະຫັດ CN) ທີ່ຈຳໜ່າຍ ໃນຕະຫຼາດໃນໄລຍະ ຂ້າມຜ່ານ, ເຊິ່ງບໍ່ຈຳເປັນຕ້ອງກຳນົດພື້ນທີ່ທີ່ຕັ້ງຂອງສິນຄ້າ ແລະ ເພື່ອນຳໃຊ້ເຂົ້າໃນການປຸງແຕ່ງ ຜະລິດຕະພັນສຳເລັດຮູບທີ່ກ່ຽວຂ້ອງ (ເຊັ່ນ: ໂຊໂຄແລັດ - ເລກລະຫັດ CN 1806),ເຊິ່ງໄດ້ຈຳໜ່າຍໃນຕະຫຼາດ (ຫຼືສົ່ງອອກ) ໂດຍຜູ້ປະກອບການທີ່ທັດລົງໄປ ພາຍຫຼັງວັນທີ 30/12/2024.*

ໃນກໍລະນີນີ້, ພັນທະຂອງຜູ້ປະກອບການ (ແລະຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME) ທີ່ຈຳໜ່າຍ ສິນຄ້າໃນຕະຫຼາດ ຫຼື ສົ່ງອອກ ຜະລິດຕະພັນທີ່ສຳເລັດຮູບ (ໂຊໂຄແລັດ), ຈະໄດ້ຈຳກັດການເກັບຂໍ້ມູນ ແລະ ຫຼັກຖານທີ່ຖືກຕ້ອງ ເພື່ອພິສູດ ວ່າຜະລິດຕະພັນທີ່ສຳເລັດຮູບ (ນ້ຳມັນເບີ ໝາກໂກໂກ້) ທີ່ໄດ້ຈຳໜ່າຍໃນຕະຫຼາດ ກ່ອນລະບຽບການມີຜົນບັງຄັບໃຊ້. ສຳລັບ ສິ້ນສ່ວນ ຂອງຜະລິດຕະພັນທີ່ກ່ຽວຂ້ອງ ສຸດທ້າຍ ເຊິ່ງໄດ້ປຸງແຕ່ງ ປະສົມກັບ ຜະລິດຕະພັນທີ່ກ່ຽວຂ້ອງ ອື່ນໆ ທີ່ຈຳໜ່າຍໃນຕະຫຼາດພາຍຫຼັງວັນທີ 30/12/2024, ຜູ້ປະກອບການ (ແລະຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME) ຕ້ອງປະຕິບັດຕາມ ບັນດາພັນທະຂອງລະບຽບການນີ້. ອັນນີ້ແມ່ນບໍ່ມີຄວາມລຳອຽງ ອີງຕາມມາດ 37.2 ທີ່ກ່ຽວຂ້ອງກັບ ໄມ້ ແລະ ຜະລິດຕະພັນໄມ້.

3. *ຜູ້ປະກອບການ ທີ່ຈຳໜ່າຍ ສິນຄ້າ ຫຼື ຜະລິດຕະພັນ ທີ່ກ່ຽວຂ້ອງ ໃນຕະຫຼາດ ໃນໄລຍະຂ້າມຜ່ານ, ຫຼັງຈາກນັ້ນ ໄດ້ຂາຍ ໂດຍ ຜູ້ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME ຜູ້ໜຶ່ງ ຫຼື ຫຼາຍຄົນ ພາຍຫຼັງວັນທີ 30/12/2024.*

ໃນຮູບການນີ້, ພັນທະຂອງ *ຄ້າຂາຍສິນຄ້າທີ່ບໍ່ແມ່ນ SME* ຈະໄດ້ຈຳກັດການເກັບຂໍ້ມູນ ແລະ ຫຼັກຖານທີ່ຖືກຕ້ອງ ເພື່ອພິສູດວ່າສິນຄ້າທີ່ກ່ຽວຂ້ອງນີ້ ຫຼື ຜະລິດຕະພັນທີ່ກ່ຽວຂ້ອງນີ້ ໄດ້ຈຳໜ່າຍໃນຕະຫຼາດ ກ່ອນລະບຽບການມີຜົນບັງຄັບໃຊ້. ອັນນີ້ແມ່ນບໍ່ມີຄວາມລຳອຽງ ອີງຕາມມາດ 37.2 ທີ່ກ່ຽວຂ້ອງກັບ ໄມ້ ແລະ ຜະລິດຕະພັນໄມ້.

**°°0°°**

---

[1] ລະບຽບການ (EU) ເລກທີ 995/2010 ຈະສືບຕໍ່ນຳໃຊ້ ຮອດວັນທີໄ 31 ທັນວາ 2027 ສຳລັບ ໄມ້ ແລະ ຜະລິດຕະພັນໄມ້ ຕາມທີ່ໄດ້ກຳນົດໃນມາດຕາ 2, ຂໍ້ (a), ຂອງລະບຽບການ (EU) ເລກທີ 995/2010 ທີ່ໄດ້ຜະລິດກ່ອນວັນທີ 29 ມິຖຸນາ 2023 ແລະ ຈຳໜ່າຍໃນຕະຫຼາດ ຈາກວັນທີ 30 ທັນວາ 2024

## ຄຳຖາມອື່ນໆ

### (81) ຄະນະກຳມະທິການຂອງ EU ຈະອອກບັນດາບົດແນະນຳບໍ່?

ຄະນະກຳມະທິການຂອງ EU ກຳລັງຮ່າງ **ບັນດາບົດແນະນຳ** ເພື່ອຊີ້ແຈງ ບາງດ້ານຂອງລະບຽບການນີ້, ເປັນຕົ້ນ ກ່ຽວກັບ ນິຍາມ "ການນຳໃຊ້ ສຳລັບ ການຜະລິດ ກະສິກຳ", ເຊິ່ງຈະໄດ້ຊີ້ແຈງ ບັນຫາທີ່ກ່ຽວຂ້ອງກັບ ການປູກຝັງແບບກະສິກຳປ່າໄມ້ ແລະ ທີ່ດິນກະສິກຳ, ການຢັ້ງຢືນຄວາມຖືກຕ້ອງ, ຄວາມຖືກຕ້ອງຕາມກົດໝາຍ ແລະ ກ່ຽວກັບ ດ້ານອື່ນໆ ເຊິ່ງ ພາກສ່ວນທີ່ກ່ຽວຂ້ອງມີຄວາມສົນໃຈ ໃນພາກປະຕິບັດຕົວຈິງ. ບັນດາເອກສານບົດແນະນຳນີ້ ມີແຜນທີ່ຈະໄດ້ຈັບພິມ ກ່ອນການປະກາດ ການຈັດຕັ້ງປະຕິບັດ ລະບຽບການນີ້.

ຄະນະກຳມະທິການຂອງ EU ກຳລັງເກັບ ຄຳເຫັນ ແລະ ສົ່ງເສີມ ການປຶກສາຫາລື ນຳພາກສ່ວນທີ່ກ່ຽວຂ້ອງ ຜ່ານ ບັນດາເວທີກອງປະຊຸມກັບຫຼາຍພາກສ່ວນ ກ່ຽວກັບ ການປົກປັກຮັກສາ ແລະ ການຟື້ນຟູ ປ່າໄມ້ຂອງໂລກ ຢູ່ໃນຮູບແບບຂອງການສະໜອງບົດແນະນຳທີ່ບໍ່ເປັນທາງການ ກ່ຽວກັບ ບາງບັນຫາ. ເອກະສານ ກ່ຽວກັບ ຄຳຖາມທີ່ຖືກຖາມຢ່າງເປັນປະຈຳ ທີ່ໄດ້ຮັບ ຈາກພາກສ່ວນທີ່ກ່ຽວຂ້ອງ ແມ່ນຄະນະກຳມະທິການຂອງ EU ໄດ້ຕອບໄປສ່ວນຫຼາຍແລ້ວ ແລະ ຈະໄດ້ປັບປຸງໄປໃນແຕ່ລະໄລຍະ. ຖ້າມີຄວາມຕ້ອງການ, ຈະໄດ້ຈັດຫາ ເຄື່ອງມືສິ່ງອຳນວຍຄວາມສະດວກມາຊ່ວຍ.
ໝາຍເຫດ: ບໍ່ມີບົດແນະນຳເພີ່ມຕື່ມ ທີ່ຈຳເປັນ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມ ບັນດາຫຼັກການ. ຄະນະກຳມະທິການຂອງ EU ມີເປົ້າໝາຍເພື່ອຊີ້ແຈງ ບາງດ້ານສະເພາະ ເພື່ອອະທິບາຍ ໃນການຈັດຕັ້ງປະຕິບັດລະບຽບການນີ້ ຕົວຈິງແນວໃດ ແລະ ແລກປ່ຽນ ຕົວຢ່າງ ພາກປະຕິບັດຕົວຈິງທີ່ດີທີ່ສຸດ ແລະ ອື່ນໆ.

### (82) ຄະນະກຳມະທິການຂອງ EU ຈະອອກບັນດາບົດແນະນຳ ສຳລັບແຕ່ລະສິນຄ້າສະເພາະບໍ່?

ບໍ່ໄດ້ອອກ. ແຕ່ຢ່າງໃດກໍ່ຕາມ, ຄະນະກຳມະທິການຂອງ EU ມີຈຸດປະສົງ ສະເໜີ ຕົວຢ່າງ ພາກປະຕິບັດທີ່ດີທີ່ສຸດ ໃນອານາຄົດລວມທັງ ເອກະສານບົດແນະນຳ ເຊິ່ງຈະກວມເອົາບາງສິນຄ້າ ສະເພາະດ້ານ.

### (83) ພັນທະໃນການລາຍງານ ສຳລັບ ຜູ້ປະກອບການ ມີຫັຍງແດ່?

**ຜູ້ປະກອບການ ທີ່ບໍ່ແມ່ນ SMEs ຈະໄດ້ລາຍງານ ປະຈຳປີ ຂອງຕົນ ໃຫ້ສັງຄົມຊາບ ກ່ຽວກັບ ລະບົບການລາຍງານ ການປະເມີນຄວາມຖືກຕ້ອງຂອງສິນຄ້າ. ສຳລັບ ບັນດາຜູ້ປະກອບການເຫຼົ່ານີ້ ເຊິ່ງຢູ່ໃນຂອບເຂດ ຂອງຄຳສັ່ງ ວ່າດ້ວຍ ການລາຍງານຄວາມຍືນຍົງຂອງບໍລິສັດ (Corporate Sustainability Reporting Directive- CSRD) ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງ ກັບ ມາດຕະຖານການລາຍງານແບບຍືນຍົງຂອງ EU (EU Sustainability Reporting Standards - ESRS) ໃນເວລາທີ່ໄດ້ກຳນົດ, ອັນນີ້ ມີຄວາມພຽງພໍແລ້ວບໍ່ ເພື່ອເຜີຍແຜ່ບົດລາຍງານຂອງເຂົາເຈົ້າ ອີງຕາມຂໍ້ກຳນົດຂອງ CSRD? ຫຼື ຈະມີຂໍ້ກຳນົດ ລາຍງານເພີ່ມຕື່ມບໍ່?**

ລະບຽບການນີ້ ໄດ້ກຳນົດວ່າ ໃນເມື່ອ ກ່ຽວຂ້ອງກັບ ພັນທະໃນການລາຍງານ, ຜູ້ປະກອບການ ກໍ່ມີພັນທະ ກ່ຽວຂ້ອງກັບ ນິຕິກຳ ອື່ນ ຂອງ EU ທີ່ໄດ້ອາງ ຂໍ້ກຳນົດ ກ່ຽວກັບ ການປະເມີນ ຄວາມຖືກຕ້ອງຂອງ ຕ່ອງໂສ້ມູນຄ່າ ຂອງສິນຄ້າ ເຊິ່ງອາດຈະຕອບສະ ໜອງຕາມ ພັນທະການລາຍງານຂອງເຂົາເຈົ້າ ພາຍໃຕ້ລະບຽບການນີ້ ໂດຍລວມມີຂໍ້ມູນທີ່ຕ້ອງການ ໃນເມື່ອ ມີການລາຍງານ ຕາມ ສະພາບການ ຂອງນິຕິກຳອື່ນຂອງ EU (ມາດຕາ 12.3).

### (84) ການສັງເກດພື້ນທີ່ປ່າໄມ້ ຂອງ EU ໃນການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ແມ່ນຫັຍງ?

ການສັງເກດພື້ນທີ່ປ່າໄມ້ ຈະໄດ້ສ້າງໂດຍອີງໃສ່ ເຄື່ອງມືການຕິດຕາມກວດກາທີ່ມີໃນປະຈຸບັນ, ລວມທັງ ເຄື່ອງມື ການສັງເກດ ການພື້ນທີ່ປ່າໄມ້ຂອງໂລກ ແລະ ແຫຼ່ງຂໍ້ມູນອື່ນໆທີ່ມີ ຂອງພາກລັດ ແລະ ພາກເອກະຊົນ ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດ ລະບຽບການນີ້ ໂດຍສະໜອງ ຫຼັກຖານທາງວິທະຍາສາດ ລວມທັງ ແຜນທີ່ທີ່ດິນ ໃນວັນທີ ອ້າງອີງພື້ນທີ່ປ່າໄມ້ ເພື່ອພິສູດຫຼັກ ຖານ ກ່ຽວກັບ ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ໃນທົ່ວໂລກ ແລະ ການຄ້າ ທີ່ກ່ຽວຂ້ອງ. ການນຳໃຊ້ ແຜນທີ່ອັນນີ້ ຈະບໍ່ຮັບປະກັນແບບອັດຕະໂນມັດ ວ່າບັນດາເງື່ອນໃນລະບຽບການນີ້ ແມ່ນຖືກຕ້ອງ, ແຕ່ຈະເປັນເຄື່ອງມືອັນໜຶ່ງ ເພື່ອຊ່ວຍບັນດາບໍລິສັດ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມລະບຽບການນີ້. ຕົວຢ່າງ ເພື່ອ ປະເມີນ ຄວາມສ່ຽງຂອງການທຳລາຍປ່າໄມ້. ບັນດາບໍລິສັດ ຈະມີພັນທະໃນການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

ການສັງເກດພື້ນທີ່ປ່າໄມ້ ຂອງ EU ກ່ຽວກັບ ການທຳລາຍປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້ ຈະກວມເອົາທຸກປະເພດ ປ່າໄມ້ ໃນທົ່ວໂລກ, ລວມທັງປ່າໄມ້ຂອງສະຫະພາບເອີຣົບ ແລະ ຈະໄດ້ສ້າງໃຫ້ຖືກຕ້ອງສອດຄ່ອງກັບ ການພັດທະນາ ນະໂຍບາຍ ຂອງ EU ທີ່ກຳລັງດຳເນີນຢູ່ ເຊັ່ນ: ກົດໝາຍ ວ່າດ້ວຍ ການຕິດຕາມກວດກາປ່າໄມ້ ແລະ ການປັບປຸງ ແລະ ການສົ່ງເສີມ ລະບົບ ຂໍ້ມູນປ່າໄມ້ ສຳລັບ ສະຫະພາບເອີຣົບ (FISE).

ຈຸດປະສົງຕົ້ນຕໍ ຂອງແຜນທີ່ອ້າງອີງ ທີ່ຜະລິດໂດຍ ການສັງເກດພື້ນທີ່ປ່າໄມ້ ຂອງ EU ແມ່ນຈະເປັນຂໍ້ມູນ ເພື່ອໃຫ້ ຜູ້ປະກອບ ການ/ ຜູ້ຄ້າຂາຍສິນຄ້າ ແລະ ອົງການຈັດຕັ້ງທີ່ຮັບຜິດຊອບຂອງປະເທດສະມາຊິກ ຂອງ EU ໃນການປະເມີນຄວາມສ່ຽງ. ດັ່ງນັ້ນ, ແຜນທີ່ອ້າງອີງຈະມີບາງລັກສະນະດັ່ງລຸ່ມນີ້:

**ບໍ່ມີຂໍ້ບັງຄັບ ນຳໃຊ້.** ຈະບໍ່ມີພັນທະ ບັງຄັບໃຫ້ ປະກອບການ/ ຜູ້ຄ້າຂາຍສິນຄ້າ (ຫຼື ອົງການຈັດຕັ້ງທີ່ຮັບຜິດຊອບຂອງປະເທດ ສະມາຊິກ ຂອງ EU) ເພື່ອນຳໃຊ້ ແຜນທີ່ອ້າງອີງ ການສັງເກດພື້ນທີ່ປ່າໄມ້ຂອງ EU ເພື່ອເປັນຂໍ້ມູນ ໃຫ້ເຂົາເຈົ້າປະເມີນຄວາມ ສ່ຽງ.

**ຈະບໍ່ໄດ້ຜູກຂາດ ໃນການນຳໃຊ້.** ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ (ລວມທັງ ອົງການຈັດຕັ້ງທີ່ຮັບຜິດຊອບຂອງປະເທດ ສະມາຊິກ ຂອງ EU) ອາດຈະນຳໃຊ້ແຜນທີ່ອື່ນ ເຊິ່ງສາມາດ ໃຫ້ລາຍລະອຽດ ຫຼື ຄວາມລະອຽດ ກ່ວາ ແຜນທີ່ການສັງເກດພື້ນທີ່ ປ່າໄມ້ຂອງ EU. ລະບຽບການນີ້ ບໍ່ໄດ້ ອະທິບາຍ ເຖິງຮູບແບບ ໃນການໃຫ້ຂໍ້ມູນ ເພື່ອປະເມີນຄວາມສ່ຽງ. ການສັງເກດພື້ນທີ່

ປ່າໄມ້ ແມ່ນໜຶ່ງໃນ ເຄື່ອງມື ທີ່ຈະສະໜອງໃຫ້ ແລະ ຈະເປັນເຄື່ອງມື ເຊິ່ງ ຄະນະກຳມະທິການຂອງ EU ຈະຕອບສະໜອງໃຫ້ ໂດຍບໍ່ມີຄ່າໃຊ້ຈ່າຍ.

**ບໍ່ຂໍ້ຜູກມັດທາງດ້ານກົດໝາຍ.** ສະນັ້ນ, ບັນດາແຜນທີ່ອ້າງອີງ ອາດສະໜອງໃຫ້ໂດຍ ການສັງເກດພື້ນທີ່ປ່າໄມ້ຂອງ EU ເຊິ່ງອາດ ຈະນຳໃຊ້ ເພື່ອປະເມີນຄວາມສ່ຽງ. ແຕ່ເຖິງຢ່າງໃດກໍ່ຕາມ, ຄວາມຈິງແລ້ວ ພື້ນທີ່ທີ່ຕັ້ງຂອງສິນຄ້າ ຕົກຢູ່ພາຍໃນພື້ນທີ່ ທີ່ເປັນ ປ່າໄມ້ ບໍ່ໄດ້ ອາຕະໂນມັດ ນຳໄປສູ່ ການສະຫຼຸບວ່າ ບໍ່ຖືກຕ້ອງ. ໃນທາງກົງກັນຂ້າມ, ບໍ່ຕ້ອງສົມມຸດຖານວ່າ ຖ້າພື້ນທີ່ທີ່ຕັ້ງຂອງ ສິນຄ້າ ຕົກຢູ່ນອກ ພື້ນທີ່ ທີ່ພິຈາລະນາເປັນປ່າໄມ້, ການສິນສິ່ງ/ສິນຄ້າຈະບໍ່ຖືກກວດກາ (ອາດຈະສາມາດສຸ່ມກວດ ແລະ ອາດຈະ ເປັນປັດໃຈຄວາມສ່ຽງອື່ນໆ) ຫຼື ສິນຄ້າເຫຼົ່ານີ້ ຈະອາຕະໂນມັດ ຈັດຕັ້ງປະຕິບັດທີ່ຖືກຕ້ອງ (ກ່ອນອື່ນໝົດ, ຍ້ອນຂາດຄວາມຊັດ ເຈນ 100%, ແລະ ຄັ້ງທີ່ ສອງ, ເພາະວ່າ ຜະລິດຕະພັນ ສິນຄ້າທີ່ ປາສະຈາກການທຳລາຍປ່າໄມ້ ສາມາດເປັນ ສິນຄ້າທີ່ຜິດກົດ ໝາຍ)

## (85) ຄວາມສ່ຽງຫຼາຍ ປະກອບມີຫັຍງແດ່, ແລະ ຈະໃຊ້ເວລາດົນປານໃດ ຈຶ່ງສາມາດຍົກເລີກໄດ້?

**ມາດຕາ 17 ອະນຸຍາດ ໃຫ້ອົງການຈັດຕັ້ງທີ່ຮັບຜິດຊອບ ເພື່ອດຳເນີນມາດຕະການທັນທີ – ລວມທັງຍົກເລີກ - ໃນເງື່ອນໄຂ ເຊິ່ງ ມີຄວາມສ່ຽງຫຼາຍ ທີ່ບໍ່ຖືກຕ້ອງສອດຄ່ອງ ຕາມລະບຽບການ. ຄວາມສ່ຽງຫຼາຍ ປະກອບມີຫັຍງແດ່, ແລະ ຈະໃຊ້ເວລາດົນ ປານໃດ ຈຶ່ງສາມາດຍົກເລີກໄດ້?**

ອົງການຈັດຕັ້ງທີ່ຮັບຜິດຊອບ ອາດຈະກຳນົດ ເງື່ອນໄຂ ໃນເມື່ອ ຜະລິດຕະພັນທີ່ກ່ຽວຂ້ອງ ມີຄວາມສ່ຽງຫຼາຍ ທີ່ປະຕິບັດບໍ່ ຖືກຕ້ອງສອດຄ່ອງ ກັບ ຂໍ້ກຳນົດຂອງລະບຽບການນີ້ ກ່ຽວກັບ ພື້ນຖານສະພາບການທີ່ແຕກຕ່າງກັນ ລວມທັງການສຸ່ມກວດກາ, ຜົນໄດ້ຮັບຂອງການວິເຄາະຄວາມສ່ຽງ ໃນແຜນປະເມີນຄວາມສ່ຽງຂອງເຂົາເຈົ້າ ຫຼື ຄວາມສ່ຽງທີ່ ກຳນົດໃນລະບົບຖານຂໍ້ມູນ ຫຼື ຂໍ້ມູນພື້ນຖານທີ່ມາຈາກ ອົງການຈັດຕັ້ງທີ່ຮັບຜິດຊອບອື່ນໆ, ຄວາມເປັນຫ່ວງທີ່ແທ້ຈິງ ແລະ ອື່ນໆ. ໃນກໍລະນີນີ້, ບັນດາອົງ ການຈັດຕັ້ງທີ່ຮັບຜິດຊອບ ສາມາດສະເໜີ ມາດຕະການຊົ່ວຄາວ ທີ່ໄດ້ກຳນົດໄວ້ ໃນມາດຕາ 23, ລວມທັງການຍົກເລີກ ການຈຳ ໜ່າຍ ຫຼື ຂາຍ ຜະລິດຕະພັນ ໃນຕະຫຼາດ. ການຍົກເລີກນີ້ ສາມາດສິ້ນສຸດພາຍໃນ ສາມວັນລັດຖະການ ຫຼື 72 ຊົ່ວໂມງ ໃນ ກໍລະນີເປັນ ຜະລິດຕະພັນທີ່ເນົ່າເປື່ອຍງ່າຍ. ແຕ່ຢ່າງໃດກໍ່ຕາມ, ອົງການຈັດຕັ້ງທີ່ຮັບຜິດຊອບ ສາມາດສະຫຼຸບ ອີງໃສ່ຜົນຂອງການ ກວດກາ ໃນໄລຍະເວລານັ້ນ ເຊິ່ງການຍົກເລີກ ສາມາດຕໍ່ ເປັນໄລຍະເວລາເພີ່ມຕື່ມ ເປັນເວລາສາມວັນ ເພື່ອປັບປຸງ ຖ້າຜະລິດຕະ ພັນ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງ ຕາມລະບຽບການນີ້.

## (86) ລະບຽບການນີ້ ມີຄວາມເຊື່ອມໂຍງແນວໃດກັບ ຄຳສັ່ງ ວ່າດ້ວຍ ພະລັງງານທົດແທນ ຂອງ EU?

ຈຸດປະສົງຂອງລະບຽບການ ວ່າດ້ວຍ ສິນຄ້າ ທີ່ປາສະຈາກການທຳລາຍປ່າໄມ້ ແລະ ຄຳສັ່ງ ວ່າດ້ວຍ ພະລັງງານທົດແທນ ຂອງ EU ແມ່ນ ຕື່ມເຕັມເຊິ່ງກັນ ແລະ ກັນ ເຊິ່ງທັງສອງນິຕິກຳ ແມ່ນມີຈຸດປະສົງລວມ ໃນການຕ້ານ ການປ່ຽນແປງດິນຟ້າອາກາດ

ແລະ ການສູນເສຍຊີວະນາໆພັນ. ສິນຄ້າ ແລະ ຜະລິດຕະພັນ ທີ່ຕົກຢູ່ພາຍໃນ ຂອບເຂດຂອງສອງນິຕິກໍາ ຈະກ່ຽວຂ້ອງກັບ ຂໍ້ກໍານົດ ສໍາລັບ ການເຂົ້າເຖິງຕະຫຼາດທົ່ວໄປ ພາຍໃຕ້ EUDR ແລະ ກ່ຽວຂ້ອງກັບ ພະລັງງານທົດແທນ ພາຍໃຕ້ ຄໍາສັ່ງ ວ່າດ້ວຍ ພະລັງງານທົດແທນ. ບັນດາຂໍ້ກໍານົດອັນນີ້ ແມ່ນສາມາດເຂົ້າກັນໄດ້ ແລະ ຈັດຕັ້ງປະຕິບັດຮ່ວມກັນໄດ້. ໃນກໍລະນີພິເສດ ກ່ຽວກັບ ລະບົບການຢັ້ງຢືນ ສໍາລັບ ການປ່ຽນແປງການນໍາໃຊ້ທີ່ດິນທາງອ້ອມທີ່ນ້ອຍ (ILUC) ອີງໃສ່ ລະບຽບການຂອງ EU ເລກທີ 2019/807 ເພີ່ມຕື່ມໃສ່ ຄໍາສັ່ງ ຂອງ EU ເລກທີ 2018/2001, ຜູ້ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ອາດຈະນໍາໃຊ້ ລະບົບການກວດກາຢັ້ງຢືນຄວາມຖືກຕ້ອງນີ້ ຢູ່ໃນລະບົບ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ ຂອງເຂົາເຈົ້າ ເພື່ອເກັບຂໍ້ມູນທີ່ຕ້ອງການຂອງ EUDR ເພື່ອໃຫ້ບັນລຸ ຂໍ້ກໍານົດ ໃນການຕິດຕາມແຫຼ່ງທີ່ມາ ແລະ ຂໍ້ມູນ ຂອງສິນຄ້າ ຕາມທີ່ໄດ້ກໍານົດໃນມາດຕາ 9. ລວມທັງ ລະບົບການກວດກາຢັ້ງຢືນຄວາມຖືກຕ້ອງອື່ນໆ, ການນໍາໃຊ້ຂອງເຂົາເຈົ້າ ແມ່ນບໍ່ໃຫ້ ມີການລໍາອຽງ ຕໍ່ຄວາມຮັບຜິດຊອບ ທາງດ້ານກົດໝາຍ ແລະ ພັນທະພາຍໃຕ້ EUDR ສໍາລັບ ປະກອບການ ແລະ ຜູ້ຄ້າຂາຍສິນຄ້າ ເພື່ອດໍາເນີນ ການປະເມີນ ຄວາມຖືກຕ້ອງຂອງສິນຄ້າ.

*ຄໍາຖາມທີ່ຖືກຖາມເປັນປະຈໍານີ້ ໄດ້ແປເປັນພາສາລາວ ຢ່າງບໍ່ເປັນທາງການ ເຊິ່ງບໍ່ໄດ້ຮັບອະນຸຍາດ ຈາກສະຫະພາບເອີຣົບ (EU) ຫຼື ລັດຖະບານ ສະຫະພັນເຢຍລະມັນ. ຄໍາຖາມທີ່ຖືກຖາມເປັນປະຈໍານີ້ ປະກອບມີແນວຄວາມຄິດ ແລະ ການປະເມີນ ຕໍ່ລະບຽບການ ແບບບໍ່ເປັນທາງການ, ເຊິ່ງປະກອບມີ ຫຼື ອາດຈະບໍ່ສອດຄ່ອງກັບທັດສະນະ ຂອງ EU ຫຼື ລັດຖະບານ ສະຫະພັນເຢຍລະມັນ. ຄໍາຖາມທີ່ຖືກຖາມເປັນປະຈໍານີ້ ບໍ່ສາມາດປ່ຽນແທນ ການປະເມີນ ທາງດ້ານນິຕິກໍາຂອງທ່ານ ແລະ ບໍ່ມີຄວາມຕັ້ງໃຈ ເປັນການແນະນໍາ ໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ໄດ້ລວບລວມ ໂດຍອີງໃສ່ການປະເມີນທາງດ້ານວິຊາການ ຂອງອົງການ GIZ/INA ເພື່ອອໍານວຍຄວາມສະດວກ ໃນການປຶກສາຫາລື.*